ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຈົດຫມາຍເຫດ
# ທາງລັດຖະການ

ປີທີ: 6 ວັນທີ: 25 ກຸມພາ 1998 ເລກທີ: 1

LAO PEOPLE'S DEMOCRATIC REPUBLIC
PEACE INDEPENDENCE DEMOCRACY UNITY PROSPERITY

RÉPUBLIQUE DÉMOCRATIQUE POPULAIRE LAO
PAIX INDÉPENDANCE DÉMOCRATIE UNITÉ PROSPÉRITÉ

**OFFICIAL GAZETTE**

6th YEAR DATE: February 25, 1998 NUMBER: 1

**JOURNAL OFFICIEL**

AN: 6 DATE: 25 febrier 1998 NUMÉRO: 1

*ບົດຄຳເຫັນຂອງທ່ານລັດຖະມົນຕີວ່າການກະຊວງຍຸຕິທຳ*
*ກ່ຽວກັບຄວາມສຳຄັນຂອງຈົດໝາຍເຫດທາງລັດຖະການ*

ຮຽນບັນດາທ່ານຜູ້ອ່ານທີ່ເຄົາລົບ ແລະນັບຖື,

ຕາມຄຳຕົກລົງເຫັນດີຂອງລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ກະຊວງຍຸຕິທຳໄດ້ຈັດພິມຈົດໝາຍເຫດທາງລັດຖະການ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປະຖົມມະລຶກອອກຈຳໜ່າຍໃນເດືອນ ເມສາ 1993 ນີ້.

ຈົດໝາຍເຫດດັ່ງກ່າວ ຈັດພິມເປັນພາສາລາວ ແລະແປເປັນພາສາອັງກິດ ແລະຝຣັ່ງ ທັງນີ້ກໍ່ເພື່ອໃຫ້ຊາວຕ່າງປະເທດ ຮູ້ວ່າລັດຂອງພວກເຮົາ ມີການຄຸ້ມຄອງສັງຄົມດ້ວຍກົດໝາຍ ແລະເປັນການດຶງດູດໃຫ້ພວກເຂົາເຈົ້າ ມາລົງທຶນຢູ່ ສປປ ລາວ. ກໍລະນີມີການຂັດກັນດ້ານຕີຄວາມໝາຍ ໃຫ້ຖືເອົາພາສາລາວເປັນຫລັກ.

ຈົດໝາຍທາງລັດຖະການ ມີຄວາມແຕກຕ່າງກັບ ໜັງສືພິມປະຈຳວັນ ແລະວາລະສານອື່ນໆ ເພາະຈົດໝາຍເຫດດັ່ງກ່າວ ຈັດພິມເນື້ອໃນກົດໝາຍ, ຂໍ້ກຳນົດຕ່າງໆ ແລະນິຕິກຳທີ່ມີຄວາມສຳຄັນ ຂອງປະທານສະພາແຫ່ງຊາດ, ປະທານປະເທດ, ນາຍົກລັດຖະມົນຕີ (ມະຕິຕົກລົງຂອງລັດຖະບານ), ລັດຖະມົນຕີວ່າການກະຊວງ ແລະຂອງປະທານຄະນະກຳມະການທຽບເທົ່າກະຊວງ, ເພື່ອເຮັດໃຫ້ກົດໝາຍ ແລະຂໍ້ກຳນົດຕ່າງໆ ມີການລວມສູນ, ສະດວກໃນການຄົ້ນຄ້ວາ ແລະນຳໃຊ້, ສະດວກໃນການກວດກາ ແລະຄຸ້ມຄອງກົດໝາຍ ແລະຂໍ້ກຳນົດຕ່າງໆ. ຈົດໝາຍເຫດທາງລັດຖະການ ຈັດພິມເປັນສະບັບທຳມະດາ ແລະສະບັບພິເສດ ແມ່ນຂຶ້ນກັບບໍລິມາດຂອງກົດໝາຍ ແລະຄວາມຮຽກຮ້ອງຕ້ອງການອັນຮີບດ່ວນຂອງວຽກງານ ຫລືລວບລວມຄືນ ບັນດາກົດໝາຍ ແລະຂໍ້ກຳນົດທີ່ສຳຄັນ ຊຶ່ງອອກແຕ່ປີ 1975-1992.

ຈົດໝາຍເຫດທາງລັດຖະການ ຈຳນວນໜຶ່ງຈະຂາຍ ແລະຈຳນວນໜຶ່ງຈະແຈກຢາຍໃຫ້ລ້າ.

ຈົດໝາຍເຫດທາງລັດຖະການເປັນຄູ່ມືໃນການເຄື່ອນໄຫວວຽກງານ ທັງເປັນເອກະສານປະຫວັດສາດຂອງ ສປປ ລາວ ຊຶ່ງຈະຕ້ອງຮັກສາໄວ້ຢ່າງຍາວນານ. ດັ່ງນັ້ນ ຂໍໃຫ້ທ່ານຜູ້ອ່ານ ຈົ່ງຮັກສາໄວ້ທຸກໆສະບັບ. ທຸກໆທ້າຍປີຂະແໜງການທີ່ກ່ຽວຂ້ອງ ລວມທັງບຸກຄົນທີ່ສັ່ງຈອງ ອາດຈະຫຍິບເປັນປຶ້ມປົກແຂງ ແລ້ວນຳເຂົ້າຫໍສະມຸດສ່ວນລວມ ຫລືຕູ້ເອກະສານສ່ວນຕົວ.

ຈົດໝາຍເຫດທາງລັດຖະການຂອງ ສປປ ລາວ ສະບັບປະຖົມມະລຶກ ແມ່ນຜົນງານອັນໃໝ່ ຂອງລັດ ສປປ ລາວ ແລະທຶນລິເລີ່ມສ້າງຈົດໝາຍເຫດທາງລັດຖະການນີ້ ແມ່ນໄດ້ຮັບການຊ່ວຍເຫລືອລ້າ ລວມທັງຄວາມຮ່ວມມືທາງດ້ານເຕັກນິກ ຈາກອົງການສາກົນ ແຫ່ງປະເທດຊູແອດເພື່ອການພັດທະນາ (SIDA). ນອກນັ້ນ ກໍ່ໄດ້ມີການປະກອບສ່ວນຈາກ ປະເທດຝຣັ່ງ (ສະຖານທູດຝຣັ່ງປະຈຳ ສປປ ລາວ) ສຳລັບການແປເປັນພາສາຝຣັ່ງເສດ.

ສະນັ້ນ ຈຶ່ງສະເໜີໃຫ້ບັນດາທ່ານຜູ້ອ່ານ ໄດ້ຊ່ວຍຕຳນິຕິຊົມ ເພື່ອປັບປຸງໃຫ້ດີຂຶ້ນຕື່ມ.

ນະຄອນວຽງຈັນ, ວັນທີ 20 ເມສາ 1993

ຄຳອ້ວນ ບຸບຜາ
ລັດຖະມົນຕີວ່າການກະຊວງຍຸຕິທຳ

# ສະພາຊຸດທີ 3

## ສາລະບານ


ພາກສ່ວນທາງລັດຖະການ

ໜ້າ

ສະພາແຫ່ງຊາດ

ມະຕິຕົກລົງເລກທີ 01-97/ສພຊ ລົງວັນທີ 12 ເມສາ 1997 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍທີ່ດິນ......................4

ມະຕິຕົກລົງເລກທີ 04 -97/ສພຊ ລົງວັນທີ 12 ເມສາ 1997 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍບໍ່ແຮ່ ......................4

ກົດໝາຍ ເລກທີ 01/97/ສພຊ ລົງວັນທີ 12 ເມສາ 1997ວ່າດ້ວຍທີ່ດິນ...............................4

ກົດໝາຍເລກທີ 04/97/ສພຊ ລົງວັນທີ 12 ເມສາ 1997 ວ່າດ້ວຍບໍ່ແຮ່..............................14

ມະຕິຕົກລົງເລກທີ 04 /ສພຊ ລົງວັນທີ 22 ຕຸລາ 1997 ວ່າດ້ວຍການຕົກລົງໃຫ້ສັດຕະຍາບັນ.........21

ປະທານປະເທດ

ລັດຖະບັນຍັດເລກທີ 03 ສປປ ລົງວັນທີ 20 ມິຖຸນາ 1997 ວ່າດ້ວຍການອະນຸລັກມໍຣະດົກ ແຫ່ງຊາດທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ..........22

ລັດຖະດຳລັດເລກທີ 33 ສປປ ລົງວັນທີ 31 ພຶດສະພາ 1997 ກ່ຽວກັບການປະກາດ ໃຊ້ກົດໝາຍວ່າດ້ວຍທີ່ດິນ.......................25

ລັດຖະດຳລັດເລກທີ 36 ສປປ ລົງວັນທີ 31 ພຶດສະພາ 1997ກ່ຽວກັບການປະກາດ ໃຊ້ກົດໝາຍວ່າດ້ວຍບໍ່ແຮ່........................26

ລັດຖະດຳລັດ ເລກທີ 52 ສປປ ລົງວັນທີ 19 ກັນຍາ 1997 ວ່າດ້ວຍການແຕ່ງຕັ້ງເຈົ້າແຂວງຜົ້ງສາລີ................................26

ລັດຖະດຳລັດເລກທີ 56 ສປປ ລົງວັນທີ 25 ຕຸລາ 1997ວ່າດ້ວຍການແຕ່ງຕັ້ງເອກອັກຄະລັດຖະທູດ ວິສາມັນຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວປະຈຳລາຊະອານາຈັກໄທ..................................26

ລັດຖະດຳລັດເລກທີ 57 ສປປ ລົງວັນທີ 25 ຕຸລາ 1997ວ່າດ້ວຍການແຕ່ງຕັ້ງ ເອກອັກຄະລັດຖະທູດ ວິສາມັນ ຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຈຳ ສະຫະລັດ ອາເມລິກາ..........................27

ລັດຖະດຳລັດເລກທີ 60 ສປປ ລົງວັນທີ 5 ພະຈິກ 1997 ວ່າດ້ວຍການປະດັບຫລຽນໄຊມິດຕະພາບ.............................27

ລັດຖະດຳລັດເລກທີ 66 ສປປ ລົງວັນທີ 16 ທັນວາ 1997 ວ່າດ້ວຍການປະດັບຫລຽນໄຊມິດຕະພາບ.............................27

ລັດຖະດຳລັດເລກທີ 67 ສປປ ລົງວັນທີ 25 ທັນວາ 1997ວ່າດ້ວຍການຍ້ອງຍໍສັນລະເສີນຜົນງານ 30 ປີ ແລະ 10 ປີໃຫ້ບັນດາພະນັກງານກຳແພງນະຄອນວຽງຈັນ ຊຸດທີ III...............................28

ປະກາດໃຫ້ສັດຕະຍະບັນແກ່ສັນຍາ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະລັດຖະບານແຫ່ງຣາຊະອານາຈັກໄທ ເພື່ອຫລີກເວັ້ນ ການເກັບອາກອນຊ້ຳຊ້ອນ ແລະສະກັດກັ້ນ ການຫລົບຫລີກເສັຽອາກອນ ຈາກການເກັບອາກອນລາຍໄດ້ ເຊັ່ງລົງນາມ ໃນວັນທີ 20 ມິຖຸນາ 1997 .........28

ນາຍົກລັດຖະມົນຕີ

ສຳນັກງານນາຍົກລັດຖະມົນຕີ

ດຳລັດເລກທີ 166 /ນຍ ລົງວັນທີ 28 ພະຈິກ 1997 ວ່າດ້ວຍ ການຈັດຕັ້ງຕາໜ່າງ, ການນຳເຂົ້າ, ການນຳໃຊ້ ແລະ ການຄຸ້ມຄອງ ລະບົບອິນເຕີແນັດ.......................29

ກະຊວງປ້ອງກັນປະເທດ

ກະຊວງພາຍໃນ

ກະຊວງການຕ່າງປະເທດ

ກະຊວງຍຸຕິທຳ

ຄະນະກຳມະການແຜນການ ແລະການຮ່ວມມື

ກະຊວງການເງິນ

ກະຊວງກະສິກຳ-ປ່າໄມ້

ກະຊວງຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະກໍ່ສ້າງ

ກະຊວງອຸດສາຫະກຳ-ຫັດຖະກຳ

ກະຊວງການຄ້າ

ທະນາຄານ ແຫ່ງ ສປປ ລາວ

ກະຊວງຖະແຫລງຂ່າວ ແລະວັດທະນະທຳ

ກະຊວງແຮງງານ ແລະສະຫວັດດີການ-ສັງຄົມ

ກະຊວງສຶກສາ

ກະຊວງສາທາລະນະສຸກ

ພາກສ່ວນທີ່ບໍ່ເປັນທາງລັດຖະການ

**ສະພາແຫ່ງຊາດ**

### ມະຕິຕົກລົງ
### ເລກທີ 01-97/ສພຊ
### ກ່ຽວກັບການຕົກລົງຮັບຮອງ
### ເອົາກົດຫມາຍວ່າດ້ວຍທີ່ດິນ

- ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 2 ຂໍ້ 2 ຂອງກົດຫມາຍວ່າດ້ວຍສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມ ການສະເຫນີ ຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 050/ຫສນຍ ລົງວັນທີ 27 ມີນາ 1997;

ພາຍຫລັງໄດ້ຄົ້ນຄ້ວາພິຈາລະນາຢ່າງກວ້າງຂວາງ ແລະເລິກເຊິ່ງ ກ່ຽວກັບເນື້ອໃນກົດຫມາຍ ວ່າດ້ວຍທີ່ດິນ ກອງປະຊຸມເທື່ອທີ 10 ສະໄຫມສາມັນ ຂອງສະພາແຫ່ງຊາດ ຊຸດທີ III ໃນວາລະປະຊຸມຕອນບ່າຍ ຂອງວັນທີ 12 ເມສາ 1997.

ຕົກລົງ :

ມາດຕາ 1 : ຮັບຮອງກົດຫມາຍວ່າດ້ວຍທີ່ດິນ ດ້ວຍຄະແນນສຽງຢ່າງເປັນເອກະສັນ.

ມາດຕາ 2 : ມະຕິຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 12 ເມສາ 1997
ປະທານສະພາແຫ່ງຊາດ
ສະຫມານ ວິຍະເກດ

---

### ມະຕິຕົກລົງ
### ເລກທີ 04-97/ສພຊ
### ກ່ຽວກັບການຕົກລົງຮັບຮອງ
### ເອົາກົດຫມາຍວ່າດ້ວຍບໍ່ແຮ່

- ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 2 ຂໍ້ 2 ຂອງກົດຫມາຍວ່າດ້ວຍສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມ ການສະເຫນີ ຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 050/ຫສນຍ ລົງວັນທີ 27 ມີນາ 1997;

ພາຍຫລັງໄດ້ຄົ້ນຄ້ວາພິຈາລະນາຢ່າງກວ້າງຂວາງ ແລະເລິກເຊິ່ງ ກ່ຽວກັບເນື້ອໃນກົດຫມາຍ ວ່າດ້ວຍບໍ່ແຮ່ ກອງປະຊຸມເທື່ອທີ 10 ສະໄຫມສາມັນ ຂອງສະພາແຫ່ງຊາດ ຊຸດທີ III ໃນວາລະປະຊຸມຕອນບ່າຍ ຂອງວັນທີ 12 ເມສາ 1997.

ຕົກລົງ :

ມາດຕາ 1 : ຮັບຮອງກົດຫມາຍວ່າດ້ວຍບໍ່ແຮ່ ດ້ວຍຄະແນນສຽງຢ່າງເປັນເອກະສັນ.

ມາດຕາ 2 : ມະຕິຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 12 ເມສາ 1997
ປະທານສະພາແຫ່ງຊາດ
ສະຫມານ ວິຍະເກດ

---

## ກົດໝາຍ
## ເລກທີ 01/97/ສພຊ
## ວ່າດ້ວຍທີ່ດິນ

### ພາກທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 : ໜ້າທີ່ຂອງກົດໝາຍວ່າດ້ວຍທີ່ດິນ**

ໜ້າທີ່ຂອງກົດໝາຍວ່າດ້ວຍທີ່ດິນ ແມ່ນກຳນົດລະບົບການຄຸ້ມຄອງ, ການປົກປັກຮັກສາ ແລະ ການນຳໃຊ້ທີ່ດິນ. ຊຶ່ງເປັນຊັບພະຍາກອນຂອງຊາດ ໃຫ້ມີປະສິດທິຜົນ, ຖືກຕ້ອງຕາມເປົ້າໝາຍ ແລະລະບຽບກົດໝາຍ, ປະກອບສ່ວນ ໃນການເພີ່ມທະວີການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ລວມທັງປົກປັກຮັກສາສິ່ງແວດລ້ອມ ແລະ ເຂດນ້ຳ ແດນດິນຂອງ ສາທາລະນະ ລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 2 : ທີ່ດິນ ແຫ່ງ ສປປ ລາວ.**

ທີ່ດິນແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແມ່ນເນື້ອທີ່ດິນຊຶ່ງນອນຢູ່ໃນເຂດແດນຂອງ ສປປ ລາວ, ປະກອບດ້ວຍໜ້າດິນ, ພື້ນດິນ, ພູຜາ, ເກາະດອນ ລວມທັງດິນພື້ນນ້ຳ, ນ່ານນ້ຳ ແລະ ນ່ານຟ້າ.

ທີ່ດິນແຫ່ງ ສປປ ລາວ ແມ່ນຊັບພະຍາກອນອັນຕົ້ນຕໍຂອງຊາດທີ່ເປັນບ່ອນດຳລົງຊີວິດ ແລະ ທຳມາຫາກິນຂອງພົນລະເມືອງລາວ, ເປັນພາຫະນະອັນສຳຄັນແຫ່ງການຜະລິດ, ການພັດທະນາເສດຖະກິດ-ສັງຄົມ ແລະ ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

**ມາດຕາ 3 : ກຳມະສິດກ່ຽວກັບທີ່ດິນ.**

ທີ່ດິນແຫ່ງ ສປປ ລາວ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງລັດຖະທຳມະນູນ ຊຶ່ງແມ່ນລັດເປັນຜູ້ຄຸ້ມຄອງຢ່າງລວມສູນແລະ ເປັນເອກະພາບໃນທົ່ວປະເທດ ແລະ ມອບໃຫ້ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງ: ການຈັດຕັ້ງເສດຖະກິດ, ກົມກອງປະກອບອາວຸດ, ອົງການຂອງລັດ, ການຈັດຕັ້ງການເມືອງ, ສັງຄົມ ນຳໃຊ້ຢ່າງມີປະສິດທິຜົນ ແລະ ໃຫ້ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດເຊົ່າ.

ບຸກຄົນ ຫລື ການຈັດຕັ້ງຈະເອົາທີ່ດິນເປັນສິນຄ້າຊື້-ຂາຍບໍ່ໄດ້.

ມາດຕາ 4 : ການສົ່ງເສີມ ການພັດທະນາທີ່ດິນ.

ລັດສົ່ງເສີມການພັດທະນາທີ່ດິນ ດ້ວຍການວາງນະໂຍບາຍ, ວິທີການ ແລະ ມາດຕະການ: ການສຶກສາອົບຮົມ ແລະ ການສ້າງຕັ້ງກອງທຶນ ກ່ຽວກັບການຮັກສາ ແລະ ປັບປຸງທີ່ດິນ ໃຫ້ມີຄຸນນະພາບດີ ແລະ ອຸດົມສົມບູນຂຶ້ນເລື້ອຍໆ.

ມາດຕາ 5 : ການປົກປ້ອງສິດຜົນປະໂຫຍດຂອງຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນ.

ລັດປົກປ້ອງສິດຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍຂອງຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນຢ່າງມີປະສິດທິຜົນ, ມີຄວາມສະຫງົບເປັນປົກກະຕິ ແລະ ຢ່າງຍາວນານ ພ້ອມທັງຮັບປະກັນສິດປົກປັກຮັກສາ, ສິດນຳໃຊ້, ສິດໄດ້ຮັບໝາກຜົນ, ສິດໂອນ ແລະ ສິດສືບທອດ.

ມາດຕາ 6 : ການປົກປັກຮັກສາທີ່ດິນ ແລະ ສິ່ງແວດລ້ອມ.

ບຸກຄົນ ແລະ ການຈັດຕັ້ງລ້ວນແຕ່ມີພັນທະໃນການປົກປັກຮັກສາທີ່ດິນ ໃຫ້ຢູ່ໃນສະພາບທີ່ດີ, ບໍ່ໃຫ້ມີການເຊາະເຈື່ອນ, ຍຸບລົງ, ເສື່ອມໂຊມ, ຮັກສາຄຸນນະພາບໃຫ້ເໝາະສົມກັບແຕ່ລະປະເພດທີ່ດິນ, ບໍ່ເຮັດໃຫ້ເນື້ອທີ່ດິນແຕ່ລະປະເພດຫລຸດລົງ ໂດຍບໍ່ໄດ້ຮັບອະນຸຍາດ.

ການນຳໃຊ້ທີ່ດິນບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມທຳມະຊາດ ຫລື ສັງຄົມ.

ມາດຕາ 7 : ການຫ້າມຈັບຈອງທີ່ດິນ.

ການຈັບຈອງທີ່ດິນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ທີ່ໄດ້ເຮັດຂຶ້ນກ່ອນ ຫລື ຫລັງການປະກາດໃຊ້ລັດຖະທຳມະນູນ ລ້ວນແຕ່ຖືກລົບລ້າງ.

ນັບແຕ່ກົດໝາຍສະບັບນີ້ ປະກາດໃຊ້ເປັນຕົ້ນໄປ ບຸກຄົນ ຫລື ການຈັດຕັ້ງໃດໜຶ່ງ ຫາກມີຈຸດປະສົງຢາກນຳໃຊ້ທີ່ດິນ ຕ້ອງໄດ້ຮັບອະນຸຍາດຈາກລັດ.

## ພາກທີ II
## ການຄຸ້ມຄອງທີ່ດິນ ແລະ ການຂຶ້ນທະບຽນທີ່ດິນ

### ໝວດທີ 1
### ການຄຸ້ມຄອງທີ່ດິນ

ມາດຕາ 8 : ການຄຸ້ມຄອງທີ່ດິນ

ລັດຄຸ້ມຄອງທີ່ດິນຢ່າງເປັນເອກະພາບລວມສູນໃນທົ່ວປະເທດ ຊຶ່ງແມ່ນລັດຖະບານເປັນຜູ້ມອບໃຫ້ກະຊວງ ທີ່ກ່ຽວຂ້ອງຄຸ້ມຄອງ: ກະຊວງກະສິກຳ-ປ່າໄມ້, ກະຊວງອຸດສາຫະກຳ-ຫັດຖະກຳ, ກະຊວງຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ, ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ, ກະຊວງປ້ອງກັນປະເທດ, ກະຊວງພາຍໃນ ໂດຍມອບສິດໃຫ້ກະຊວງການເງິນເປັນຜູ້ຄຸ້ມຄອງລວມສູນ ດ້ວຍການຂຶ້ນທະບຽນ, ການອອກໃບຕາດິນ, ການໃຫ້ເຊົ່າຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຄຸ້ມຄອງໂດຍກົງກ່ຽວກັບທີ່ດິນປຸກສ້າງ.

ມາດຕາ 9 : ໜ້າທີ່ໃນການຄຸ້ມຄອງທີ່ດິນ.

ໜ້າທີ່ຕົ້ນຕໍໃນການຄຸ້ມ ຄອງທີ່ດິນ ມີດັ່ງນີ້:

1. ການສຳຫລວດ ແລະ ຈັດສັນທີ່ດິນ;
2. ການຂຶ້ນແຜນທີ່ລວມທີ່ດິນ;
3. ການວັດແທກ ແລະ ການຕີລາຄາຄຸນນະພາບທີ່ດິນ;
4. ການຈັດເຂດທີ່ດິນ;
5. ການຈັດປະເພດທີ່ດິນ;
6. ການຂຶ້ນແຜນແມ່ບົດທີ່ດິນ;
7. ການຂຶ້ນແຜນນຳໃຊ້ທີ່ດິນ;
8. ການກວດຜ່ານແຜນນຳໃຊ້ທີ່ດິນ;
9. ການຂຶ້ນສຳມະໂນທີ່ດິນ ( ສະຖິຕິ) ;
10. ການເຮັດປຶ້ມທະບຽນທີ່ດິນ ;
11. ການກຳນົດມູນຄ່າທີ່ດິນ;
12. ການມອບສິດນຳໃຊ້ທີ່ດິນ;
13. ການອອກໃບຕາດິນ;
14. ການໂອນ, ການໃຫ້ເຊົ່າ;
15. ການກວດກາທີ່ດິນ;
16. ການຖອນ ຫລື ການໂອນເອົາທີ່ດິນຄືນ;
17. ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ.

ມາດຕາ 10 : ການສຳຫລວດ ແລະ ການຈັດສັນທີ່ດິນ.

ລັດຖະບານເປັນຜູ້ຈັດຕັ້ງອົງການສະເພາະ ເພື່ອເຮັດວຽກການສຳຫລວດຈັດສັນທີ່ດິນ, ກວດກາເກັບກຳຂໍ້ມູນກ່ຽວກັບທີ່ດິນ ເພື່ອຈັດແບ່ງເຂດ, ແບ່ງປະເພດທີ່ດິນ ແລະ ສ້າງແຜນທີ່ລວມໃນຂອບເຂດທົ່ວປະເທດ ແລ້ວມອບໃຫ້ຂະແໜງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນຄຸ້ມຄອງ.

ມາດຕາ 11 : ການຈັດແບ່ງເຂດ ແລະ ປະເພດທີ່ດິນ.

ທີ່ດິນໃນຂອບເຂດທົ່ວປະເທດໄດ້ຈັດແບ່ງເປັນເຂດ ແລະ ປະເພດດັ່ງຕໍ່ໄປນີ້:

1. ການຈັດແບ່ງເຂດ:
- ເຂດທົ່ງພຽງຊຶ່ງປະກອບດ້ວຍ:
  + ເຂດຕົວເມືອງ
  + ເຂດຊົນນະບົດ
  + ເຂດເສດຖະກິດສະເພາະ;
- ເຂດພູພຽງຊຶ່ງປະກອບດ້ວຍ:
  + ເຂດຕົວເມືອງ
  + ເຂດຊົນນະບົດ
  + ເຂດເສດຖະກິດສະເພາະ;
- ເຂດພູດອຍຊຶ່ງປະກອບດ້ວຍ:
  + ເຂດຕົວເມືອງ
  + ເຂດຊົນນະບົດ
  + ເຂດເສດຖະກິດສະເພາະ;

2. ການຈັດແບ່ງປະເພດ:
- ທີ່ດິນກະສິກຳ;
- ທີ່ດິນປ່າໄມ້;
- ທີ່ດິນປຸກສ້າງ;
- ທີ່ດິນອຸດສາຫະກຳ;
- ທີ່ດິນຄົມມະນາຄົມ;
- ທີ່ດິນວັດທະນະທຳ;
- ທີ່ດິນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;
- ທີ່ດິນບໍລິເວນນ້ຳ.

ມາດຕາ 12 : ການກຳນົດຂອບເຂດທີ່ດິນແຕ່ລະປະເພດ

ລັດຖະບານເປັນຜູ້ຈັດສັນ ແລະ ຈັດແບ່ງຂອບເຂດທີ່ດິນແຕ່ລະປະເພດ ໃນຂອບເຂດທົ່ວປະເທດ ແລ້ວນຳສະເໜີຕໍ່ສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງເອົາ.

ອຳນາດການປົກຄອງທ້ອງຖິ່ນເປັນຜູ້ກຳນົດຂອບເຂດທີ່ດິນປະເພດຕ່າງໆ ພາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍສອດຄ່ອງກັບການກຳນົດຂອບເຂດປະເພດທີ່ດິນ ທີ່ລັດໄດ້ກຳນົດອອກ ແລ້ວນຳສະເໜີໃຫ້ອຳນາດການປົກຄອງຂັ້ນເທິງຖັດຕົນນັ້ນ ເພື່ອພິຈາລະນາຮັບຮອງເອົາ.

ມາດຕາ 13 : ການເຊົ່າທີ່ດິນ.

ລັດຈະອະນຸຍາດໃຫ້ພົນລະເມືອງລາວເຊົ່າທີ່ດິນ ສູງສຸດບໍ່ໃຫ້ເກີນ ສາມສິບປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ກໍລະນີ.

ສຳລັບການເຊົ່າສິດນຳໃຊ້ທີ່ດິນ ທີ່ມີການພັດທະນາແລ້ວລະຫວ່າງພົນລະເມືອງລາວດ້ວຍກັນ ສູງສຸດແມ່ນບໍ່ໃຫ້ເກີນ ຊາວ ປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ໃນກໍລະນີ ຕາມຄຳເຫັນດີຂອງອຳນາດການປົກຄອງເມືອງບ່ອນທີ່ດິນຕັ້ງຢູ່.

ການກຳນົດເວລາເຊົ່າທີ່ດິນຕົວຈິງໃຫ້ອີງໃສ່ລັກສະນະ ແລະ ຂະໜາດຂອງກິດຈະການ ທີ່ຈະນຳໃຊ້ທີ່ດິນນັ້ນ.

ມາດຕາ 14 : ການຫັນປ່ຽນປະເພດທີ່ດິນ.

ການຫັນປ່ຽນທີ່ດິນປະເພດໜຶ່ງໄປສູ່ທີ່ດິນອີກປະເພດໜຶ່ງຈະໄດ້ດຳເນີນໄດ້ ກໍຕໍ່ເມື່ອຫາກເຫັນວ່າມີຄວາມຈຳເປັນ ນຳໃຊ້ເຂົ້າໃນເປົ້າໝາຍອື່ນ ໂດຍບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມທຳມະຊາດ ຫລືສັງຄົມ ແລະ ຕ້ອງໄດ້ຮັບອະນຸມັດຈາກອົງການຄຸ້ມຄອງທີ່ກ່ຽວຂ້ອງເສຍກ່ອນ.

## ໝວດທີ 2
## ການຄຸ້ມຄອງທີ່ດິນກະສິກຳ

ມາດຕາ 15 : ທີ່ດິນກະສິກຳ.

ທີ່ດິນກະສິກຳແມ່ນທີ່ດິນ ທີ່ໄດ້ກຳນົດໄວ້ ເພື່ອນຳໃຊ້ເຂົ້າໃນການປູກຝັງ, ລ້ຽງສັດ ແລະ ການຄົ້ນຄວ້າທົດລອງດ້ານກະສິກຳ ລວມທັງທີ່ດິນຊົນລະປະທານ.

ມາດຕາ 16 : ການຄຸ້ມຄອງທີ່ດິນກະສິກຳ.

ກະຊວງກະສິກຳ-ປ່າໄມ້ເປັນຜູ້ຄຸ້ມຄອງທີ່ດິນກະສິກຳ, ກຳນົດທີ່ດິນກະສິກຳປະເພດຕ່າງໆ, ຄົ້ນຄວ້າວາງລະບຽບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ ແລ້ວນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງເອົາ.

ມາດຕາ 17 ; ການກຳນົດຂອບເຂດສິດນຳໃຊ້ທີ່ດິນກະສິກຳ.

ລັດອະນຸຍາດໃຫ້ບຸກຄົນ ແລະ ຄອບຄົວ ນຳໃຊ້ທີ່ດິນກະສິກຳ ຢ່າງຖືກຕ້ອງ ຕາມແຜນຈັດສັນ, ຕາມເປົ້າໝາຍ, ຍາວນານ ແລະ ມີປະສິດທິຜົນຕາມຈຳນວນເນື້ອທີ່ດັ່ງນີ້:

- ຜູ້ທີ່ປູກເຂົ້າ ແລະ ລ້ຽງສັດນຳ້ ໃນຈຳນວນສູງສຸດບໍ່ເກີນ ໜຶ່ງເຮັກຕາ ຕໍ່ໜຶ່ງແຮງງານໃນຄອບຄົວ;
- ຜູ້ທີ່ເຮັດສວນປູກພືດອຸດສາຫະກຳ ແລະ ພືດລົ້ມລຸກ ໃນຈຳນວນສູງສຸດບໍ່ເກີນ ສາມເຮັກຕາ ຕໍ່ໜຶ່ງແຮງງານໃນຄອບຄົວ;
- ຜູ້ທີ່ເຮັດສວນປູກຕົ້ນໄມ້ໃຫ້ໝາກໃນຈຳນວນສູງສຸດບໍ່ເກີນ ສາມເຮັກຕາ ຕໍ່ໜຶ່ງແຮງງານໃນຄອບຄົວ;
- ຜູ້ທີ່ນຳໃຊ້ທີ່ດິນປອກໂລ້ນ ຫລື ປ່າຫຍ້າປະເພດຕ່າງໆ ຊຶ່ງຫັນມາປູກພືດພັນຫຍ້າລ້ຽງສັດ ໃນຈຳນວນສູງສຸດບໍ່ເກີນ ສິບຫ້າ ເຮັກຕາ ຕໍ່ໜຶ່ງແຮງງານໃນຄອບຄົວ.

ໃນການອະນຸມັດເນື້ອທີ່ດິນກະສິກຳໃຫ້ບຸກຄົນ ນຳໃຊ້ນັ້ນລັດຈະພິຈາລະນາເປັນແຕ່ກໍລະນີ ໂດຍອີງໃສ່ລັກສະນະ, ຂະໜາດ, ຄວາມສາມາດຕົວຈິງໃນການຜະລິດ, ເງື່ອນໄຂ ແລະ ແຜນຈັດສັນທີ່ດິນກະສິກຳຂອງທ້ອງຖິ່ນ.

ແຮງງານໜຶ່ງສາມາດໄດ້ຮັບສິດນຳໃຊ້ທີ່ດິນກະສິກຳຫລາຍປະເພດ ຖ້າຜູ້ກ່ຽວຫາກມີເງື່ອນໄຂ ແລະ ຄວາມສາມາດຕົວຈິງໃນການຜະລິດ.

ຖ້າຜູ້ໃດຫາກຕ້ອງການນຳໃຊ້ທີ່ດິນກະສິກຳຫລາຍກ່ວາອັດຕາຂອງປະເພດທີ່ດິນ ທີ່ຕົນໄດ້ຮັບສິດນຳໃຊ້ ກໍສາມາດສະເໜີເຊົ່ານຳລັດໄດ້.

ສຳລັບການອະນຸມັດເນື້ອທີ່ດິນກະສິກຳ ໃຫ້ການຈັດຕັ້ງທຳການຜະລິດນັ້ນ ແມ່ນອີງໃສ່ຄວາມສາມາດຕົວຈິງຂອງການຈັດຕັ້ງດັ່ງກ່າວ.

ມາດຕາ 18 : ການມອບສິດນຳໃຊ້ທີ່ດິນກະສິກຳ.

ອຳນາດການປົກຄອງເມືອງເປັນຜູ້ພິຈາລະນາຕົກລົງມອບສິດນຳໃຊ້ທີ່ດິນກະສິກຳທີ່ຢູ່ໃນການຄຸ້ມຄອງຂອງຕົນໃຫ້ບຸກຄົນ ແລະ ການຈັດຕັ້ງນຳໃຊ້ ໂດຍອອກໃບຢັ້ງຢືນທີ່ດິນໃຫ້. ໃບຢັ້ງຢືນທີ່ດິນນີ້ ມີອາຍຸ ສາມ ປີ, ຖ້າວ່າພາຍໃນກຳນົດດັ່ງກ່າວ ຫາກນຳໃຊ້ທີ່ດິນຖືກຕ້ອງຕາມເປົ້າໝາຍ, ຕາມລະບຽບການ ແລະ ບໍ່ມີການຕໍ່ວ່າຕໍ່ຂານ, ທັກທ້ວງ ຫລື ການຕໍ່ວ່າຕໍ່ຂານນັ້ນຫາກຖືກແກ້ໄຂໄປແລ້ວ ຈຶ່ງຈະມີສິດສະເໜີນຳຫ້ອງການຄຸ້ມຄອງທີ່ດິນ ແຂວງ, ກຳແພງນະຄອນ ຫລື ເຂດພິເສດ. ເພື່ອຈະຂໍໃບຕາດິນ ກ່ຽວກັບສິດນຳໃຊ້ຢ່າງຍາວນານ.

## ໝວດທີ 3
## ການຄຸ້ມຄອງທີ່ດິນປ່າໄມ້

ມາດຕາ 19 : ທີ່ດິນປ່າໄມ້.

ເນື້ອທີ່ດິນປ່າໄມ້ ແມ່ນເນື້ອທີ່ດິນທຸກຕອນ ທີ່ມີປ່າໄມ້ປົກຄຸມຢູ່ ຫລືທີ່ດິນບໍ່ມີປ່າໄມ້ປົກຄຸມ ຊຶ່ງລັດໄດ້ກຳນົດໃຫ້ເປັນທີ່ດິນປ່າໄມ້ ຕາມທີ່ໄດ້ບົ່ງໄວ້ໃນກົດໝາຍປ່າໄມ້.

ມາດຕາ 20 : ການຄຸ້ມຄອງທີ່ດິນປ່າໄມ້.

ກະຊວງກະສິກຳ-ປ່າໄມ້ ເປັນຜູ້ຄຸ້ມຄອງທີ່ດິນປ່າໄມ້, ກຳນົດທີ່ດິນປ່າໄມ້ປະເພດຕ່າງໆ, ຄົ້ນຄວ້າວາງລະບຽບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ ລວມທັງການປົກປັກຮັກສາສະພາບແວດລ້ອມ ແລ້ວນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງເອົາ.

ມາດຕາ 21 ; ການກຳນົດຂອບເຂດສິດນຳໃຊ້ທີ່ດິນປ່າໄມ້.

ລັດອະນຸຍາດໃຫ້ບຸກຄົນ ແລະ ຄອບຄົວ ນຳໃຊ້ທີ່ດິນປ່າໄມ້ ທີ່ເປັນດິນປອກໂລ້ນ ຫລື ປ່າຊຸດໂຊມ ຢ່າງຖືກຕ້ອງຕາມເປົ້າໝາຍ, ຍາວນານ ແລະ ມີປະສິດທິຜົນ ໃນຈຳນວນບໍ່ເກີນ ສາມ ເຮັກຕາ ຕໍ່ໜຶ່ງແຮງງານໃນຄອບຄົວ ຖ້າຜູ້ໃດຫາກຕ້ອງການນຳໃຊ້ທີ່ດິນປ່າໄມ້ຫລາຍກ່ວານັ້ນ ກໍມີສິດຂໍເຊົ່ານຳລັດ.

ສຳລັບການອະນຸມັດເນື້ອທີ່ດິນປ່າໄມ້ໃຫ້ການຈັດຕັ້ງນຳໃຊ້ ແມ່ນອີງໃສ່ຄວາມສາມາດຕົວຈິງໃນການຜະລິດ.

ມາດຕາ 22 : ການມອບສິດນຳໃຊ້ທີ່ດິນປ່າໄມ້.

ອຳນາດການປົກຄອງເມືອງສົມທົບກັບອຳນາດການປົກຄອງບ້ານ ເປັນຜູ້ພິຈາລະນາຕົກລົງ ມອບສິດນຳໃຊ້ທີ່ດິນປ່າໄມ້ ທີ່ຢູ່ໃນການຄຸ້ມຄອງຂອງຕົນໃຫ້ບຸກຄົນ ແລະ ການຈັດຕັ້ງນຳໃຊ້ ໂດຍອອກໃບຢັ້ງຢືນໃຫ້. ໃບຢັ້ງຢືນທີ່ດິນນີ້ມີອາຍຸ ສາມ ປີ, ຖ້າວ່າພາຍໃນກຳນົດດັ່ງກ່າວ ຫາກນຳໃຊ້ຖືກຕ້ອງຕາມເປົ້າໝາຍ, ຕາມລະບຽບການ ແລະ ບໍ່ມີຜູ້ຕໍ່ວ່າຕໍ່ຂານ, ທັກທ້ວງ ຫລື ການຕໍ

ວ່າດ້ວຍຊານນັ້ນຫາກຖືກແກ້ໄຂໄປແລ້ວ ຈຶ່ງຈະມີມືດນຳໄປສະເໜີຂໍໃບຕາດິນ ກ່ຽວກັບສິດນຳໃຊ້ຢ່າງຍາວນານ ໄດ້ນຳຫ້ອງການຄຸ້ມຄອງທີ່ດິນແຂວງ, ກຳແພງນະຄອນ ຫລື ເຂດພິເສດ.

## ໝວດທີ 4
## ການຄຸ້ມຄອງທີ່ດິນປຸກສ້າງ

**ມາດຕາ 23 : ທີ່ດິນປຸກສ້າງ.**

ທີ່ດິນປຸກສ້າງ ແມ່ນທີ່ດິນ ທີ່ໄດ້ກຳນົດໄວ້ ເພື່ອນຳໃຊ້ໃນການປຸກສ້າງທີ່ຢູ່ອາໄສ, ອາຄານ, ໂຮງຈັກ, ໂຮງງານ, ສຳນັກງານ, ອົງການ, ສະຖານທີ່ສາທາລະນະ.

**ມາດຕາ 24 : ການຄຸ້ມຄອງທີ່ດິນປຸກສ້າງ.**

ກະຊວງການເງິນເປັນຜູ້ຄຸ້ມຄອງທີ່ດິນປຸກສ້າງ, ຄົ້ນຄ້ວາວາງລະບຽບການ ກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ ແລ້ວນຳສະເໜີຕໍ່ລັດຖະບານເພື່ອພິຈາລະນາຮັບຮອງເອົາ.

**ມາດຕາ 25 : ປະເພດທີ່ດິນປຸກສ້າງ.**

ທີ່ດິນປຸກສ້າງແບ່ງອອກເປັນປະເພດດັ່ງນີ້:
- ທີ່ດິນປຸກສ້າງເພື່ອສາທາລະນະປະໂຫຍດ;
- ທີ່ດິນປຸກສ້າງທີ່ຢູ່ອາໄສ;
- ທີ່ດິນປຸກສ້າງໂຮງຈັກໂຮງງານ;
- ທີ່ດິນປຸກສ້າງສຳນັກງານ, ອົງການ.

ທີ່ດິນປຸກສ້າງເພື່ອສາທາລະນະປະໂຫຍດ ແມ່ນທີ່ດິນນຳໃຊ້ ເພື່ອຜົນປະໂຫຍດສ່ວນລວມ: ສ່ວນສາທາລະນະ, ໂຮງຮຽນ, ໂຮງໝໍ, ຕະຫລາດ, ສະໜາມເດັກຫລິ້ນ, ສະໜາມກິລາ ແລະ ອື່ນໆ ທີ່ຮັບໃຊ້ສາທາລະນະປະໂຫຍດ,

ທີ່ດິນປຸກສ້າງທີ່ຢູ່ອາໄສ ແມ່ນທີ່ດິນນຳໃຊ້ເຂົ້າໃນການປຸກສ້າງທີ່ພັກພາອາໄສຂອງບຸກຄົນ ແລະ ຄອບຄົວ.

ທີ່ດິນປຸກສ້າງໂຮງຈັກໂຮງງານ ແມ່ນທີ່ດິນນຳໃຊ້ ເພື່ອດຳເນີນການຜະລິດ ແລະ ການປຸງແຕ່ງອຸດສາຫະກຳ.

ທີ່ດິນປຸກສ້າງສຳນັກງານ, ອົງການ ແມ່ນທີ່ດິນນຳໃຊ້ ເພື່ອປຸກສ້າງສຳນັກງານ, ອົງການຂອງລັດ, ຂອງວິສາຫະກິດ, ສະຖານທູດ ຫລື ອົງການຈັດຕັ້ງສາກົນ.

ການຈັດສັນທີ່ດິນປຸກສ້າງຕ້ອງປະຕິບັດຕາມຜັງເມືອງ ແລະ ຕາມອັດຕາສ່ວນຂອງທີ່ດິນປຸກສ້າງແຕ່ລະປະເພດທີ່ໄດ້ກຳນົດໄວ້.

**ມາດຕາ 26 : ລະບຽບການນຳໃຊ້ທີ່ດິນປຸກສ້າງ.**

ລັດຕ້ອງສະຫງວນທີ່ດິນປຸກສ້າງ ສຳລັບສາທາລະນະປະໂຫຍດໄວ້ ເພື່ອຮັບໃຊ້ຜົນປະໂຫຍດສ່ວນລວມ. ຖ້າຫາກມີການປ່ຽນເປົ້າໝາຍການນຳໃຊ້ທີ່ດິນດັ່ງກ່າວ ກໍຕ້ອງໃຫ້ຮັບໃຊ້ຜົນປະໂຫຍດສ່ວນລວມເຊັ່ນດຽວກັນ ແລະ ຕ້ອງໄດ້ຮັບອະນຸຍາດຈາກ ຂະແໜງການທີ່ກ່ຽວຂ້ອງເສຍກ່ອນ.

ການນຳໃຊ້ທີ່ດິນປຸກສ້າງ ແມ່ນບໍ່ໃຫ້ແຕະຕ້ອງເຖິງສິດຜົນປະໂຫຍດຂອງຜູ້ອື່ນ ທັງຮັບປະກັນສະພາວະຄວາມເປັນຈິງ ຕ້ອງຍອມຮັບ. ການປຸກສ້າງຕ່າງໆຕ້ອງໄດ້ຮັບອະນຸຍາດຈາກອົງການຜັງເມືອງ ແລະ ຕ້ອງປະຕິບັດຕາມລະບຽບຜັງເມືອງຢ່າງເຂັ້ມງວດ, ໄດ້ຮັບອະນຸຍາດຈາກອົງການທີ່ມີສິດໜ້າທີ່ກ່ຽວຂ້ອງ, ຮັບປະກັນມາດຕະຖານເຕັກນິກຢ່າງຄົບຖ້ວນ ພ້ອມທັງຮັບປະກັນສິ່ງແວດລ້ອມອີກດ້ວຍ.

**ມາດຕາ 27 : ການກຳນົດຂອບເຂດສິດນຳໃຊ້ທີ່ດິນປຸກສ້າງ.**

ລັດອະນຸຍາດໃຫ້ບຸກຄົນ ແລະ ຄອບຄົວ ນຳໃຊ້ທີ່ດິນປຸກສ້າງຢ່າງຖືກຕ້ອງຕາມເປົ້າໝາຍ, ສະຫງົບ, ຍາວນານ ແລະ ມີປະສິດທິຜົນ ໃນຈຳນວນບໍ່ເກີນ ແປດຮ້ອຍຕາແມັດ ຕໍ່ຄົນໃນຄອບຄົວ. ຖ້າຜູ້ໃດຫາກຕ້ອງການນຳໃຊ້ທີ່ດິນປຸກສ້າງຫລາຍກວ່ານັ້ນ ກໍມີສິດຂໍເຊົ່ານຳລັດ.

ສຳລັບການອະນຸມັດເນື້ອທີ່ດິນປຸກສ້າງໃຫ້ການຈັດຕັ້ງນຳໃຊ້ ແມ່ນອີງຕາມຄວາມສາມາດຕົວຈິງໃນການນຳໃຊ້.

## ໝວດທີ 5
## ການຄຸ້ມຄອງທີ່ດິນອຸດສາຫະກຳ

**ມາດຕາ 28 : ທີ່ດິນອຸດສາຫະກຳ**

ທີ່ດິນອຸດສາຫະກຳແມ່ນຂອບເຂດ ຫລື ບໍລິເວນທີ່ດິນ ຊຶ່ງລັດກຳນົດໃຫ້ເປັນທີ່ຕັ້ງ ຂອງ ໂຮງຈັກ, ໂຮງງານ, ນິຄົມອຸດສາຫະກຳ, ສະຖານຄົ້ນຄ້ວາເຕັກນິກວິທະຍາສາດອຸດສາຫະກຳ, ສະຖານທີ່ບຳບັດນ້ຳເສຍຄຸນ, ບ່ອນທຳລາຍສິ່ງເສດເຫລືອອຸດສາຫະກຳ, ແຫລ່ງວັດຖຸພະລັງງານ, ແລວທາງສາຍສົ່ງໄຟຟ້າ, ແລວທາງທໍ່ພະລັງງານ ແລະ ອາຍແກັດ, ທໍ່ນ້ຳປະປາ, ເຂດບໍ່ແຮ່ ແລະ ທີ່ດິນອື່ນໆ ທີ່ນຳໃຊ້ເຂົ້າໃນເປົ້າໝາຍອຸດສາຫະກຳ.

**ມາດຕາ 29 : ການຄຸ້ມຄອງທີ່ດິນອຸດສາຫະກຳ.**

ກະຊວງອຸດສາຫະກຳ-ຫັດຖະກຳເປັນຜູ້ຄຸ້ມຄອງທີ່ດິນອຸດສາຫະກຳ, ຄົ້ນຄ້ວາວາງລະບຽບການກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ ລວມທັງການປົກປັກຮັກສາສິ່ງແວດລ້ອມ ແລ້ວສະເໜີຕໍ່ລັດຖະບານເພື່ອພິຈາລະນາຮັບຮອງເອົາ.

ສຳລັບການຄຸ້ມຄອງທີ່ດິນແລວທາງສາຍສົ່ງໄຟຟ້າ, ແລວທາງທໍ່ພະລັງງານ ແລະ ອາຍແກັດ, ທໍ່ນ້ຳປະປານັ້ນ ໃຫ້ປະສານສົມທົບກັບຂະແໜງຄົມມະນາຄົມຂົນສົ່ງ, ແລະ ບັນດາຂະແໜງການອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 30 : ລະບຽບການນຳໃຊ້ທີ່ດິນອຸດສາຫະກຳ.**

ບຸກຄົນ ແລະ ການຈັດຕັ້ງ ທີ່ນຳໃຊ້ທີ່ດິນອຸດສາຫະກຳ ຕ້ອງປະຕິບັດຕາມເງື່ອນໄຂດັ່ງຕໍ່ໄປນີ້:
1. ໄດ້ຮັບອະນຸຍາດຈາກຂະແໜງອຸດສາຫະກຳ-ຫັດຖະກຳ;
2. ໄດ້ຮັບອະນຸຍາດຈາກອົງການຜັງເມືອງ;
3. ບໍ່ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ, ແກ່ສາທາລະນະ ຫລື ສິ່ງແວດລ້ອມ;
4. ປັບປຸງສະພາບໜ້າດິນ ແລະ ຟື້ນຟູທີ່ດິນ ໃຫ້ຄືນສູ່ສະພາບເດີມ ພາຍຫລັງທີ່ໄດ້ເຊົານຳໃຊ້ແລ້ວສຳລັບທີ່ດິນບໍ່ແຮ່.

## ໝວດທີ 6
## ການຄຸ້ມຄອງທີ່ດິນຄົມມະນາຄົມ

**ມາດຕາ 31 : ທີ່ດິນຄົມມະນາຄົມ**

ທີ່ດິນຄົມມະນາຄົມ ແມ່ນທີ່ດິນສຳລັບນຳໃຊ້ເປັນເສັ້ນທາງ, ຂອບທາງ, ຮ່ອງນ້ຳ, ສະຖານທີ່ຕັ້ງຂົວ, ແລວສາຍໂທລະສັບ, ທີ່ຕັ້ງສະຖານີສື່ສານ ລວມທັງສະໜາມບິນ, ທ່າເຮືອ, ສະຖານີລົດຂົນສົ່ງສິນຄ້າ ແລະ ລົດໂດຍສານ, ອູ່ໂມງ, ທາງລົດໄຟ, ສະຖານທີ່ຕັ້ງສາງຮັບໃຊ້

ການຂົນສົ່ງ ແລະ ທີ່ດິນອື່ນໆ ທີ່ນຳໃຊ້ເຂົ້າໃນວຽກງານຄົມມະນາຄົມຂົນສົ່ງ.

**ມາດຕາ 32 : ການຄຸ້ມຄອງທີ່ດິນຄົມມະນາຄົມ.**

ກະຊວງຄົມມະນາຄົມຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ ເປັນຜູ້ຄຸ້ມຄອງທີ່ດິນຄົມມະນາຄົມ, ຄົ້ນຄ້ວາວາງລະບຽບການ ກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ ແລ້ວນຳສະເໜີຕໍ່ລັດຖະບານເພື່ອພິຈາລະນາຮັບຮອງເອົາ.

**ມາດຕາ 33 : ການນຳໃຊ້ທີ່ດິນຄົມມະນາຄົມ.**

ການນຳໃຊ້ທີ່ດິນຄົມມະນາຄົມຕ້ອງປະຕິບັດຢ່າງຖືກຕ້ອງ ຕາມລະບຽບການສະເພາະ ທີ່ອົງການກ່ຽວຂ້ອງວາງອອກ.

## ໝວດທີ 7
## ການຄຸ້ມຄອງທີ່ດິນວັດທະນະທຳ

**ມາດຕາ 34 : ທີ່ດິນວັດທະນະທຳ.**

ທີ່ດິນວັດທະນະທຳ ແມ່ນສະຖານທີ່ຕັ້ງ ຂອງມໍລະດົກ ທາງດ້ານວັດທະນະທຳ ທີ່ຕິດພັນກັບຮ່ອງຮອຍປະຫວັດສາດ, ວັດຖຸບູຮານ, ປູຊະນີຍະສະຖານ, ວັດວາອາຮາມ, ທິວທັດທຳມະຊາດ,ສິ່ງປຸກສ້າງທາງດ້ານວັດທະນະທຳ ແລະ ສະຖານທີ່ອື່ນໆ ທີ່ລັດກຳນົດໃຫ້ເປັນທີ່ດິນວັດທະນະທຳ ແລະ ການທ່ອງທ່ຽວ.

**ມາດຕາ 35 : ການຄຸ້ມຄອງທີ່ດິນວັດທະນະທຳ.**

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ເປັນຜູ້ຄຸ້ມຄອງທີ່ດິນວັດທະນະທຳໃນຂອບເຂດທົ່ວປະເທດ, ຄົ້ນຄ້ວາວາງລະບຽບການກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ ແລ້ວນຳສະເໜີຕໍ່ລັດຖະບານເພື່ອພິຈາລະນາຮັບຮອງເອົາ.

ບຸກຄົນ ຫລື ການຈັດຕັ້ງ ທີ່ນຳໃຊ້ທີ່ດິນວັດທະນະທຳນັ້ນ ຕ້ອງປະຕິບັດຕາມລະບຽບການ ກ່ຽວກັບການຄຸ້ມຄອງ, ການນຳໃຊ້ ແລະ ການປົກປັກຮັກສາທີ່ດິນວັດທະນະທຳ.

## ໝວດທີ 8
## ການຄຸ້ມຄອງທີ່ດິນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ

**ມາດຕາ 36 : ທີ່ດິນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ**

ທີ່ດິນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແມ່ນທີ່ດິນ ທີ່ນຳໃຊ້ເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ: ບ່ອນຕັ້ງຄ້າຍ, ສຳນັກງານ, ກົມກອງ, ບ່ອນພັກເຊົາ, ໂຮງຮຽນ ແລະ ສະໜາມຝຶກແອບວິຊາການທະຫານ, ຕຳຫລວດ, ສະໜາມປືນໃຫຍ່, ສະໜາມບິນ ແລະ ທ່າເຮືອຂອງທະຫານ, ສາງ, ໂຮງໝໍ, ໂຮງຈັກ, ໂຮງງານ, ສະຖານທີ່ພັກຜ່ອນຂອງທະຫານ, ຕຳຫລວດ ແລະ ທີ່ດິນອື່ນໆ ທີ່ນຳໃຊ້ເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

**ມາດຕາ 37 : ການຄຸ້ມຄອງທີ່ດິນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນປະເທດ ແລະ ກະຊວງພາຍໃນ ເປັນຜູ້ຄຸ້ມຄອງທີ່ດິນປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຄົ້ນຄ້ວາວາງລະບຽບການ ກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ ແລ້ວນຳສະເໜີຕໍ່ລັດຖະບານເພື່ອພິຈາລະນາຮັບຮອງເອົາ.

**ມາດຕາ 38 : ການນຳໃຊ້ທີ່ດິນປະເພດອື່ນເຂົ້າໃນການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ**

ເມື່ອມີຄວາມຈຳເປັນກົມກອງປ້ອງກັນຊາດ, ປ້ອງກັນຄວາມສະຫງົບສາມາດນຳໃຊ້ທີ່ດິນປະເພດອື່ນ ບໍ່ວ່າຂອງບຸກຄົນ ຫລື ການຈັດຕັ້ງ ເຂົ້າໃນການເຄື່ອນໄຫວວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຕາມການຕົກລົງຂອງລັດຖະບານ.

ພາຍຫລັງໝົດຄວາມຈຳເປັນໃນການນຳໃຊ້ແລ້ວ ຕ້ອງສົ່ງທີ່ດິນດັ່ງກ່າວນັ້ນ ຄືນໃຫ້ແກ່ເຈົ້າຂອງເດີມ. ໃນກໍລະນີທີ່ການນຳໃຊ້ນັ້ນ ຫາກໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ໄດ້ຮັບສິດນຳໃຊ້ທີ່ດິນ ທີ່ມີການພັດທະນານັ້ນແລ້ວ ກໍຄວນພິຈາລະນາທົດແທນຄ່າເສຍຫາຍ ຕາມຄວາມເໝາະສົມ.

## ໝວດທີ 9
## ການຄຸ້ມຄອງທີ່ດິນບໍລິເວນນ້ຳ

**ມາດຕາ 39 : ທີ່ດິນບໍລິເວນນ້ຳ.**

ທີ່ດິນບໍລິເວນນ້ຳ ແມ່ນທີ່ດິນຊຶ່ງຢູ່ພື້ນນ້ຳ ຫລື ຢູ່ຂອບເຂດອ້ອມແອ້ມແຫລ່ງນ້ຳ : ທີ່ດິນພື້ນນ້ຳ, ທີ່ດິນຍອດນ້ຳ, ທີ່ດິນແຄມນ້ຳ, ທີ່ດິນກາງນ້ຳ, ທີ່ດິນປົ່ງໃໝ່, ທີ່ດິນນ້ຳປົກປະ ຫລື ທີ່ດິນທີ່ເກີດຂຶ້ນຈາກການດັດແປງ ຫລື ອ່ວາຍແລວນ້ຳ.

**ມາດຕາ 40 : ການຄຸ້ມຄອງທີ່ດິນບໍລິເວນນ້ຳ**

ກະຊວງກະສິກຳ-ປ່າໄມ້ ເປັນຜູ້ຄຸ້ມຄອງທີ່ດິນບໍລິເວນນ້ຳ, ຄົ້ນຄ້ວາວາງລະບຽບການ ກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ, ການພັດທະນາ ແລະ ການນຳໃຊ້ທີ່ດິນປະເພດດັ່ງກ່າວ ໂດຍປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນບ່ອນທີ່ດິນບໍລິເວນນ້ຳຕັ້ງຢູ່ ແລ້ວນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາຮັບຮອງເອົາ.

**ມາດຕາ 41 : ລະບຽບການນຳໃຊ້ທີ່ດິນບໍລິເວນນ້ຳ**

ການນຳໃຊ້ທີ່ດິນບໍລິເວນນ້ຳຕ້ອງຮັບປະກັນເງື່ອນໄຂ ດັ່ງຕໍ່ໄປນີ້:

1. ບໍ່ໃຫ້ມີການເຊາະເຈື່ອນ;
2. ບໍ່ໃຫ້ສະກັດກັ້ນທາງນ້ຳໄຫຼ;
3. ບໍ່ໃຫ້ນ້ຳຕື້ນເຂີນ ຫລື ຮ້ອງຖ້ວມ;
4. ບໍ່ໃຫ້ສ້າງຄວາມເປິະເປື້ອນ ເປັນພິດແກ່ແຫລ່ງນ້ຳ;
5. ບໍ່ໃຫ້ຕັດຕົ້ນໄມ້ທຳລາຍປ່າເຂດແຫລ່ງນ້ຳ;
6. ບໍ່ໃຫ້ຂຸດລອກເອົາດິນບວມ, ດິນທາມ, ຖ້າຫາກມີຄວາມຈຳເປັນນັ້ນຕ້ອງໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງເສຍກ່ອນ.

**ມາດຕາ 42 : ການນຳໃຊ້ທີ່ດິນບໍລິເວນນ້ຳ**

ອຳນາດການປົກຄອງບ້ານບ່ອນທີ່ດິນບໍລິເວນນ້ຳຕັ້ງຢູ່ ເປັນຜູ້ຄົ້ນຄ້ວານຳສະເໜີຕໍ່ອຳນາດການປົກຄອງເມືອງ ກ່ຽວກັບການມອບທີ່ດິນດັ່ງກ່າວ ໃຫ້ບຸກຄົນ ຫລື ການຈັດຕັ້ງ ປົກປັກຮັກສາ ແລະ ນຳໃຊ້ຕາມຄວາມເໝາະສົມ.

ໃນກໍລະນີທີ່ດິນບໍລິເວນນ້ຳຫາກໄດ້ເກີດຂຶ້ນຢູ່ໃນຂອບເຂດສິດນຳໃຊ້ຂອງບຸກຄົນ ຫລື ການຈັດຕັ້ງໃດໜຶ່ງແລ້ວ ຖ້າຫາກອົງການທີ່ຄຸ້ມຄອງນ້ຳ ແລະ ຊັບພະຍາກອນແຫລ່ງ

ນຳ້ ແລະ ອົງການວິທະຍາສາດເຕັກໂນໂລຊີແລະ ສິ່ງແວດລ້ອມກວດກາເຫັນວ່າ ການນຳໃຊ້ທີ່ດິນດັ່ງກ່າວບໍ່ມີຜົນກະທົບຕໍ່ບໍລິເວນນຳ້ນັ້ນແລ້ວ ທີ່ດິນດັ່ງກ່າວກໍຈະຕົກຢູ່ໃນສິດນຳໃຊ້ຂອງບຸກຄົນ ຫລື ອົງການຈັດຕັ້ງນັ້ນຕໍ່ໄປ.

## ໝວດທີ 10
## ການຂຶ້ນທະບຽນທີ່ດິນ

### ມາດຕາ 43 : ການຂຶ້ນທະບຽນທີ່ດິນ

ການຂຶ້ນທະບຽນທີ່ດິນ ແມ່ນການຈົດກ່າຍຂໍ້ມູນຕ່າງໆ ເຂົ້າປຶ້ມທະບຽນທີ່ດິນ: ຊື່ ແລະ ນາມສະກຸນຂອງຜົວ ແລະ ເມຍ ຊຶ່ງໄດ້ຮັບສິດນຳໃຊ້ທີ່ດິນ, ປະເພດທີ່ດິນ, ຂອບເຂດ ແລະ ເນື້ອທີ່ຂອງທີ່ດິນ, ການໄດ້ມາ ແລະ ທີ່ຕັ້ງຂອງທີ່ດິນ ເຂົ້າໃນປຶ້ມທີ່ດິນ.

ການຂຶ້ນທະບຽນທີ່ດິນ ແມ່ນການຢັ້ງຢືນສິດນຳໃຊ້ທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ ໃຫ້ແກ່ບຸກຄົນ ຫລື ການຈັດຕັ້ງ ເພື່ອບໍ່ໃຫ້ມີການປອມແປງສິດນຳໃຊ້ທີ່ດິນ, ອຳນວຍຄວາມສະດວກໃຫ້ແກ່ການຄຸ້ມຄອງ ແລະ ການປົກປັກຮັກສາທີ່ດິນຢ່າງເປັນເອກະພາບ ໃນທົ່ວປະເທດ.

### ມາດຕາ 44 : ຮູບການຂຶ້ນທະບຽນທີ່ດິນ

ການຂຶ້ນທະບຽນທີ່ດິນ ມີສອງຮູບການ ຄື:
- ການຂຶ້ນທະບຽນທີ່ດິນຢ່າງເປັນລະບົບ;
- ການຂຶ້ນທະບຽນທີ່ດິນຕາມຄຳຮ້ອງຂໍ.

ການຂຶ້ນທະບຽນທີ່ດິນຢ່າງເປັນລະບົບ ແມ່ນການຂຶ້ນທະບຽນໂດຍບໍ່ມີຄຳຮ້ອງຂໍ, ເຮັດເປັນລະບົບໃນເຂດໃດໜຶ່ງ ທີ່ມີຄວາມຈຳເປັນໃນການຈັດສັນທີ່ດິນ, ຈັດແບ່ງເຂດ, ແບ່ງປະເພດທີ່ດິນ ເພື່ອຄຸ້ມຄອງ.

ການຂຶ້ນທະບຽນທີ່ດິນຕາມການຮ້ອງຂໍ ແມ່ນຂຶ້ນທະບຽນ ທີ່ດຳເນີນຕາມຄຳຮ້ອງຂໍຂອງບຸກຄົນ ຫລື ການຈັດຕັ້ງໃດໜຶ່ງ ເພື່ອໃຫ້ມີການຢັ້ງຢືນ ກ່ຽວກັບສິດນຳໃຊ້ທີ່ດິນຂອງຕົນ.

### ມາດຕາ 45 : ຄຳຮ້ອງຂໍຂຶ້ນທະບຽນທີ່ດິນ

ບຸກຄົນ ຫລືການຈັດຕັ້ງ ທີ່ມີຈຸດປະສົງຢາກຂຶ້ນທະບຽນທີ່ດິນ ຕ້ອງຍື່ນຄຳຮ້ອງຂໍຂຶ້ນທະບຽນຕໍ່ຫ້ອງການຄຸ້ມຄອງທີ່ດິນປະຈຳແຂວງ, ກຳແພງນະຄອນ ຫລື ເຂດພິເສດ ໂດຍຜ່ານອຳນາດການປົກຄອງບ້ານ ແລະ ໜ່ວຍງານຄຸ້ມຄອງທີ່ດິນເມືອງ.

ຄຳຮ້ອງຂໍຂຶ້ນທະບຽນທີ່ດິນ ປະກອບດ້ວຍ:
1. ໃບຢັ້ງຢືນກ່ຽວກັບການໄດ້ມາຂອງທີ່ດິນ: ການສືບທອດ ຫລື ການໂອນ ແລະ ໃບຢັ້ງຢືນທີ່ດິນ ຖ້າຫາກແມ່ນທີ່ດິນກະສິກຳ ຫລື ທີ່ດິນປ່າໄມ້;
2. ໃບຢັ້ງຢືນເຄົ້າມູນການໄດ້ມາຂອງທີ່ດິນ;
3. ໃບຢັ້ງຢືນຮັບປະກັນທີ່ດິນຈາກເຈົ້າຂອງເດີມ ຫລື ອຳນາດການປົກຄອງບ່ອນທີ່ດິນນັ້ນຕັ້ງຢູ່;
4. ເອກະສານປະກອບອື່ນໆ ທີ່ຈຳເປັນ.

### ມາດຕາ 46 : ການກວດກາຄຳຮ້ອງຂໍຂຶ້ນທະບຽນທີ່ດິນ

ເມື່ອສຳນວນຄຳຮ້ອງຂໍຂຶ້ນທະບຽນທີ່ດິນມາເຖິງໜ່ວຍງານຄຸ້ມຄອງທີ່ດິນຂອງເມືອງແລ້ວ ໜ່ວຍງານນີ້ຕ້ອງກວດກາຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ລະບຽບກົດໝາຍ ໂດຍສົມທົບກັບອຳນາດການປົກຄອງບ້ານ ບ່ອນທີ່ດິນນັ້ນຕັ້ງຢູ່.

ພາຍຫລັງທີ່ເຫັນວ່າ ຂໍ້ມູນ ຖືກຕ້ອງຕາມຄວາມເປັນຈິງ ແລະ ລະບຽບກົດໝາຍແລ້ວ ພະນັກງານໜ່ວຍວັດແທກກໍຈະທຳການວັດແທກ ແລະ ເຮັດແຜນທີ່ດິນ ຄັດຕິດສຳນວນຄຳຮ້ອງ ເພື່ອນຳສະເໜີໃຫ້ຫ້ອງການຄຸ້ມຄອງທີ່ດິນປະຈຳແຂວງ, ກຳແພງນະຄອນ ຫລື ເຂດພິເສດ ພິຈາລະນາຂຶ້ນທະບຽນທີ່ດິນ.

### ມາດຕາ 47 : ປຶ້ມທະບຽນທີ່ດິນ

ປຶ້ມທະບຽນທີ່ດິນ ແມ່ນປຶ້ມທີ່ໃຊ້ຈົດກ່າຍ ຕາມເລກລຳດັບການຂຶ້ນທະບຽນທີ່ດິນ ເຂົ້າໃນປຶ້ມທະບຽນທີ່ດິນນັ້ນ ຊຶ່ງມີລາຍເຊັນ ແລະ ຕາປະທັບຂອງລັດຖະມົນຕີວ່າການກະຊວງການເງິນຢູ່ໜ້າຕົ້ນ ລວມທັງໝາຍເລກລຳດັບ ແລະ ປະທັບຕາໃສ່ແຕ່ລະໃບ.

ປຶ້ມທະບຽນທີ່ດິນຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:
1. ຊື່ ແລະ ນາມສະກຸນຂອງບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ສິດນຳໃຊ້ທີ່ດິນ;
2. ວັນ, ເດືອນ, ປີເກີດ, ສັນຊາດ, ອາຊີບ, ທີ່ຢູ່ປະຈຸບັນ;
3. ຊື່ພໍ່ ແລະ ແມ່ຂອງຜູ້ໄດ້ຮັບສິດນຳໃຊ້ທີ່ດິນ;
4. ເລກທີຕາດິນ;
5. ເລກໝາຍແຜນທີ່ສະເພາະ;
6. ຂອບເຂດ, ເນື້ອທີ່ ແລະ ເຂດແດນຂອງທີ່ດິນ;
7. ແຜນທີ່ທີ່ດິນ.

### ມາດຕາ 48 : ໃບຢັ້ງຢືນທີ່ດິນ

ໃບຢັ້ງຢືນທີ່ດິນ ແມ່ນເອກະສານທາງການ ທີ່ຢັ້ງຢືນກ່ຽວກັບສິດນຳໃຊ້ທີ່ດິນກະສິກຳ ຫລື ດິນປ່າໄມ້ຊົ່ວຄາວ ຊຶ່ງອຳນາດການປົກຄອງເມືອງອອກໃຫ້ບຸກຄົນ ຫລື ການຈັດຕັ້ງທີ່ມີສິດນຳໃຊ້ທີ່ດິນນັ້ນ.

ບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ຮັບໃບຢັ້ງຢືນທີ່ດິນ ມີສິດທຳການສືບທອດຕາມອາຍຸຂອງໃບຢັ້ງຢືນໄດ້ ແຕ່ບໍ່ມີສິດໂອນ, ບໍ່ມີສິດເອົາໄປເປັນຮຸ້ນ, ບໍ່ມີສິດນຳໄປຄຳ້ປະກັນ ຫລື ໃຫ້ເຊົ່າ.

### ມາດຕາ 49 : ໃບຕາດິນ

ໃບຕາດິນ ແມ່ນເອກະສານ ທີ່ເປັນຫລັກຖານຕົ້ນຕໍອັນໜຶ່ງອັນດຽວກ່ຽວກັບສິດນຳໃຊ້ທີ່ດິນຢ່າງຖາວອນ ຊຶ່ງ ໄດ້ຄັດສຳເນົາຢ່າງຖືກຕ້ອງຈາກປຶ້ມທະບຽນທີ່ດິນເພື່ອມອບໃຫ້ແກ່ຜູ້ເປັນເຈົ້າຂອງທີ່ດິນພຽງໃບດຽວ ເພື່ອຖືໄວ້ເປັນຫລັກຖານຢ່າງຍາວນານ ຈົນກວ່າຈະມີການປ່ຽນແປງໃໝ່ ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍ.

ກ່ອນຈະອອກໃບຕາດິນ ອົງການທີ່ກ່ຽວຂ້ອງຕ້ອງຕິດປະກາດຢູ່ຫ້ອງການຄຸ້ມຄອງທີ່ດິນ, ສຳນັກງານປົກຄອງເມືອງ, ສຳນັກງານປົກຄອງບ້ານ ບ່ອນທີ່ດິນຕັ້ງຢູ່, ອອກແຈ້ງການຜ່ານສື່ມວນຊົນຂອງລັດ, ລົງໜ້າໜັງສືພິມ ແລະ ປະກາດທາງວິທະຍຸກະຈາຍສຽງແຫ່ງຊາດ ໃນກຳນົດ ເກົ້າສິບວັນ ນັບແຕ່ວັນທີລົງລາຍເຊັນໃບປະກາດເປັນຕົ້ນໄປ ເພື່ອໃຫ້ມວນຊົນຊາບ. ຖ້າວ່າພາຍໃນກຳນົດເວລາດັ່ງກ່າວ ຫາກບໍ່ມີການຕໍ່ວ່າຕໍ່ຂານ ຫລື ການຕໍ່ວ່າຕໍ່ຂານນັ້ນຫາກຖືກແກ້ໄຂໄປແລ້ວ ຈຶ່ງອອກໃບຕາດິນໃຫ້ແກ່ຜູ້ໄດ້ຮັບສິດນຳໃຊ້ທີ່ດິນ.

### ມາດຕາ 50 : ການອອກໃບສຳເນົາຕາດິນ ( ໃບແທນຕາດິນ )

ໃນກໍລະນີໃບຕາດິນຫາກຕົກເຮ່ຍເສັຽຫາຍ ຫລື ຖືກທຳລາຍ ຫ້ອງ

ການຄຸ້ມຄອງທີ່ດິນປະຈຳແຂວງ, ກຳແພງນະຄອນ ຫລື ເຂດພິເສດ ຈະອອກໃບສຳເນົາຕາດິນໃຫ້ບຸກຄົນ ຫລື ການຈັດຕັ້ງທີ່ໄດ້ຮ້ອງຂໍ.

ຖ້າວ່າໃບຕາດິນ ທີ່ຕົກເຮ່ຍເສັຍຫາຍ ຫລື ຖືກທຳລາຍນັ້ນ ຫາກບໍ່ສາມາດປະຮ່ອງຮອຍ ທີ່ເປັນຫລັກຖານຢັ້ງຢືນໄດ້ວ່າ ແມ່ນໃບຕາດິນທີ່ກ່ຽວຂ້ອງນັ້ນແລ້ວ ກ່ອນຈະອອກໃບສຳເນົາຕາດິນນັ້ນ ຕ້ອງມີຄຳຕັດສິນຂອງສານປະຊາຊົນທ້ອງຖິ່ນ ບ່ອນທີ່ດິນຕັ້ງຢູ່ເສຍກ່ອນ.

ການອອກໃບສຳເນົາຕາດິນ ໃນທຸກກໍລະນີ ຕ້ອງປະກາດໃຫ້ມວນຊົນຊາບລ່ວງໜ້າ ສາມສິບ ວັນ ຕາມລະບຽບການທີ່ໄດ້ກຳນົດໄວ້ໃນມາດຕາ 49 ເທິງນີ້.

ມາດຕາ 51 : ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ

ການຈົດທະບຽນນິຕິກຳກ່ຽວກັບທີ່ດິນ ແມ່ນການບັນທຶກທຸກການເຄື່ອນໄຫວການປ່ຽນແປງ ກ່ຽວກັບສິດນຳໃຊ້ທີ່ດິນ: ການໂອນ, ການຄ້ຳປະກັນ ເຂົ້າໃສ່ປຶ້ມຈົດທະບຽນນິຕິກຳຢູ່ທີ່ໜ່ວຍງານຄຸ້ມຄອງທີ່ດິນຂອງເມືອງ ຕາມການມອບໝາຍຂອງຫ້ອງການຄຸ້ມຄອງທີ່ດິນ ແຂວງ, ກຳແພງນະຄອນ ຫລື ເຂດພິເສດ ເພື່ອຕິດຕາມສະພາບການປ່ຽນແປງຂອງທີ່ດິນນັ້ນ.

## ພາກທີ III
## ສິດ ແລະ ພັນທະ
## ຂອງຜູ້ນຳໃຊ້ທີ່ດິນ

### ຫມວດທີ 1
### ສິດ ແລະ ພັນທະຂອງພົນລະເມືອງລາວກ່ຽວກັບທີ່ດິນ

ມາດຕາ 52 : ການໄດ້ຮັບສິດນຳໃຊ້ທີ່ດິນ

ບຸກຄົນ ຫລື ການຈັດຕັ້ງຈະໄດ້ຮັບສິດນຳໃຊ້ທີ່ດິນບົນພື້ນຖານໃດໜຶ່ງ ດັ່ງຕໍ່ໄປນີ້:
1. ການມອບຂອງລັດ;
2. ການໂອນ;
3. ການສືບທອດມູນມໍ່ລະດົກ.

ມາດຕາ 53 : ສິດຂອງຜູ້ນຳໃຊ້ທີ່ດິນ

ຜູ້ໄດ້ຮັບສິດນຳໃຊ້ທີ່ດິນມີສິດຕ່າງໆດັ່ງຕໍ່ໄປນີ້:
- ສິດປົກປັກຮັກສາທີ່ດິນ;
- ສິດນຳໃຊ້ທີ່ດິນ;
- ສິດໄດ້ຮັບໝາກຜົນຈາກທີ່ດິນ;
- ສິດໂອນ ສິດນຳໃຊ້ທີ່ດິນ;
- ສິດສືບທອດສິດນຳໃຊ້ທີ່ດິນ.

ມາດຕາ 54 : ສິດປົກປັກຮັກສາທີ່ດິນ

ສິດປົກປັກຮັກສາທີ່ດິນ ແມ່ນສິດທີ່ລັດມອບໃຫ້ບຸກຄົນ ຫລື ການຈັດຕັ້ງໃດໜຶ່ງ ຮັກສາທີ່ດິນ ເພື່ອນຳໃຊ້ ເຂົ້າ ໃນ ເປົ້າ ໝາຍ ໃດ ໜຶ່ງ ທີ່ແນ່ນອນ.

ມາດຕາ 55 : ສິດນຳໃຊ້ທີ່ດິນ

ສິດນຳໃຊ້ທີ່ດິນ ແມ່ນສິດໃນການໃຊ້ທີ່ດິນ ເຂົ້າໃນເປົ້າໝາຍໃດໜຶ່ງ ຕາມແຜນການຈັດສັນຂອງລັດ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນນັ້ນ.

ມາດຕາ 56 : ສິດໄດ້ຮັບໝາກຜົນຈາກທີ່ດິນ

ສິດໄດ້ຮັບໝາກຜົນຈາກທີ່ດິນ ທີ່ມີການພັດທະນາແລ້ວ ແມ່ນສິດເກັບກູ້ໝາກຜົນຈາກທີ່ດິນ ທີ່ຕົນໄດ້ຮັບສິດນຳໃຊ້ນັ້ນ: ໄດ້ຈາກການໃຫ້ເຊົ່າ, ຈາກການເອົາໄປເປັນຮຸ້ນ ຫລື ນຳໄປຄ້ຳປະກັນທີ່ດິນ ທີ່ມີການພັດທະນາແລ້ວ.

ມາດຕາ 57 : ສິດໂອນສິດນຳໃຊ້ທີ່ດິນ

ສິດ ໂອນ ສິດ ນຳ ໃຊ້ ທີ່ ດິນ ແມ່ນສິດໃນການມອບການນຳໃຊ້ ແລະ ການຊື້ຂາຍ ກ່ຽວກັບສິດນຳໃຊ້ທີ່ດິນໃຫ້ຜູ້ອື່ນ, ຈະໂອນໄດ້ສະເພາະແຕ່ທີ່ດິນທີ່ໄດ້ພັດທະນາສ້າງສາ, ເພີ່ມພູນຜະລິດຜົນແລ້ວເທົ່ານັ້ນ.

ມາດຕາ 58 : ສິດສືບທອດການນຳໃຊ້ທີ່ດິນ

ສິດສືບທອດການນຳໃຊ້ທີ່ດິນທີ່ມີການພັດທະນາແລ້ວ ແມ່ນສິດໃຫ້ມີການຕົກທອດສິດນຳໃຊ້ທີ່ດິນ ໄປຍັງລູກ, ຫລານ, ພໍ່ແມ່ ຫລື ຍາດຕິພີ່ນ້ອງໃກ້ຊິດ ພາຍຫລັງທີ່ຜູ້ໄດ້ຮັບສິດນຳໃຊ້ທີ່ດິນໄດ້ເສຍຊີວິດໄປແລ້ວ.

ຜູ້ໄດ້ຮັບການສືບທອດມູນມໍ່ລະດົກທີ່ດິນ ທີ່ໄດ້ມີການພັດທະນາແລ້ວ ມີສິດນຳໃຊ້ທີ່ດິນ ທີ່ໄດ້ຮັບຈາກການສືບທອດນັ້ນ ຊຶ່ງເນື້ອທີ່ດິນທີ່ໄດ້ຮັບຈາກການສືບທອດ ບວກກັບເນື້ອທີ່ດິນທີ່ນຳໃຊ້ຢູ່ຈະເກີນອັດຕາປະເພດທີ່ດິນ ທີ່ກົດໝາຍກຳນົດໄວ້ ກໍ່ຕາມ ແຕ່ຕ້ອງໄດ້ເສຍພາສີທີ່ດິນສ່ວນທີ່ເກີນອັດຕານັ້ນ ສູງກວ່າປົກກະຕິ.

ມາດຕາ 59 : ສິດຂອງການຈັດຕັ້ງຂອງລັດ, ການຈັດຕັ້ງການເມືອງ, ການຈັດຕັ້ງເສດຖະກິດ ແລະສັງຄົມ

ການຈັດຕັ້ງຂອງລັດ, ການຈັດຕັ້ງການເມືອງ, ແລະ ການຈັດຕັ້ງເສດຖະກິດ ແລະສັງຄົມ ທີ່ໄດ້ຮັບມອບທີ່ດິນໃຫ້ນຳໃຊ້ ແລະ ປົກປັກຮັກສານັ້ນ ມີສິດພຽງແຕ່ຄຸ້ມຄອງ, ນຳໃຊ້ ແລະ ປົກປັກຮັກສາເທົ່ານັ້ນ ແຕ່ຫາກບໍ່ມີສິດໂອນ, ໃຫ້ເຊົ່າ, ເອົາໄປເປັນຮຸ້ນ ຫລື ນຳໄປຄ້ຳປະກັນແຕ່ຢ່າງໃດ.

ມາດຕາ 60 : ພັນທະຂອງຜູ້ນຳໃຊ້ທີ່ດິນ

ຜູ້ນຳໃຊ້ທີ່ດິນມີພັນທະ ດັ່ງຕໍ່ໄປນີ້:
1. ນຳໃຊ້ທີ່ດິນໂດຍຖືກຕ້ອງຕາມເປົ້າໝາຍ;
2. ບໍ່ສ້າງຄວາມເສຍຫາຍໃຫ້ແກ່ຄຸນນະພາບດິນ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມທຳມະຊາດ ຫລື ສັງຄົມ;
3. ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
4. ປະຕິບັດສະພາວະຄວາມເປັນຈິງຕ້ອງຍອມຮັບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
5. ປະຕິບັດພັນທະ ກ່ຽວກັບທີ່ດິນດັ່ງຕໍ່ໄປນີ້: ພາສີທີ່ດິນ, ອາກອນຈາກການມອບໂອນ, ອະກອນລາຍໄດ້ຈາກການໃຫ້ເຊົ່າ, ອາກອນຈາກການສືບມູນມໍ່ລະດົກ, ຄ່າທຳນຽມໂອນຊື້, ຄ່າຈົດທະບຽນນິຕິກຳທີ່ດິນ, ຄ່າທຳນຽມອື່ນໆກ່ຽວກັບທີ່ດິນຕາມກຳນົດເວລາ;
6. ປະຕິບັດຕາມລະບຽບການອື່ນໆກ່ຽວກັບທີ່ດິນຢ່າງຄົບຖ້ວນ.

ມາດຕາ 61 : ສະພາວະຄວາມເປັນຈິງຕ້ອງຍອມຮັບ

ບຸກຄົນ ຫລື ການຈັດຕັ້ງໃດໜຶ່ງຫາກຖືກປິດລ້ອມດ້ວຍທີ່ດິນຂອງຜູ້ອື່ນ ໂດຍບໍ່ມີທາງຜ່ານອອກສູ່ທົ່ງທາງ ບຸກຄົນ ຫລື ການຈັດຕັ້ງນັ້ນ ກໍ່ມີສິດຮ້ອງຂໍທາງຜ່ານ ຈາກຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນທີ່ຢູ່ໃກ້ທົ່ງທາງກວ່າໝູ່. ຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນທີ່ຖືກຮ້ອງຂໍນັ້ນ ຕ້ອງອະນຸຍາດໃຫ້ທາງຜ່ານບ່ອນທີ່ຕົນເຫັນວ່າເໝາະສົມ ແລະ ມີສິດຮ້ອງຂໍການ

ທົດແທນຄ່າເສຍຫາຍຂອງຜົນລະປູກ, ສິ່ງທີ່ກໍ່ສ້າງ ຫລື ການພັດທະນາບົນທີ່ດິນບ່ອນທາງຜ່ານນັ້ນ.

ໃນກໍລະນີທີ່ມີການເນັ່ງສາຍໄຟຟ້າ, ສາຍໂທລະສັບ, ຂຸດຮ່ອງນ້ຳ, ວາງທໍ່ນ້ຳ ຫລື ທໍ່ນ້ຳປະປາ ແລະ ອື່ນໆ ຜ່ານທີ່ດິນຂອງຜູ້ ທີ່ໄດ້ຮັບສິດນຳໃຊ້ທີ່ດິນຜູ້ໃດຜູ້ໜຶ່ງ ຊຶ່ງພາໃຫ້ຕົ້ນໄມ້, ຜົນລະປູກ ຫລື ສິ່ງກໍ່ສ້າງຕ່າງໆ ຂອງຜູ້ກ່ຽວຖືກທຳລາຍ ຫລື ພາໃຫ້ມີຄວາມເສຍຫາຍ ບຸກຄົນຜູ້ນັ້ນມີສິດຮ້ອງຂໍເອົາຄ່າເສຍຫາຍ ທີ່ເນື່ອງມາຈາກການກະທຳນັ້ນ, ຖ້າວ່າຜູ້ໃຫ້ທາງຜ່ານນັ້ນ ຫາກໄດ້ຜົນປະໂຫຍດນຳແລ້ວ ກໍບໍ່ໃຫ້ຄິດໄລ່ຄ່າເສຍຫາຍນຳອີກ ເວັ້ນເສຍແຕ່ຄວາມເສຍຫາຍນັ້ນຫາກມີຫລວງຫລາຍ. ໃນກໍລະນີດັ່ງກ່າວ ແມ່ນໃຫ້ຄິດໄລ່ການທົດແທນຄ່າເສຍຫາຍນັ້ນຢ່າງເໝາະສົມ.

### ມາດຕາ 62 : ການເສຍສິດນຳໃຊ້ທີ່ດິນ

ຜູ້ທີ່ໄດ້ຮັບສິດນຳໃຊ້ທີ່ດິນ ຈະເສຍສິດດັ່ງກ່າວ ໃນກໍລະນີດັ່ງຕໍ່ໄປນີ້:

1. ນຳໃຊ້ທີ່ດິນ ທີ່ລັດມອບໃຫ້ນັ້ນ ບໍ່ຖືກຕ້ອງຕາມເປົ້າໝາຍ;
2. ບໍ່ເສຍພາສີທີ່ດິນຢ່າງຕໍ່ເນື່ອງ ສາມ ປີ;
3. ບໍ່ນຳໃຊ້ທີ່ດິນຕາມທີ່ໄດ້ບົ່ງໄວ້ໃນສັນຍາ ແລະ ກົດໝາຍວ່າດ້ວຍທີ່ດິນ;
4. ຜູ້ທີ່ສານຕັດສິນ ໃຫ້ເສຍສິດນຳໃຊ້ທີ່ດິນ.

### ມາດຕາ 63 : ການສິ້ນສຸດສິດນຳໃຊ້ທີ່ດິນ

ສິດນຳໃຊ້ທີ່ດິນຂອງບຸກຄົນ ຫລື ການຈັດຕັ້ງ ຈະສິ້ນສຸດລົງດັ່ງຕໍ່ໄປນີ້:

1. ສະຫລະສິດນຳໃຊ້ທີ່ດິນດ້ວຍຄວາມສະໝັກໃຈ;
2. ລັດໂອນເອົາທີ່ດິນຄືນ ເພື່ອນຳໃຊ້ໃນສາທາລະນະປະໂຫຍດ.

## ໝວດທີ 2
## ສິດ ແລະ ພັນທະຂອງຄົນຕ່າງດ້າວ, ຄົນບໍ່ມີສັນຊາດແລະ ຄົນຕ່າງປະເທດກ່ຽວກັບການເຊົ່າທີ່ດິນ

### ມາດຕາ 64 : ການເຊົ່າທີ່ດິນໂດຍຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ.

ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ລົງທຶນ ແລະ ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ ນັ້ນ ກໍສາມາດໃຫ້ເຊົ່າທີ່ດິນນຳລັດໄດ້,

ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ຕ້ອງການເຊົ່າ ທີ່ດິນ ທີ່ມີການພັດທະນາແລ້ວ ຈາກພົນລະເມືອງລາວ ແລະ ໄດ້ຮັບອະນຸຍາດຈາກອຳນາດການປົກຄອງ ແຂວງ, ກຳແພງນະຄອນ ຫລື ເຂດພິເສດ ບ່ອນທີ່ດິນຕັ້ງຢູ່. ສຳລັບຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ຕ້ອງການເຊົ່າທີ່ດິນ ທີ່ມີການພັດທະນາແລ້ວຈາກພົນລະເມືອງລາວ ແມ່ນອຳນາດການປົກຄອງແຂວງ, ກຳແພງນະຄອນ ຫລື ເຂດພິເສດ ບ່ອນທີ່ດິນຕັ້ງຢູ່ ສະເໜີໃຫ້ກະຊວງການເງິນເປັນຜູ້ອະນຸມັດ.

### ມາດຕາ 65 : ກຳນົດເວລາເຊົ່າທີ່ດິນ

ກຳນົດເວລາເຊົ່າທີ່ດິນຈາກລັດໂດຍຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ແມ່ນອີງໃສ່ລັກສະນະ, ຂະໜາດ ແລະ ເງື່ອນໄຂຂອງກິດຈະການ ແຕ່ສູງສຸດແມ່ນບໍ່ໃຫ້ເກີນ ສາມສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ກໍລະນີ ຕາມຄວາມເຫັນດີຂອງລັດຖະບານ.

ກຳນົດເວລາເຊົ່າທີ່ດິນ ທີ່ມີການພັດທະນາແລ້ວ ຈາກພົນລະເມືອງລາວໂດຍຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ສູງສຸດບໍ່ໃຫ້ເກີນ ຊາວ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ກໍລະນີ ຕາມຄວາມເຫັນດີຂອງອຳນາດການປົກຄອງແຂວງ, ກຳແພງນະຄອນ ຫລື ເຂດພິເສດ ບ່ອນທີ່ດິນຕັ້ງຢູ່. ສຳລັບຄົນຕ່າງປະເທດ ແລະການຈັດຕັ້ງຂອງບຸກຄົນດັ່ງກ່າວນັ້ນ ແມ່ນອຳນາດການປົກຄອງແຂວງ, ກຳແພງນະຄອນ ຫລືເຂດພິເສດ ບ່ອນທີ່ດິນນັ້ນຕັ້ງຢູ່ ສະເໜີໃຫ້ກະຊວງການເງິນເປັນຜູ້ຕົກລົງ.

ສຳລັບການກຳນົດເວລາໃຫ້ແກ່ຄົນຕ່າງປະເທດ ທີ່ມາລົງທຶນຢູ່ ສປປ ລາວ ເຊົ່າທີ່ດິນແມ່ນອີງຕາມລັກສະນະ, ຂະໜາດ ແລະ ເງື່ອນໄຂຂອງກິດຈະການ, ໂຄງການ ແຕ່ສູງສຸດບໍ່ໃຫ້ເກີນ ຫ້າສິບ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ກໍລະນີຕາມການຕົກລົງຂອງລັດຖະບານ. ສຳລັບເຂດເສດຖະກິດສະເພາະນັ້ນ ກຳນົດເວລາເຊົ່າທີ່ດິນສູງສຸດບໍ່ໃຫ້ເກີນ ເຈັດສິບຫ້າ ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ກໍລະນີໂດຍການຮັບຮອງຈາກສະພາແຫ່ງຊາດ.

ສຳລັບການເຊົ່າທີ່ດິນ ທີ່ມີເນື້ອທີ່ສູງກວ່າ ສິບພັນ ເຮັກຕາ ຂຶ້ນໄປ ຕ້ອງມີການຮັບຮອງຈາກສະພາແຫ່ງຊາດເຊັ່ນດຽວກັນ.

ສ່ວນການກຳນົດເວລາເຊົ່າຕົວຈິງນັ້ນ ແມ່ນໃຫ້ອີງໃສ່ລັກສະນະ, ຂະໜາດ ແລະ ເງື່ອນໄຂຂອງແຕ່ລະກິດຈະການ.

ສຳລັບສະຖານທູດ ຫລື ອົງການຈັດຕັ້ງສາກົນ ທີ່ຕ້ອງການນຳໃຊ້ທີ່ດິນຢູ່ ສປປ ລາວ ນັ້ນ ກໍສາມາດເຊົ່າ, ແລກປ່ຽນ, ໂອນຕາມການຕົກລົງລະຫວ່າງລັດຖະບານແຫ່ງ ສປປ ລາວກັບລັດຖະບານປະເທດທີ່ກ່ຽວຂ້ອງ. ໃນກໍລະນີນີ້ ກຳນົດເວລາເຊົ່າບໍ່ໃຫ້ເກີນ ເກົ້າສິບເກົ້າ ປີ.

### ມາດຕາ 66 : ພັນທະໃນການເຊົ່າທີ່ດິນຂອງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ

ພັນທະໃນການເຊົ່າທີ່ດິນຂອງຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ແມ່ນໃຫ້ປະຕິບັດດັ່ງຕໍ່ໄປນີ້:

1. ນຳໃຊ້ທີ່ດິນໂດຍຖືກຕ້ອງຕາມເປົ້າໝາຍ;
2. ບໍ່ສ້າງຄວາມເສຍຫາຍ ໃຫ້ແກ່ຄຸນນະພາບດິນ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມທຳມະຊາດ ຫລື ສັງຄົມ;
3. ບໍ່ລະເມີດສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
4. ປະຕິບັດສະພາວະຄວາມເປັນຈິງຕ້ອງຍອມຮັບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
5. ເສຍຄ່າເຊົ່າທີ່ດິນ ແລະ ຄ່າທຳນຽມອື່ນໆ ກ່ຽວກັບທີ່ດິນ;
6. ປະຕິບັດຕາມລະບຽບການອື່ນໆ ກ່ຽວກັບທີ່ດິນຢ່າງຄົບຖ້ວນ.

## ໝວດທີ 3
## ການທົດແທນຄ່າເສຍຫາຍ

### ມາດຕາ 67 : ສາເຫດຂອງການທົດແທນຄ່າເສັຽຫາຍ

ສາເຫດຂອງການທົດແທນຄ່າເສັຽຫາຍ ມີ ສາມ ປະເພດ ດັ່ງຕໍ່

ໄປນີ້:
1. ການກໍ່ຄວາມເສັຽຫາຍ ຍ້ອນການລະເມີດລະບຽບກົດໝາຍ;
2. ການກໍ່ຄວາມເສຍຫາຍ ຈາກສະພາວະຄວາມເປັນຈິງຕ້ອງຍອມຮັບ;
3. ການກໍ່ຄວາມເສຍຫາຍ ຈາກການໂອນເອົາທີ່ດິນຄືນ.

ມາດຕາ 68 : ການທົດແທນຄ່າເສຍຫາຍຍ້ອນການລະເມີດລະບຽບກົດໝາຍ

ບຸກຄົນ ຫລື ການຈັດຕັ້ງ ທີ່ນໍາໃຊ້ທີ່ດິນ ຫາກໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຫລື ສາທາລະນະ ຍ້ອນການລະເມີດລະບຽບກົດໝາຍແລ້ວ ຕ້ອງໄດ້ທົດແທນຄ່າເສຍຫາຍທີ່ເກີດຈາກການກະທໍາຂອງຕົນ. ໃນກໍລະນີທີ່ການລະເມີດນັ້ນ ຫາກກໍ່ຄວາມເສຍຫາຍ ຢ່າງຮ້າຍແຮງຕ້ອງໃຫ້ສານຕັດສິນຕາມກົດໝາຍ.

ມາດຕາ 69 : ການທົດແທນຄ່າເສຍຫາຍຈາກສະພາວະຄວາມເປັນຈິງຕ້ອງຍອມຮັບ

ບຸກຄົນ ຫລື ການຈັດຕັ້ງໃດ ຫາກໄດ້ຮັບສິດນໍາໃຊ້ທີ່ດິນຈາກສະພາວະຄວາມເປັນຈິງຕ້ອງຍອມຮັບຂອງຜູ້ອື່ນ ທີ່ໄດ້ຈົ່ງທາງທ່ຽວ, ຮ່ອງນ້ຳໃຫ້ແກ່ຕົນ ຊຶ່ງພາໃຫ້ພືນລະປູກ, ສິ່ງປຸກສ້າງຂອງຜູ້ອື່ນ ຫລື ຂອງສາທາລະນະ ໄດ້ຮັບຄວາມເສຍຫາຍແລ້ວ ບຸກຄົນ ຫລື ການຈັດຕັ້ງນັ້ນຕ້ອງໄດ້ໃຊ້ແທນຄ່າເສຍຫາຍດັ່ງກ່າວ ຕາມຄວາມເໝາະສົມ.

ມາດຕາ 70 : ການທົດແທນຄ່າເສຍຫາຍທີ່ເກີດຈາກ ການໂອນເອົາທີ່ດິນຄືນ

ເມື່ອມີຄວາມຈໍາເປັນທີ່ຕ້ອງໄດ້ນໍາໃຊ້ທີ່ດິນຂອງບຸກຄົນ ຫລື ການຈັດຕັ້ງໃດໜຶ່ງ ເພື່ອຮັບໃຊ້ສາທາລະນະປະໂຫຍດນັ້ນລັດ ຫລື ລວມໝູ່ຕ້ອງໄດ້ໃຊ້ແທນຄ່າເສຍຫາຍໃຫ້ແກ່ຜູ້ທີ່ຖືກໂອນເອົາທີ່ດິນຄືນນັ້ນຕາມຄວາມເໝາະສົມ.

ເພື່ອຮັບປະກັນການທົດແທນໃນການໂອນເອົາທີ່ດິນຄືນນັ້ນ ໃຫ້ມີທີ່ດິນສໍາຮອງໃນອັດຕາ ຫ້າສ່ວນຮ້ອຍ ຂອງເນື້ອທີ່ດິນທັງໝົດຂອງບ້ານ,ເມືອງ, ແຂວງ, ກໍາແພງນະຄອນ ຫລື ເຂດພິເສດນັ້ນ.

ໃນເວລາທີ່ຍັງບໍ່ທັນໄດ້ນໍາໃຊ້ທີ່ດິນດັ່ງກ່າວ ຈະໃຫ້ບຸກຄົນ ຫລື ການຈັດຕັ້ງເຊົ່າຊົ່ວຄາວກໍໄດ້.

ມາດຕາ 71 : ການກໍານົດຄ່າເສຍຫາຍ.

ໃນການທົດແທນຄ່າເສຍຫາຍນັ້ນຕ້ອງມີຄະນະກໍາມະການຊຶ່ງປະກອບດ້ວຍຜູ້ຕ່າງໜ້າຂອງພາກສ່ວນທີ່ກ່ຽວຂ້ອງທໍາການຕີລາຄາເພື່ອກໍານົດຄ່າເສຍຫາຍ.

## ໝວດທີ 4
## ທີ່ດິນ ທີ່ອໍານາດການປົກຄອງໄດ້ມອບສິດນໍາໃຊ້ໃຫ້ປະຊາຊົນໃນສະໄໝຕໍ່ສູ້ກູ້ຊາດ ແລະ ທີ່ດິນຂອງຜູ້ທີ່ປະໜີໄປຕ່າງປະເທດ

ມາດຕາ 72 : ທີ່ດິນທີ່ອໍານາດການປົກຄອງໄດ້ມອບສິດນໍາໃຊ້ໃຫ້ປະຊາຊົນນໍາໃຊ້ໃນສະໄໝຕໍ່ສູ້ກູ້ຊາດ

ລັດບໍ່ຮັບຮູ້ການທວງເອົາຄືນທີ່ດິນ ທີ່ອໍານາດການປົກຄອງໄດ້ມອບສິດນໍາໃຊ້ໃຫ້ປະຊາຊົນໃນສະໄໝຕໍ່ສູ້ກູ້ຊາດ.

ມາດຕາ 73 : ທີ່ດິນຂອງຜູ້ທີ່ປະໜີຈາກທ້ອງຖິ່ນຂອງຕົນໃນສະໄໝຕໍ່ສູ້ກູ້ຊາດ.

ລັດບໍ່ຮັບຮູ້ການທວງເອົາຄືນທີ່ດິນທີ່ເຈົ້າຂອງໄດ້ປະໜີຈາກທ້ອງຖິ່ນຂອງຕົນໃນສະໄໝຕໍ່ສູ້ກູ້ຊາດ.

ມາດຕາ 74 : ທີ່ດິນທີ່ໄດ້ມອບໃຫ້ເປັນຊັບສົມບັດສ່ວນລວມ.

ລັດບໍ່ຮັບຮູ້ການທວງເອົາຄືນທີ່ດິນຂອງບຸກຄົນ ແລະ ການຈັດຕັ້ງທີ່ໄດ້ມອບໃຫ້ເປັນຊັບສົມບັດສ່ວນລວມໃນສະໄໝຕໍ່ສູ້ກູ້ຊາດກໍ່ຄືໃນສະໄໝປັດຈຸບັນ.

ມາດຕາ 75 : ທີ່ດິນຂອງຜູ້ທີ່ປະໜີໄປຕ່າງປະເທດ.

ລັດບໍ່ຮັບຮູ້ການທວງເອົາຄືນທີ່ດິນຂອງຜູ້ທີ່ໄດ້ປະໜີໄປຕ່າງປະເທດ.

## ພາກທີ IV
## ການກວດກາການນໍາໃຊ້ທີ່ດິນ

ມາດຕາ 76 : ການກວດກາການນໍາໃຊ້ທີ່ດິນ

ການກວດກາ ການນໍາໃຊ້ທີ່ດິນ ແມ່ນການຕິດຕາມເບິ່ງການເຄື່ອນໄຫວຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ທີ່ດິນຂອງບຸກຄົນ ແລະ ການຈັດຕັ້ງ ເພື່ອໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ມີປະສິດທິຜົນ.

ມາດຕາ 77 : ອົງການກວດກາການນໍາໃຊ້ທີ່ດິນ

ການກວດກາ ການນໍາໃຊ້ທີ່ດິນແຕ່ລະປະເພດ ໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບກົດໝາຍແມ່ນໜ້າທີ່ຮັບຜິດຊອບຂອງອົງການຄຸ້ມຄອງທີ່ດິນປະເພດ ທີ່ກ່ຽວຂ້ອງຂັ້ນຕ່າງໆ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 8 ຂອງກົດໝາຍສະບັບນີ້.

ສໍາລັບການມອບ, ການໃຫ້ເຊົ່າທີ່ດິນ ແລະ ການຂຶ້ນທະບຽນທີ່ດິນ ແມ່ນກະຊວງການເງິນເປັນຜູ້ກວດກາ.

ມາດຕາ 78 : ສິດ ແລະ ໜ້າທີ່ ຂອງອົງການກວດການໍາໃຊ້ທີ່ດິນ

ອົງການກວດການໍາໃຊ້ທີ່ດິນມີສິດ ແລະ ໜ້າທີ່ ດັ່ງຕໍ່ໄປນີ້:
1. ທວງເອົາເອກະສານທີ່ຈໍາເປັນກ່ຽວກັບການກວດກາຈາກບຸກຄົນ ຫລື ການຈັດຕັ້ງ;
2. ລົງກວດກາສະຖານທີ່ທີ່ດິນ;
3. ໃຫ້ຄໍາແນະນໍາແກ່ຜູ້ນໍາໃຊ້ທີ່ດິນ;
4. ສັ່ງໂຈະ ຫລື ໃຫ້ຢຸດເຊົາຊົ່ວຄາວກິດຈະການ ກ່ຽວກັບການນໍາໃຊ້ທີ່ດິນ ທີ່ບໍ່ຖືກຕ້ອງ;
5. ສະເໜີໃຫ້ອົງການທີ່ກ່ຽວຂ້ອງພິຈາລະນາຖອນສິດນໍາໃຊ້ທີ່ດິນ;
6. ປະຕິບັດ ສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບການກວດກາການນໍາໃຊ້ທີ່ດິນ.

## ພາກທີ V
## ການແກ້ໄຂບັນຫາທີ່ດິນ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ.

ມາດຕາ 79 : ການແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນ

ການແກ້ໄຂບັນຫາທີ່ມີລັກສະນະບໍລິຫານກ່ຽວກັບທີ່ດິນ: ການນໍາໃຊ້ທີ່ດິນໂດຍບໍ່ໄດ້ຮັບອະນຸຍາດ, ການນໍາໃຊ້ທີ່ດິນໂດຍບໍ່ຖືກຕ້ອງຕາມເປົ້າໝາຍ, ການບໍ່ນໍາໃຊ້ທີ່ດິນຕາມກໍານົດເວລາ ພາຍຫລັງທີ່ໄດ້ຮັບມອບ, ການບໍ່ເສຍພາສີ, ອາກອນ ຫລື ຄ່າທໍານຽມທີ່ດິນຕາມລະບຽບການທີ່ໄດ້ກໍານົດໄວ້ ແລະ ບັນຫາທີ່ດິນອື່ນໆທີ່ມີລັກສະນະບໍລິຫານນັ້ນ ແມ່ນອົງການຄຸ້ມຄອງທີ່ດິນທີ່ກ່ຽວຂ້ອງ ໂດຍປະສານສົມທົບກັບອໍານາດການປົກຄອງຂັ້ນຂອງຕົນບ່ອນທີ່ດິນຕັ້ງຢູ່ເປັນຜູ້ແກ້ໄຂ.

ຖ້າວ່າຜູ້ນໍາໃຊ້ທີ່ດິນ ຫາກບໍ່

ພໍໃຈຕໍ່ຄຳຕົກລົງແກ້ໄຂແລ້ວ ກໍ່ມີສິດສະເໜີຕໍ່ອົງການຂັ້ນເທິງຖັດນັ້ນເປັນຜູ້ແກ້ໄຂ.

**ມາດຕາ 80 : ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະທາງແພ່ງ ກ່ຽວກັບທີ່ດິນ.**

ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະທາງແພ່ງກ່ຽວກັບທີ່ດິນ: ການສືບທອດມູນມໍຣະດົກທີ່ດິນ ທີ່ມີການພັດທະນາແລ້ວ, ການໂອນສິດນຳໃຊ້ທີ່ດິນ ແລະ ສັນຍາທາງແພ່ງອື່ນໆ ກ່ຽວກັບທີ່ດິນນັ້ນ ແມ່ນສານປະຊາຊົນເປັນຜູ້ພິຈາລະນາ ຕັດສິນຕາມຂັ້ນຕອນຂອງກົດໝາຍ.

ການແກ້ໄຂຂໍ້ຂັດແຍ່ງ ທີ່ມີລັກສະນະທາງແພ່ງ ກ່ຽວກັບທີ່ດິນນັ້ນ ແມ່ນໃຫ້ອຳນາດການປົກຄອງບ່ອນທີ່ດິນຕັ້ງຢູ່ ທຳການໄກ່ເກ່ຍເສຍກ່ອນ, ຖ້າຫາກບໍ່ສາມາດຕົກລົງກັນໄດ້ຈຶ່ງທຳການຮ້ອງຟ້ອງຂຶ້ນສານປະຊາຊົນຕັດສິນຕາມກົດໝາຍ.

**ມາດຕາ 81 : ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫລື ການຈັດຕັ້ງ ທີ່ນຳໃຊ້ທີ່ດິນໂດຍຖືກຕ້ອງຕາມລະບຽບກົດໝາຍ, ປົກປັກຮັກສາ, ພັດທະນາທີ່ດິນຢ່າງມີປະສິດທິຜົນຈະໄດ້ຮັບການຍ້ອງຍໍ, ໄດ້ຮັບຄວາມສະດວກໃນການເຊົ່າທີ່ດິນຕື່ມ ຫລື ເຊົ່າຕໍ່ ແລະ ນະໂຍບາຍອື່ນໆ ຊຶ່ງລັດຖະບານເປັນຜູ້ກຳນົດ.

**ມາດຕາ 82 : ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫລື ການຈັດຕັ້ງໃດໃນການນຳໃຊ້, ການປົກປັກຮັກສາ ແລະ ພັດທະນາທີ່ດິນ ຫາກໄດ້ລະເມີດ ລະບຽບກົດໝາຍ ກ່ຽວກັບທີ່ດິນ, ກໍ່ຄວາມເສຍຫາຍ ໃຫ້ແກ່ສາທາລະນະ, ສິ່ງແວດລ້ອມ, ຊັບສິນ, ສຸຂະພາບ ຫລື ຊີວິດຂອງຜູ້ອື່ນຈະຖືກປັບໃໝ ຫລື ລົງໂທດທາງອາຍາ ແລ້ວແຕ່ໃນກໍລະນີໜັກ ຫລື ເບົາ ລວມທັງໃຊ້ຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນອີກດ້ວຍ.

ນອກຈາກໂທດຕົ້ນຕໍທີ່ໄດ້ກ່າວມາຂ້າງເທິງນີ້ແລ້ວຜູ້ກະທຳຜິດອາດຈະໄດ້ຮັບໂທດເພີ່ມອີກ: ຖືກຖອນໃບຢັ້ງຢືນທີ່ດິນ, ໃບຕາດິນ ຫລື ໃບອະນຸຍາດອື່ນໆ ກ່ຽວກັບການນຳໃຊ້ທີ່ດິນ.

**ມາດຕາ 83 : ມາດຕະການທາງອາຍາ**

ໃນການປະຕິບັດວຽກງານກ່ຽວກັບທີ່ດິນ, ບຸກຄົນໃດຫາກໄດ້ລະເມີດ ລະບຽບກົດໝາຍ: ສວຍໃຊ້ໜ້າທີ່ຕຳແໜ່ງ, ໃຊ້ອຳນາດເກີນຂອບເຂດ, ຮັບສິນບົນ, ປອມແປງເອກະສານ, ອອກເອກະສານທີ່ດິນໂດຍບໍ່ຖືກຕ້ອງ ເພື່ອຫາຜົນປະໂຫຍດສ່ວນຕົວໄດ້ກໍ່ຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ ລວມໝູ່ ຫລື ຂອງບຸກຄົນອື່ນ ຈະຖືກປະຕິບັດວິໄນ ຫລື ລົງໂທດທາງອາຍາ ແລ້ວແຕ່ກໍລະນີໜັກ ຫລື ເບົາ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

## ພາກທີVI
## ບົດບັນຍັດສຸດທ້າຍ

**ມາດຕາ 84 : ການຈັດຕັ້ງປະຕິບັດ**

ພາຍຫລັງການປະກາດໃຊ້ກົດໝາຍ ວ່າດ້ວຍທີ່ດິນນີ້ແລ້ວ ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີໜ້າທີ່ອອກຂໍ້ກຳນົດລະອຽດເພື່ອຈັດຕັ້ງປະຕິບັດກົດໝາຍສະບັບນີ້ ແລະ ໃຫ້ດຳເນີນກວດກາກ່ຽວກັບທີ່ດິນຢ່າງເປັນລະບົບໃນຂອບເຂດທົ່ວປະເທດ ໂດຍສະເພາະ ແມ່ນການກວດກາ ກ່ຽວກັບທີ່ມາຂອງສິດນຳໃຊ້ທີ່ດິນ, ຂະໜາດຂອງທີ່ດິນ, ການນຳໃຊ້ທີ່ດິນ.

**ມາດຕາ 85 : ກຳນົດເວລາແກ້ໄຂກ່ຽວກັບທີ່ດິນ**

ພົນລະເມືອງລາວ ທີ່ມີທີ່ດິນຢ່າງຖືກຕ້ອງຕາມລະບຽບກົດໝາຍໃນໄລຍະຜ່ານມາ, ແຕ່ມີເນື້ອທີ່ເກີນກວ່າກົດໝາຍທີ່ດິນໄດ້ກຳນົດໄວ້ຕ້ອງແກ້ໄຂໃຫ້ຖືກຕ້ອງຕາມກົດໝາຍທີ່ດິນສະບັບນີ້ ພາຍໃນກຳນົດ ສາມ ປີ ນັບແຕ່ມື້ປະກາດໃຊ້ກົດໝາຍສະບັບນີ້ເປັນຕົ້ນໄປ. ຖ້າກາຍກຳນົດນີ້ແລ້ວ ຜູ້ກ່ຽວຈະໝົດສິດໃນການນຳໃຊ້ທີ່ດິນ ສ່ວນເກີນດັ່ງກ່າວ, ຖ້າຍັງຢາກສືບຕໍ່ນຳໃຊ້ທີ່ດິນນັ້ນຢູ່ຜູ້ກ່ຽວກໍຈະມີບຸລິມະສິດໃນການຂໍເຊົ່າຈາກລັດ.

ພາຍຫລັງການປະກາດໃຊ້ກົດໝາຍສະບັບນີ້ຜູ້ທີ່ມີທີ່ດິນເກີນອັດຕາທີ່ກົດໝາຍໄດ້ກຳນົດໄວ້ຍ້ອນຈຳນວນສະມາຊິກໃນຄອບຄົວມີການປ່ຽນແປງນັ້ນກໍຕ້ອງປະຕິບັດໃຫ້ຖືກຕ້ອງຕາມອັດຕາທີ່ດິນພາຍໃນກຳນົດ ສາມ ປີ ນັບແຕ່ມື້ສະມາຊິກຂອງຄອບຄົວໄດ້ມີການປ່ຽນແປງເປັນຕົ້ນໄປ.

ສຳລັບຄົນຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ແລະ ການຈັດຕັ້ງຂອງບຸກຄົນດັ່ງກ່າວ ທີ່ມີທີ່ດິນໃນໄລຍະຜ່ານມາ ຕ້ອງໄດ້ແກ້ໄຂໃຫ້ຖືກຕ້ອງຕາມກົດໝາຍທີ່ດິນສະບັບນີ້ ພາຍໃນກຳນົດເວລາ ສາມ ປີ ນັບແຕ່ມື້ປະກາດໃຊ້ກົດໝາຍສະບັບນີ້ ເປັນຕົ້ນໄປ. ຖ້າກາຍກຳນົດນີ້ແລ້ວ ຜູ້ກ່ຽວຈະໝົດສິດ ໃນການນຳໃຊ້ທີ່ດິນດັ່ງກ່າວ, ຖ້າຢາກສືບຕໍ່ຮັບໃຊ້ ກໍ່ຈະມີບຸລິມະສິດ ໃນການຂໍເຊົ່າທີ່ດິນ ທີ່ຕົນນຳໃຊ້ມານັ້ນຈາກລັດ.

ສຳລັບສະຖານທູດ ແລະ ອົງການຈັດຕັ້ງສາກົນນັ້ນ ລັດຖະບານຈະເປັນຜູ້ຕົກລົງ.

**ມາດຕາ 86 : ຜົນສັກສິດ**

ກົດໝາຍທີ່ດິນສະບັບນີ້ ມີຜົນສັກສິດ ນັບແຕ່ມື້ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດໝາຍທີ່ດິນສະບັບນີ້ ປ່ຽນແທນຂໍ້ກຳນົດຊົ່ວຄາວສະບັບເລກທີ 22 / ປສລ ລົງວັນທີ 21 ມີນາ 1989 ວ່າດ້ວຍການຄຸ້ມຄອງ ແລະ ການນຳໃຊ້ທີ່ດິນກະສິກຳໃນ ສປປ ລາວ, ດຳລັດສະບັບເລກທີ 129 / ນຍ ລົງວັນທີ 18 ພະຈິກ 1979 ວ່າດ້ວຍທີ່ດິນ ແລະ ເຮືອນ ຂອງພວກປະຕິການທີ່ສານຕັດສິນ, ພວກໂຕນໜີ ແລະ ສຳມະນາກອນ ແລະ ດຳລັດສະບັບເລກທີ 99/ນຍ ລົງວັນທີ 19 ທັນວາ 1992 ວ່າດ້ວຍທີ່ດິນ, ບັນດາຂໍ້ກຳນົດບົດບັນຍັດອື່ນໆ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ 12 ເມສາ 1997
ປະທານສະພາແຫ່ງຊາດ
ສະໝານ ວິຍະເກດ

## ກົດໝາຍ
## ເລກທີ 04/97/ສພຊ
## ວ່າດ້ວຍບໍ່ແຮ່

### ໝວດທີ I
### ບົດບັນຍັດທົ່ວໄປ

ມາດຕາ 1 : ໜ້າທີ່ຂອງກົດໝາຍວ່າດ້ວຍບໍ່ແຮ່.

ກົດໝາຍວ່າດ້ວຍບໍ່ແຮ່ ມີໜ້າທີ່ກຳນົດ ລະບອບການຄຸ້ມຄອງ, ການປົກປັກຮັກສາ, ການສຳຫລວດ, ການຂຸດຄົ້ນ ແລະ ການປຸງແຕ່ງ ແຮ່ທາດເປັນສິນຄ້າພາຍໃນ ແລະ ຂາອອກໂດຍການນຳໃຊ້ທ່າແຮງ ຂອງຊັບພະຍາກອນທຳມະຊາດ ປະກອບສ່ວນເຂົ້າໃສ່ຂະບວນວິວັດແຫ່ງການຫັນປ່ຽນເປັນ ອຸດສາຫະກຳ ແລະ ປົວແປງຊີວິດການເປັນຢູ່ຂອງປະຊາຊົນ.

ມາດຕາ 2 : ແຮ່ທາດ.

ແຮ່ທາດ ແມ່ນຊັບພະຍາກອນທຳມະຊາດ ທີ່ມີຈຸດສະເພາະຊຶ່ງສ້າງຄືນໃໝ່ບໍ່ໄດ້, ແມ່ນລັກສະນະ ທາງດ້ານເຄມີ ແລະ ຟີຊິກ ຢູ່ໃນສະພາບແຂງ, ສະພາບແຫລວ ຫລື ເປັນອາຍ: ຄຳ, ເງິນ, ທອງ, ເຫລັກ, ແກ້ວປະເສີດ, ດິນຊາຍ, ດິນກໍ່ສ້າງ, ຫີນກໍ່ສ້າງ, ຖ່ານຫີນ, ອາຍແກສ ແລະ ນ້ຳມັນ ທຳມະຊາດ ລວມທັງນ້ຳແຮ່ທາດ, ນ້ຳອຸ່ນ ແລະ ນ້ຳຮ້ອນທຳມະຊາດ.

ມາດຕາ 3 : ກຳມະສິດ ຕໍ່ ຊັບພະຍາກອນແຮ່ທາດ.

ຊັບພະຍາກອນແຮ່ທາດທັງໝົດທີ່ມີຢູ່ໜ້າດິນ, ພື້ນດິນ ຫລື ພື້ນນ້ຳ ໃນດິນແດນຂອງ ສປປ ລາວ ແມ່ນກຳມະສິດ ຂອງ ວົງຄະນະຍາດແຫ່ງຊາດ ແລະ ຢູ່ພາຍໃຕ້ການຄຸ້ມຄອງຂອງ ລັດຢ່າງລວມສູນ ເປັນເອກະພາບ.

ມາດຕາ 4 : ການສົ່ງເສີມ, ການປົກປັກຮັກສາ ແລະ ການພັດທະນາຊັບພະຍາກອນແຮ່ທາດ.

ລັດມີນະໂຍບາຍສົ່ງເສີມບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດໃຫ້ປົກປັກຮັກສາ ແລະ ພັດທະນາຊັບພະຍາກອນ ແຮ່ທາດໃຫ້ມີປະສິດທິຜົນ.

ມາດຕາ 5 : ການປົກປັກຮັກສາສິ່ງແວດລ້ອມ.

ຜູ້ໄດ້ຮັບສິດດຳເນີນທຸລະກິດບໍ່ແຮ່ ຕ້ອງປະຕິບັດວິທີການ ແລະ ມາດຕະການຈຳກັດການສູນເສຍຊັບພະຍາກອນທຳມະຊາດ ແລະ ຜົນກະທົບອັນບໍ່ດີ ຕໍ່ສິ່ງແວດລ້ອມ.

ມາດຕາ 6 : ການປົກປ້ອງສິດຜົນປະໂຫຍດ ຂອງຜູ້ດຳເນີນທຸລະກິດບໍ່ແຮ່ ແລະ ຜົນປະໂຫຍດ ຂອງປະຊາຊົນ ໃນທ້ອງຖິ່ນ.

ລັດປົກປ້ອງສິດຜົນປະໂຫຍດຂອງຜູ້ດຳເນີນທຸລະກິດບໍ່ແຮ່ ແລະ ຜົນປະໂຫຍດ ຂອງປະຊາຊົນໃນທ້ອງຖິ່ນນັ້ນ ຕາມລະບຽບກົດໝາຍຂອງ ສປປ ລາວ.

ມາດຕາ 7 : ຂອບເຂດການນຳໃຊ້ກົດໝາຍ.

ກົດໝາຍສະບັບນີ້ ແມ່ນນຳໃຊ້ສຳລັບການຄຸ້ມຄອງ ແລະ ການຂຸດຄົ້ນ ບໍ່ແຮ່ ເລີ່ມຕົ້ນແຕ່ ການຊອກຄົ້ນ, ການສຳຫລວດ ທໍລະນີສາດຂັ້ນພື້ນຖານ ແຫລ່ງຊັບພະຍາກອນທຳມະຊາດໄປເຖິງ ການຂຸດຄົ້ນ, ແລະ ການປຸງແຕ່ງ ແຮ່ທາດຢູ່ ສປປລາວ ເວັ້ນເສຍແຕ່ແຮ່ທາດປະເພດອາຍແກສ ແລະ ນ້ຳມັນທຳມະຊາດ ຊຶ່ງມີຂໍ້ກຳນົດສະເພາະຕ່າງຫາກ.

### ໝວດທີ II
### ການສຳຫລວດທໍລະນີສາດ ຂັ້ນພື້ນຖານ ແລະ ການປົກປັກຮັກສາຊັບພະຍາກອນແຮ່ທາດ

ມາດຕາ 8: ການສຳຫລວດທໍລະນີສາດ ຂັ້ນພື້ນຖານ

ການສຳຫລວດທໍລະນີສາດຂັ້ນພື້ນຖານ ແມ່ນການຊອກຮູ້ເກັບກຳຂໍ້ມູນເບື້ອງຕົ້ນກ່ຽວກັບຈຸດທີ່ເປັນປະກົດການແຮ່ທາດ ແລະໂຄງສ້າງທໍລະນີສາດ ເພື່ອສ້າງເປັນແຜນທີ່ ທໍລະນີສາດພື້ນຖານ.

ລັດຖະບານມອບໃຫ້ກະຊວງອຸດສາຫະກຳ-ຫັດຖະກຳ ເປັນຜູ້ດຳເນີນ ການສຳຫລວດທໍລະນີສາດຂັ້ນພື້ນຖານໃນຂອບເຂດທົ່ວປະເທດ ໂດຍປະສານສົມທົບກັບອົງການທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ.

ມາດຕາ 9 : ໝວດແຮ່ທາດ.

ເພື່ອສົ່ງເສີມການພັດທະນາຂະແໜງອຸດສາຫະກຳບໍ່ແຮ່ນັ້ນ ລັດຖະບານໄດ້ຈັດວາງແຮ່ທາດອອກເປັນສີ່ໝວດດັ່ງລຸ່ມນີ້:

1. ໝວດແຮ່ທາດໂລຫະ;
2. ໝວດແຮ່ທາດອະໂລຫະ;
3. ໝວດແຮ່ທາດພະລັງເຊື້ອໄຟ;
4. ໝວດແຮ່ທາດແຫລວ.

<u>ໝວດແຮ່ທາດໂລຫະປະກອບມີດັ່ງນີ້:</u>

- ຄຳ, ເງິນ, ທອງ, ສັງກະສີ, ເຫລັກ, ຊືນ, ກົ່ວ ແລະ ອື່ນໆ.

<u>ໝວດແຮ່ທາດອະໂລຫະປະກອບມີດັ່ງນີ້:</u>

- ເພັດ, ແກ້ວພິລາ, ແກ້ວມໍຣະກົດ, ຫີນປູນ, ຫີນແຮ່, ດິນຊາຍ, ຫີນກາວ, ດິນກໍ່ສ້າງ, ຫີນກໍ່ສ້າງ, ແລະ ອື່ນໆ.

<u>ໝວດແຮ່ທາດພະລັງເຊື້ອໄຟປະກອບມີດັ່ງນີ້:</u>

- ຖ່ານຫີນ, ອາຍແກສ ແລະ ນ້ຳມັນທຳມະຊາດ.

<u>ໝວດແຮ່ທາດແຫລວ ປະກອບມີດັ່ງນີ້:</u>

- ນ້ຳແຮ່ທາດ, ນ້ຳອຸ່ນ ແລະ ນ້ຳຮ້ອນທຳມະຊາດ.

ລັດຖະບານ ເປັນຜູ້ກຳນົດລະອຽດ ກ່ຽວກັບແຮ່ທາດຕ່າງໆ ໃນແຕ່ລະໝວດ.

ມາດຕາ 10 : ແຮ່ທາດທີ່ສະຫງວນ ຫລື ຫວງຫ້າມ.

ເພື່ອປົກປັກຮັກສາການນຳໃຊ້ຢ່າງມີປະສິດທິຜົນ ແລະ ຍາວນານນັ້ນ ລັດຖະບານຈະເປັນຜູ້ກຳນົດ ໃນແຕ່ລະໄລຍະເພື່ອອອກບັນຊີລາຍຊື່ແຮ່ທາດໃດໜຶ່ງໃຫ້ເປັນແຮ່ທາດທີ່ສະຫງວນຫລື ຫວງຫ້າມການສົ່ງອອກ, ນຳເຂົ້າ ຫລື ຈຳກັດການສົ່ງອອກແຮ່ທາດໃນຮູບວັດຖຸດິບ.

ມາດຕາ 11 : ການຮັກສາ ແລະ ນຳໃຊ້ຂໍ້ມູນຂ່າວສານກ່ຽວກັບຊັບພະຍາກອນແຮ່ທາດ.

ການຮັກສາ ແລະ ນຳໃຊ້ຂໍ້ມູນຂ່າວສານ ແລະ ຕົວຢ່າງກ່ຽວກັບ ຊັບພະຍາກອນແຮ່ທາດ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບການສະເພາະກ່ຽວກັບແຮ່ທາດ.

ບຸກຄົນ ຫລື ການຈັດຕັ້ງ ຕ້ອງລາຍງານໃຫ້ຂະແໜງການທີ່ກ່ຽວຂ້ອງຊາບກ່ຽວກັບຂໍ້ມູນຂ່າວສານ ແລະ ຕົວຢ່າງຊັບພະຍາກອນແຮ່ທາດ ທີ່ມີຄວາມໝາຍທາງດ້ານວິທະຍາສາດ ຫລື ທີ່ມີຄຸນຄ່າສູງ ແລະ ຫາຍາກ.

ຫ້າມ ບຸກຄົນ ຫລື ການຈັດຕັ້ງ ຊຸກເຊື່ອງ, ທຳລາຍເຮັດໃຫ້ຄຸນຄ່າ

ຫລຸດລົງ ຫລື ຄ້າຂາຍຕົວຢ່າງດັ່ງກ່າວຢ່າງຜິດກົດໝາຍ, ມີແຕ່ລັດເທົ່ານັ້ນຈຶ່ງມີສິດ ຊື້ຕົວຢ່າງທີ່ມີຄວາມໝາຍ ທາງດ້ານວິທະຍາສາດ ຫລື ທີ່ມີຄຸນຄ່າສູງ ແລະ ຫາຍາກ.

ລັດຖະບານເປັນຜູ້ກຳນົດບັນຊີລາຍຊື່ ແລະ ລັກສະນະ ຂອງຕົວຢ່າງຊັບພະຍາກອນແຮ່ທາດທີ່ກ່າວມາຂ້າງເທິງນີ້.

**ມາດຕາ 12 : ການປົກປັກຮັກສາແຫລ່ງຊັບພະຍາກອນແຮ່ທາດ**

ລັດຖະບານມອບສິດໃຫ້ ກະຊວງອຸດສາຫະກຳ-ຫັດຖະກຳ ເປັນຜູ້ປົກປັກຮັກສາແຫລ່ງຊັບພະຍາກອນແຮ່ທາດໃນຂອບເຂດທົ່ວປະເທດ ໂດຍປະສານສົມທົບກັບອົງການທີ່ກ່ຽວຂ້ອງດ້ວຍການວາງລະບຽບການສະເພາະ.

## ໝວດທີIII
## ການຈັດແບ່ງເຂດຊັບພະຍາກອນແຮ່ທາດ

**ມາດຕາ 13 : ເຂດຊັບພະຍາກອນແຮ່ທາດ.**

ເຂດຊັບພະຍາກອນແຮ່ທາດແມ່ນເຂດທີ່ຜ່ານການສຳຫລວດທໍລະນີສາດຂັ້ນພື້ນຖານຊຶ່ງເຫັນວ່າ ມີຈຸດທີ່ເປັນປາກົດການແຮ່ທາດທີ່ມີຄວາມໝາຍທາງດ້ານເສດຖະກິດເພື່ອສືບຕໍ່ສຶກສາຂໍ້ມູນຂັ້ນລະອຽດ.

ເຂດຊັບພະຍາກອນແຮ່ທາດແບ່ງອອກເປັນ ສີ່ເຂດຄື:

1. ເຂດທີ່ອະນຸຍາດໃຫ້ດຳເນີນທຸລະກິດ ບໍ່ແຮ່;
2. ເຂດທີ່ສະຫງວນ;
3. ເຂດທີ່ຫວງຫ້າມ;
4. ເຂດທີ່ມີທາດເບື່ອ.

**ມາດຕາ 14 : ເຂດທີ່ອະນຸຍາດໃຫ້ດຳເນີນທຸລະກິດ ບໍ່ແຮ່.**

ເຂດທີ່ອະນຸຍາດໃຫ້ດຳເນີນທຸລະກິດ ບໍ່ແຮ່ ແມ່ນເຂດຊັບພະຍາກອນແຮ່ທາດ ທີ່ລັດຖະບານກຳນົດໃຫ້ດຳເນີນທຸລະກິດບໍ່ແຮ່ໄດ້.

**ມາດຕາ 15 : ເຂດທີ່ສະຫງວນ.**

ເຂດທີ່ສະຫງວນ ແມ່ນເຂດຊັບພະຍາກອນແຮ່ທາດທີ່ສະຫງວນໄວ້ເພື່ອດຳເນີນການຂຸດຄົ້ນແຮ່ທາດສະເພາະໃດໜຶ່ງ.

**ມາດຕາ 16 : ເຂດທີ່ຫວງຫ້າມ**

ເຂດທີ່ຫວງຫ້າມແມ່ນເຂດຊັບພະຍາກອນແຮ່ທາດທີ່ຫ້າມດຳເນີນທຸລະກິດ ບໍ່ແຮ່:
ເຂດທີ່ມີຄວາມໝາຍທາງດ້ານວັດທະນະທຳ, ເຂດປ່າປ້ອງກັນ, ເຂດທີ່ມີຄວາມສຳຄັນດ້ານປ້ອງກັນຊາດປ້ອງກັນຄວາມສະຫງົບ ແລະ ອື່ນໆ.

**ມາດຕາ 17 : ເຂດທີ່ມີທາດເບື່ອ.**

ເຂດທີ່ມີທາດເບື່ອ ແມ່ນເຂດທີ່ມີຊັບພະຍາກອນແຮ່ທາດທີ່ມີທາດເບື່ອ ຫລື ແຮ່ທາດເບື່ອອື່ນໆໃນຂອບເຂດນັ້ນ ຊຶ່ງກະຊວງອຸດສາຫະກຳ-ຫັດຖະກຳຈະເປັນຜູ້ແຈ້ງໃຫ້ອຳນາດການປົກຄອງທ້ອງຖິ່ນນັ້ນຊາບ ເພື່ອມີມາດຕະການປົກປັກຮັກສາຄວາມປອດໄພ ແລະ ສຸຂະພາບ ຂອງປະຊາຊົນ ໂດຍປະສານສົມທົບກັບອົງການທີ່ກ່ຽວຂ້ອງ.

## ໝວດທີIV
## ການດຳເນີນທຸລະກິດ ບໍ່ແຮ່

**ມາດຕາ 18 : ການຂຸດຄົ້ນ ແຮ່ທາດ.**

ການຂຸດຄົ້ນແຮ່ທາດ ແມ່ນການເຄື່ອນໄຫວ ທີ່ປະກອບດ້ວຍການຂຸດຄົ້ນ, ການສຳຫລວດ, ການຂຸດຄົ້ນ, ການປຸງແຕ່ງ ແລະ ການຊື້ຂາຍແຮ່ທາດ.

ການຂຸດຄົ້ນແຮ່ທາດ ປະກອບດ້ວຍ ສອງຮູບການ ດັ່ງນີ້:

1. ຮູບການທຸລະກິດບໍ່ແຮ່ ດ້ວຍການໃຊ້ພາຫະນະກົນຈັກ;
2. ຮູບການຂຸດຄົ້ນແຮ່ທາດ ດ້ວຍໃຊ້ເຄື່ອງມືຫັດຖະກຳເປັນອາຊີບ ຫລື ບໍ່ເປັນອາຊີບ.

**ມາດຕາ 19 : ບໍ່ແຮ່.**

ບໍ່ແຮ່ແມ່ນແຫລ່ງສະສົມແຮ່ທາດ ຕາມທຳມະຊາດ ທີ່ມີຄວາມໝາຍສຳຄັນທາງດ້ານເສດຖະກິດ ຊຶ່ງມີຢູ່ໜ້າດິນ, ພື້ນດິນ ຫລື ພື້ນນ້ຳ.

**ມາດຕາ 20 : ຮູບການທຸລະກິດບໍ່ແຮ່ ດ້ວຍການໃຊ້ພາຫະນະກົນຈັກ.**

ຮູບການທຸລະກິດບໍ່ແຮ່ ດ້ວຍການໃຊ້ພາຫະນະກົນຈັກ ແບ່ງອອກເປັນສາມຂະໜາດດັ່ງນີ້:

1. ຮູບການທຸລະກິດ ບໍ່ແຮ່ ຂະໜາດໃຫຍ່;
2. ຮູບການທຸລະກິດບໍ່ແຮ່ ຂະໜາດກາງ;
3. ຮູບການທຸລະກິດບໍ່ແຮ່ ຂະໜາດນ້ອຍ.

ຮູບການທຸລະກິດບໍ່ແຮ່ແຕ່ລະຂະໜາດນັ້ນ ລັດຖະບານເປັນຜູ້ກຳນົດລະອຽດໂດຍອີງໃສ່ທຶນ, ປະເພດແຮ່ທາດ, ເນື້ອທີ່ ແລະ ບໍລິມາດສະສົມຂອງແຮ່ທາດ.

**ມາດຕາ 21 : ການລົງທຶນໃສ່ທຸລະກິດບໍ່ແຮ່.**

ການລົງທຶນໃສ່ທຸລະກິດບໍ່ແຮ່. ຢູ່ ສປປ ລາວ ແມ່ນດຳເນີນໂດຍ:

1. ລັດເປັນຜູ້ລົງທຶນແຕ່ຜູ້ດຽວ;
2. ລັດລົງທຶນກັບພາກສ່ວນອື່ນ ຢູ່ພາຍໃນ ຫລື ຕ່າງປະເທດ;
3. ຜູ້ລົງທຶນລວມໝູ່ ຫລື ເອກະຊົນຢູ່ພາຍໃນປະເທດ.

**ມາດຕາ 22 : ຂັ້ນຕອນ ການດຳເນີນ ທຸລະກິດ ບໍ່ແຮ່**

ຂັ້ນຕອນ ການດຳເນີນ ທຸລະກິດ ບໍ່ແຮ່ ປະກອບດ້ວຍການຊອກຄົ້ນ, ການສຳຫລວດ, ການຂຸດຄົ້ນ, ການປຸງແຕ່ງ ແລະ ການຊື້ຂາຍ ແຮ່ທາດ.

ການຊອກຄົ້ນ, ການສຳຫລວດ ແລະ ການຂຸດຄົ້ນ ຈະອະນຸຍາດ ໃຫ້ສະເພາະແຕ່ຢູ່ໃນເຂດທີ່ບໍ່ມີຜູ້ອື່ນ ພວມດຳເນີນທຸລະກິດ ບໍ່ແຮ່ດັ່ງກ່າວຢູ່.

**ມາດຕາ 23 : ວິທີການດຳເນີນທຸລະກິດບໍ່ແຮ່.**

ບຸກຄົນ ຫລື ການຈັດຕັ້ງທີ່ມີຈຸດປະສົງຢາກດຳເນີນທຸລະກິດບໍ່ແຮ່ ຕ້ອງໄດ້ຂໍອະນຸຍາດທຳການຊອກຄົ້ນເກັບກຳຂໍ້ມູນ ກ່ຽວກັບ ແຮ່ທາດ. ເມື່ອເຫັນວ່າມີຂໍ້ມູນພຽງພໍກໍໃຫ້ຂໍອະນຸຍາດສຳຫລວດ.

ພາຍຫລັງ ໄດ້ສິ້ນສຸດການສຳຫລວດແລ້ວຖ້າຫາກມີຈຸດປະສົງຢາກດຳເນີນການຂຸດຄົ້ນ, ຕ້ອງໄດ້ເຮັດບົດວິພາກເສດຖະກິດ- ເຕັກນິກ, ຄິດໄລ່ປະສິດທິຜົນເສດຖະກິດ, ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ, ຕໍ່ນິເວດວິທະຍາ ແລະ ຜົນສະທ້ອນຕໍ່ສັງຄົມ ເພື່ອສະເໜີຂໍສຳປະທານນຳລັດຖະບານ.

ພ້ອມກັນກັບການຕົກລົງອະນຸມັດສຳປະທານຂຸດຄົ້ນນັ້ນ ລັດຖະບານຈະຕ້ອງເຂົ້າຮ່ວມທຶນ ໃນການດຳເນີນທຸລະກິດບໍ່ແຮ່.

ຜູ້ໄດ້ຮັບສິດດຳເນີນທຸລະກິດບໍ່ແຮ່ ຕ້ອງໄດ້ສ້າງຕັ້ງ ແລະ ຂຶ້ນທະບຽນວິສາຫະກິດຕາມລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 24 : ການຊອກຄົ້ນແຮ່ທາດ.**

ການຊອກຄົ້ນ ແຮ່ທາດ ແມ່ນການດຳເນີນວຽກງານກວດເບິ່ງພື້ນທີ່ພາກສະໜາມເພື່ອຊອກຮູ້ກ່ຽວກັບສະພາບທໍລະນີສາດ ຂອງຂົງເຂດ, ຈຸດທີ່ເປັນປະກົດການແຮ່ທາດ ຢູ່ໜ້າດິນເພື່ອຕີລາຄາຄຸນນະພາບ ຂອງແຮ່ທາດ ທີ່ຢູ່ຢັ້ງຢາຍໃນທຳມະຊາດ. ການດຳເນີນການຊອກຄົ້ນ ແຮ່ທາດຕ້ອງໄດ້ຮັບການອະນຸຍາດ ຈາກລັດຖະບານ.

ກຳນົດເວລາການຊອກຄົ້ນແຮ່ທາດ ບໍ່ໃຫ້ເກີນສອງປີ ແຕ່ສາມາດຕໍ່ໄດ້ສອງເທື່ອ, ແຕ່ລະເທື່ອ ບໍ່ໃຫ້ເກີນ ໜຶ່ງປີຕາມການຕົກລົງ ຂອງລັດຖະບານ.

**ມາດຕາ 25 : ການສຳຫລວດແຮ່ທາດ.**

ການສຳຫລວດ ແຮ່ທາດແມ່ນການສຶກສາທາງດ້ານທໍລະນີສາດ ແລະ ທໍລະນີຟີຊິກໃນຂອບເຂດເນື້ອທີ່ທີ່ໄດ້ກຳນົດໃຫ້ ເພື່ອເກັບກຳຂໍ້ມູນລະອຽດຕື່ມ ກ່ຽວກັບທໍລະນີສາດ ແລະ ໂຄງສ້າງ ທໍລະນີສາດດ້ວຍການທົດລອງການຢັ້ງສືບ, ການຂຸດຂຸມ, ການເຈາະສຳຫລວດວິໄຈລັກສະນະ ຂອງ ແຮ່ທາດ ທາງດ້ານວັດຖຸ ແລະ ເຄມີ ແລະ ປະເມີນຄວາມອາດສາມາດທາງດ້ານເສດຖະກິດ.

ການດຳເນີນ ການສຳຫລວດແຮ່ທາດ ຕ້ອງໄດ້ຮັບການອະນຸຍາດຈາກລັດຖະບານ.

ກຳນົດເວລາການສຳຫລວດແຮ່ທາດ ບໍ່ໃຫ້ເກີນ ສາມປີ ແຕ່ສາມາດຕໍ່ໄດ້ ສອງເທື່ອ, ແຕ່ລະເທື່ອ ບໍ່ໃຫ້ເກີນ ສອງປີ ຕາມການຕົກລົງ ຂອງ ລັດຖະບານ.

**ມາດຕາ 26 : ການປະເມີນປະລິມານສະສົມ ແຮ່ທາດ.**

ການປະເມີນປະລິມານສະສົມແຮ່ທາດ ແມ່ນການຕີລາຄາວ່າແຫລ່ງສະສົມແຮ່ທາດແຕ່ລະປະເພດ ທີ່ໄດ້ສຳຫລວດແລ້ວນັ້ນ ມີຂອບເຂດ ແລະ ມີບໍລິມາດເທົ່າໃດ.

**ມາດຕາ 27 : ການທົດລອງ ວິໄຈຕົວຢ່າງ.**

ຜູ້ໄດ້ຮັບສິດດຳເນີນທຸລະກິດບໍ່ແຮ່ ມີສິດສົ່ງຕົວຢ່າງແຮ່ທາດ ແລະ ອື່ນໆກ່ຽວກັບແຮ່ທາດ ເພື່ອໄປທົດລອງວິໄຈ ຈະແມ່ນຢູ່ພາຍໃນ ແລະ ຕ່າງປະເທດ ກໍໄດ້ຕາມລະບຽບການທີ່ລັດຖະບານວາງອອກ.

**ມາດຕາ 28 : ການສົ່ງ ແລະ ການຂໍເພີ່ມເນື້ອທີ່.**

ເມື່ອໄດ້ທຳການຊອກຄົ້ນ ແລະ ສຳຫລວດແລ້ວ ຜູ້ໄດ້ຮັບອະນຸຍາດຕ້ອງສົ່ງເນື້ອທີ່ຊອກຄົ້ນ ຫລື ສຳຫລວດທີ່ຕົນບໍ່ຕ້ອງການສ່ວນໃດສ່ວນໜຶ່ງ ຫລື ທັງໝົດຄືນ ພ້ອມດ້ວຍຂໍ້ມູນທັງໝົດທີ່ໄດ້ຈາກການຊອກຄົ້ນ ຫລື ການສຳຫລວດນັ້ນ.

ໃນກໍລະນີທີ່ຄົ້ນພົບວ່າ ມີສາຍແຮ່ທາດຍາວອອກນອກເຂດທີ່ອະນຸຍາດ, ຜູ້ໄດ້ຮັບອະນຸຍາດມີສິດ ສະເໜີຂໍເພີ່ມເຕີມເນື້ອທີ່ດັ່ງກ່າວ ບົນພື້ນຖານຂໍ້ມູນທີ່ເກັບກຳໄດ້.

**ມາດຕາ 29 : ການຕີລາຄາ ຄວາມອາດສາມາດໃນການຂຸດຄົ້ນແຮ່ທາດ**

ການຕີລາຄາ ຄວາມອາດສາມາດ ໃນການຂຸດຄົ້ນ ແຮ່ທາດ ແມ່ນການຕີລາຄາວ່າ : ແຫລ່ງແຮ່ທາດ ທີ່ຈະຂຸດຄົ້ນນັ້ນມີປະສິດທິຜົນເສດຖະກິດ-ສັງຄົມ ຫລື ບໍ່ ແລະ ມີຜົນກະທົບອັນບໍ່ດີ ຕໍ່ສິ່ງແວດລ້ອມ ໜ້ອຍຫລາຍປານໃດ.

**ມາດຕາ 30 : ບົດວິພາກເສດຖະກິດ-ເຕັກນິກ.**

ບົດວິພາກເສດຖະກິດ-ເຕັກນິກ ກ່ຽວກັບການຂໍອະນຸຍາດ ດຳເນີນທຸລະກິດບໍ່ແຮ່ ຕ້ອງປະກອບດ້ວຍເນື້ອໃນຕົ້ນຕໍດັ່ງນີ້ :

1. ແຜນການ ແລະ ຂັ້ນຕອນ ຂອງການດຳເນີນຂຸດຄົ້ນ ແຮ່ທາດ : ລະບົບເຕັກນິກການຂຸດຄົ້ນ, ບໍລິມາດການຂຸດຄົ້ນ;
2. ປະສິດທິຜົນເສດຖະກິດ-ສັງຄົມຂອງ ການດຳເນີນການຂຸດຄົ້ນ ແຮ່ທາດ.

ກຳນົດເວລາສ້າງບົດວິພາກເສດຖະກິດ-ເຕັກນິກ ບໍ່ໃຫ້ເກີນ ໜຶ່ງປີ ແຕ່ສາມາດຕໍ່ໄດ້ອີກບໍ່ເກີນ ໜຶ່ງປີ ຕາມການຕົກລົງ ຂອງ ລັດຖະບານ.

**ມາດຕາ 31 : ບົດປະເມີນ ຜົນກະທົບ ຕໍ່ສິ່ງແວດລ້ອມ.**

ພ້ອມກັນກັບບົດວິພາກເສດຖະກິດ-ເຕັກນິກ, ຜູ້ລົງທຶນ ຕ້ອງເຮັດບົດປະເມີນ ຜົນກະທົບ ຕໍ່ສິ່ງແວດລ້ອມ ຊຶ່ງປະກອບດ້ວຍເນື້ອໃນຕົ້ນຕໍດັ່ງນີ້:

1. ການຄາດຄະເນ ຜົນກະທົບຕໍ່ສິ່ງແວດລ້ອມ ໃນແຕ່ລະກໍລະນີ ໂດຍໃຫ້ສະເໜີວິທີການ ແລະ ມາດຕະການແກ້ໄຂ ຫລື ຫລຸດຜ່ອນຜົນກະທົບອັນບໍ່ດີ ຕໍ່ສິ່ງແວດລ້ອມ, ນິເວດວິທະຍາ ແລະ ສັງຄົມ;
2. ປະເມີນຜົນເສັຽຫາຍ ແລະ ການຍົກຍ້າຍປະຊາຊົນ ລວມທັງການຊ່ວຍເຫລືອປົວແປງຊີວິດການເປັນຢູ່ຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກການດຳເນີນການຂຸດຄົ້ນແຮ່ທາດ : ຊອກບ່ອນຢູ່ອາໄສ ແລະ ທີ່ທຳມາຫາກິນ ອັນເໝາະສົມ.

**ມາດຕາ 32 : ເງື່ອນໄຂຂອງ ຜູ້ທີ່ໄດ້ຮັບອະນຸຍາດສຳປະທານການຂຸດຄົ້ນແຮ່ທາດ.**

ຜູ້ຈະໄດ້ຮັບອະນຸຍາດສຳປະທານການຂຸດຄົ້ນແຮ່ທາດ ຕ້ອງມີເງື່ອນໄຂຕົ້ນຕໍດັ່ງນີ້:

1. ມີຄວາມສາມາດທາງດ້ານການເງິນ ແລະ ຄວາມສາມາດທາງດ້ານເຕັກນິກ;
2. ມີປະຫວັດໃນການດຳເນີນທຸລະກິດ ບໍ່ແຮ່ ທີ່ດີ ແລະ ໜ້າເຊື່ອຖື;
3. ການສຳປະທານຂຸດຄົ້ນແຮ່ທາດມີປະສິດທິຜົນ, ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ບໍ່ມີຜົນກະທົບອັນບໍ່ດີຢ່າງຮ້າຍແຮງ ຕໍ່ສິ່ງແວດລ້ອມ.

ເມື່ອຜູ້ຂໍສຳປະທານຫາກມີເງື່ອນໄຂຄົບຖ້ວນແລ້ວ ລັດຖະບານກໍຈະພິຈາລະນາການໃຫ້ອະນຸຍາດສຳປະທານການຂຸດຄົ້ນແຮ່ທາດ.

**ມາດຕາ 33 : ການດຳເນີນການຂຸດຄົ້ນແຮ່ທາດ.**

ການດຳເນີນການຂຸດຄົ້ນແຮ່ທາດ ແມ່ນການບຸກເບີກ, ການຂຸດຄົ້ນ, ການຍົກຍ້າຍ, ການລ້າງກັ່ນ, ການບົດທຍຳ, ການຄັດຈ້ອນ ແລະ ການເກັບມ້ຽນແຮ່ທາດ.

ກຳນົດເວລາໃຫ້ສຳປະທານການດຳເນີນການຂຸດຄົ້ນແຮ່ທາດ ບໍ່ໃຫ້ເກີນ ສາມສິບປີ ນັບແຕ່ມື້ໄດ້ຮັບສຳປະທານເປັນຕົ້ນໄປ ແຕ່ສາມາດຕໍ່ໄດ້ສອງເທື່ອ, ແຕ່ລະເທື່ອ ບໍ່ໃຫ້ເກີນ ສິບ ປີ ຊຶ່ງແມ່ນລັດຖະບານ ຈະເປັນຜູ້ຕົກລົງ ຕາມແຕ່ລະກໍລະນີ ແລະ ຂະໜາດ ຂອງ ບໍ່ແຮ່.

**ມາດຕາ 34 : ການມອບວິສາຫະກິດ ບໍ່ແຮ່.**

ພາຍຫລັງສິ້ນສຸດກຳນົດເວລາການສຳປະທານ ການດຳເນີນການຂຸດຄົ້ນ ແຮ່ທາດ ຜູ້ດຳເນີນທຸລະກິດ ບໍ່ແຮ່ ຕ້ອງມອບວິສາຫະກິດ ບໍ່ແຮ່ທັງໝົດ ລວມທັງພາຫະນະວັດຖຸ

ອຸປະກອນ ທີ່ເປັນຊັບສົມບັດ ຂອງທຸລະກິດ ບໍ່ແຮ່ ໃຫ້ແກ່ ລັດຖະບານແຫ່ງ ສປປ ລາວ ໂດຍບໍ່ມີການໃຊ້ແທນຄືນ ເວັ້ນເສັຽແຕ່ ລັດຖະບານຫາກບໍ່ເຫັນດີຮັບເອົາ.

**ມາດຕາ 35 : ການຂຸດຄົ້ນແຮ່ທາດດ້ວຍການໃຊ້ເຄື່ອງມືຫັດຖະກຳເປັນອາຊີບ ຫລື ບໍ່ເປັນອາຊີບ.**

ການຂຸດຄົ້ນແຮ່ທາດ ດ້ວຍການໃຊ້ເຄື່ອງມືຫັດຖະກຳເປັນອາຊີບ ແມ່ນການເຄື່ອນໄຫວຂຸດຄົ້ນແຮ່ທາດ ໂດຍໃຊ້ເຄື່ອງມືແບບປະຖົມປະຖານ ແລະ ຖືເອົາກິດຈະການນີ້ເປັນອາຊີບ.

ຜູ້ຂຸດຄົ້ນ ແຮ່ທາດ ດ້ວຍການໃຊ້ເຄື່ອງມືຫັດຖະກຳເປັນອາຊີບຕ້ອງແມ່ນ ພົນລະເມືອງລາວ ແລະຕ້ອງດຳເນີນກິດຈະການດ້ວຍທຶນຮອນ ຂອງ ຕົນເອງ.

ການຂຸດຄົ້ນແຮ່ທາດ ດ້ວຍການໃຊ້ເຄື່ອງມືຫັດຖະກຳເປັນອາຊີບຕ້ອງໄດ້ຮັບອະນຸຍາດຈາກພະແນກອຸດສາຫະກຳ- ຫັດຖະກຳແຂວງ, ກຳແພງນະຄອນ ຫລື ເຂດພິເສດ ແຕ່ພະແນກອຸດສາຫະກຳ-ຫັດຖະກຳ ຕ້ອງລາຍງານໃຫ້ກະຊວງອຸດສາຫະກຳ-ຫັດຖະກຳຊາບ.

ໃນກໍລະນີທີ່ ການຂຸດຄົ້ນແຮ່ທາດ ດ້ວຍການໃຊ້ເຄື່ອງມືຫັດຖະກຳເປັນອາຊີບຫາກມີການນຳໃຊ້ກົນຈັກ ຫລື ມີການວ່າຈ້າງແຮງງານຈະຖືວ່າ ເປັນຮູບການທຸລະກິດ ບໍ່ແຮ່ດ້ວຍການໃຊ້ພາຫະນະກົນຈັກ.

ການຂຸດຄົ້ນແຮ່ທາດ ດ້ວຍການໃຊ້ເຄື່ອງມືຫັດຖະກຳບໍ່ເປັນອາຊີບ ແມ່ນການຂຸດຄົ້ນເປັນບາງຄັ້ງບາງຄາວ.

ການຂຸດຄົ້ນ ແຮ່ທາດ ດ້ວຍການໃຊ້ເຄື່ອງມືຫັດຖະກຳບໍ່ເປັນອາຊີບຕ້ອງໄດ້ຮັບອະນຸຍາດຈາກ ຫ້ອງການອຸດສາຫະກຳ-ຫັດຖະກຳເມືອງ ແຕ່ຫ້ອງການອຸດສາຫະກຳ- ຫັດຖະກຳເມືອງຕ້ອງລາຍງານໃຫ້ ພະແນກອຸດສາຫະກຳ-ຫັດຖະກຳ ແຂວງ, ກຳແພງນະຄອນ ຫລື ເຂດພິເສດຊາບ.

**ມາດຕາ 36 : ການປຸງແຕ່ງແຮ່ທາດ**

ການປຸງແຕ່ງແຮ່ທາດ ແມ່ນການຍົກຄຸນນະພາບແຮ່ທາດ ດ້ວຍວິທີການແບບອຸດສາຫະກຳ ຫລື ການປຸງແຕ່ງແຮ່ທາດເພີ່ມເຕີມ: ການກັ່ນຕອງ, ການຫຼໍ່ຫລອມ, ການປຸ່ນຮູບ, ການເຈັຽລະໄນ ແລະ ການປຸງແຕ່ງເພື່ອສ້າງມູນຄ່າເສດຖະກິດ.

ການປຸງແຕ່ງເພື່ອຍົກຄຸນນະພາບແຮ່ທາດຕ້ອງໄດ້ຮັບອະນຸຍາດສະເພາະຈາກອົງການທີ່ກ່ຽວຂ້ອງ.

**ມາດຕາ 37 : ການຊື້ ຂາຍແຮ່ ແລະ ແຮ່ທາດ**

ຜູ້ດຳເນີນທຸລະກິດບໍ່ແຮ່ ມີສິດຂາຍແຮ່ ແລະ ແຮ່ທາດທີ່ຕົນຂຸດຄົ້ນໄດ້ ແຕ່ຕ້ອງໄດ້ຮັບອະນຸຍາດຊື້ ຂາຍແຮ່ ແລະ ແຮ່ທາດ. ສຳລັບຜູ້ດຳເນີນທຸລະກິດແຕ່ ຊື້ ຂາຍແຮ່ ແລະ ແຮ່ທາດຕ້ອງມີທະບຽນທຸລະກິດຊື້ ຂາຍແຮ່ ແລະ ແຮ່ທາດສະເພາະ.

ແຮ່ ໃນກົດໝາຍສະບັບນີ້ໝາຍເຖິງແຮ່ທາດທີ່ໄດ້ຜ່ານການລ້າງກັ່ນ, ການບົດ, ການທຍໍ້, ການຄັດຈ້ອນ ແລະ ທີ່ໄດ້ຮັບການປຸງແຕ່ງແລ້ວ.

## ໝວດທີ V
## ສິດ ແລະ ພັນທະ ຂອງ ຜູ້ດຳເນີນທຸລະກິດ ບໍ່ແຮ່

**ມາດຕາ 38 : ສິດຂອງຜູ້ດຳເນີນທຸລະກິດບໍ່ແຮ່**

ຜູ້ດຳເນີນທຸລະກິດບໍ່ແຮ່ ມີສິດດັ່ງນີ້:

1. ໄດ້ຮັບການປົກປ້ອງຕາມກົດໝາຍ;
2. ດຳເນີນທຸລະກິດ ບໍ່ແຮ່ ຕາມຂັ້ນຕອນ ທີ່ໄດ້ຮັບອະນຸຍາດແຕ່ພຽງຜູ້ດຽວ ໃນເຂດທີ່ຕົນໄດ້ຮັບອະນຸຍາດ;
3. ມີບູລິມະສິດ ໃນການສືບຕໍ່ດຳເນີນທຸລະກິດບໍ່ແຮ່ ຕາມການປະເມີນຜົນຂອງອົງການຄຸ້ມຄອງ ແລະ ກວດກາທຸລະກິດບໍ່ແຮ່ ແລະ ການເຫັນດີຈາກລັດຖະບານ;
4. ເປັນເຈົ້າກຳມະສິດຕໍ່ຊັບສິນ ແລະ ຜົນທີ່ໄດ້ຮັບຈາກທຸລະກິດບໍ່ແຮ່ຕາມສັນຍາ;
5. ໄດ້ຮັບການແນະນຳຈາກລັດຖະບານ ທາງດ້ານວິຊາການ ແລະ ເຕັກໂນໂລຊີ ກ່ຽວກັບການດຳເນີນທຸລະກິດບໍ່ແຮ່;
6. ສະເໜີຂໍຕໍ່ອະນຸຍາດ ການດຳເນີນທຸລະກິດ ບໍ່ແຮ່;
7. ກໍ່ສ້າງສິ່ງປຸກສ້າງ ແລະ ຕິດຕັ້ງອຸປະກອນຕ່າງໆ ໃຫ້ແກ່ການດຳເນີນທຸລະກິດບໍ່ແຮ່ ຕາມລະບຽບ ຂອງຂະແໜງການທີ່ກ່ຽວຂ້ອງ.

ຜູ້ຂຸດຄົ້ນແຮ່ທາດ ດ້ວຍການໃຊ້ເຄື່ອງມືຫັດຖະກຳເປັນອາຊີບມີສິດໃຫ້ບຸກຄົນໃນຄອບຄົວສືບທອດກິດຈະການຂອງຕົນ ແຕ່ຫາກບໍ່ມີສິດໂອນກິດຈະການດັ່ງກ່າວໃຫ້ບຸກຄົນອື່ນ.

**ມາດຕາ 39 : ຂອບເຂດສິດ ຂອງ ຜູ້ດຳເນີນທຸລະກິດບໍ່ແຮ່**

ຜູ້ດຳເນີນທຸລະກິດບໍ່ແຮ່ ມີສິດໂອນ ຫລື ໃຫ້ສືບທອດ ສິດດຳເນີນທຸລະກິດ ບໍ່ແຮ່ຕາມການເຫັນດີຂອງລັດຖະບານ. ຍົກເວັ້ນແຕ່ ການດຳເນີນທຸລະກິດ ບໍ່ແຮ່ໃນຂັ້ນຕອນການຊອກຄົ້ນ.

**ມາດຕາ 40 : ສິດໃນເຂດດຳເນີນທຸລະກິດ ບໍ່ແຮ່**

ໃນການດຳເນີນທຸລະກິດບໍ່ແຮ່ ຜູ້ໄດ້ຮັບອະນຸຍາດສຳປະທານທຸລະກິດບໍ່ແຮ່ ມີສິດເຊົ່າທີ່ດິນດ້ວຍການເຮັດສັນຍາກັບ ລັດຖະບານ ມີສິດເຮັດສັນຍາໃນການໃຊ້ໄຟຟ້າ, ການນຳໃຊ້ນ້ຳເຂົ້າໃນການປຸງແຕ່ງແຮ່ທາດຕ້ອງມີການບຳບັດ ແລະ ການສົ່ງນ້ຳເສດເຫລືອອອກຕ້ອງຮັບປະກັນສຸຂະພາບ ຂອງປະຊາຊົນ ແລະ ສິ່ງແວດລ້ອມ. ສຳລັບແຮ່ທາດບາງຊະນິດທີ່ເປັນທາດເບື້ອນັ້ນ ລັດຈະກຳນົດເປັນເຂດທຸລະກິດ ບໍ່ແຮ່ສະເພາະ.

ສຳລັບການນຳໃຊ້ໄມ້ທີ່ຢູ່ໃນເຂດດຳເນີນທຸະກິດ ບໍ່ແຮ່ ຕ້ອງໄດ້ຮັບອະນຸຍາດ ແລະ ທົດແທນມູນຄ່າຂອງໄມ້ນັ້ນ.

ໃນກໍລະນີເນື້ອທີ່ດຳເນີນທຸລະກິດ ບໍ່ແຮ່ ຫາກກວມເອົາເນື້ອທີ່ດິນ, ສິ່ງປຸກສ້າງ, ຜົນລະປູກ ແລະ ສິ່ງອື່ນໆ ຂອງບຸກຄົນ ຫລື ການຈັດຕັ້ງຜູ້ໄດ້ຮັບອະນຸຍາດຕ້ອງທົດແທນຄ່າຍົກຍ້າຍ ແລະ ຄ່າເສັຽຫາຍຢ່າງເໝາະສົມ.

**ມາດຕາ 41 : ບູລິມະສິດ ເຂດດຳເນີນທຸລະກິດ ບໍ່ແຮ່**

ໃນກໍລະນີທີ່ ຜູ້ໄດ້ຮັບອະນຸຍາດສຳປະທານ ທຸລະກິດບໍ່ແຮ່ ຫາກຄົ້ນພົບແຮ່ທາດອື່ນໃນເຂດດຳເນີນທຸລະກິດ ບໍ່ແຮ່ ນອກຈາກແຮ່ທີ່ຕົນໄດ້ຮັບອະນຸຍາດແລ້ວ ຜູ້ກ່ຽວມີບູລິມະສິດ ໃນການຂໍອະນຸຍາດ ດຳເນີນທຸລະກິດ ກ່ຽວກັບແຮ່ທາດທີ່ຕົນຄົ້ນພົບໃໝ່ນັ້ນເພີ່ມເຕີມຈາກລັດຖະບານອີກ ເວັ້ນເສັຽແຕ່ແຮ່ທາດດັ່ງກ່າວ ຫາກເປັນແຮ່ທາດທີ່ສະຫງວນ ຫລື ຫ້າມຂຸດຄົ້ນ.

**ມາດຕາ42 : ພັນທະ ຂອງຜູ້ດຳເນີນທຸລະກິດ ບໍ່ແຮ່.**

ຜູ້ດຳເນີນທຸລະກິດບໍ່ແຮ່ ມີພັນ

ທະດັ່ງນີ້:

1. ດຳເນີນທຸລະກິດ ບໍ່ແຮ່ ຕາມຂັ້ນຕອນໃດໜຶ່ງ ຫລື ທັງໝົດທຸກຂັ້ນຕອນ ແລະ ຕາມກຳນົດເວລາ ທີ່ໄດ້ອະນຸມັດໃຫ້;
2. ວາງເງິນຄ້ຳປະກັນຕາມລະບຽບການ ຢູ່ ທະນາຄານຂອງລັດ ແຫ່ງ ສປປ ລາວ;
3. ດຳເນີນທຸລະກິດ ບໍ່ແຮ່ຕາມການອະນຸມັດ, ຕາມບົດວິພາກເສດຖະກິດ-ເຕັກນິກ ແລະ ຕາມແຜນການດຳເນີນການຂຸດຄົ້ນ ແຮ່ທາດ;
4. ປົກປັກຮັກສາ ແລະ ປົວແປງສິ່ງແວດລ້ອມ ໃນການດຳເນີນການຂຸດຄົ້ນ ແລະ ພາຍຫລັງສິ້ນສຸດການຂຸດຄົ້ນກໍ່ຕ້ອງຮັບປະກັນບໍ່ໃຫ້ມີຜົນກະທົບຢ່າງຮ້າຍແຮງ ຕໍ່ຄວາມປອດໄພຂອງປະເທດຊາດ ຫລື ຕໍ່ສາທາລະນະ ແລະ ຈ່າຍຄ່າເສັຍຫາຍໃນກໍລະນີທີ່ແຕະຕ້ອງເຖິງຊີວິດ, ຊັບສິນ ຂອງປະຊາຊົນ ແລະ ຂອງ ສາທາລະນະ;
5. ບັນທຶກ ແລະ ລາຍງານຜົນຂອງການດຳເນີນທຸລະກິດ ບໍ່ແຮ່ ແຕ່ລະຂັ້ນຕອນພ້ອມທັງການໃຊ້ຈ່າຍໃນແຕ່ລະຂັ້ນຕອນຢ່າງລະອຽດ ແລະ ຕາມກຳນົດເວລາ;
6. ຮັບປະກັນ ຝຶກອົບຮົມ ແລະ ກໍ່ສ້າງດ້ານວິຊາສະເພາະໃຫ້ແກ່ຄົນງານລາວ ລວມທັງຮັບປະກັນດ້ານສະຫວັດດີການ, ສຸຂະພາບ ແລະ ຄວາມປອດໄພ ຂອງ ຄົນງານ;
7. ຖືບັນຊີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ການບັນຊີວິສາຫະກິດ;
8. ປະຕິບັດ ພັນທະພາສີ, ອາກອນ ແລະ ພັນທະອື່ນໆ ກ່ຽວກັບການດຳເນີນທຸລະກິດບໍ່ແຮ່ ໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມກຳນົດເວລາ;
9. ໃນກໍລະນີທີ່ມີການກໍ່ສ້າງເສັ້ນທາງຮັບໃຊ້ການດຳເນີນທຸລະກິດ ບໍ່ແຮ່ນັ້ນ ຜູ້ອື່ນກໍ່ສາມາດນຳໃຊ້ໄດ້;
10. ປະຕິບັດລະບຽບກົດໝາຍຂອງ ສປປ ລາວ ຢ່າງເຂັ້ມງວດ.

ຜູ້ຂຸດຄົ້ນ ແຮ່ທາດ ດ້ວຍການໃຊ້ເຄື່ອງມືຫັດຖະກຳເປັນອາຊີບ ຫລື ບໍ່ເປັນອາຊີບມີພັນທະເສັຍພາສີອາກອນ ຕາມລະບຽບການ ແລະ ມີພັນທະໃນການປົກປັກຮັກສາສິ່ງແວດລ້ອມ ແລະ ປະຕິບັດ ລະບຽບກົດໝາຍ ຂອງ ສປປ ລາວ ຢ່າງເຂັ້ມງວດ.

ມາດຕາ 43 : ການພົວພັນກັບອຳນາດການປົກຄອງທ້ອງຖິ່ນ

ໃນການດຳເນີນທຸລະກິດ ບໍ່ແຮ່ ແຕ່ລະຂັ້ນຕອນນັ້ນ ຜູ້ດຳເນີນທຸລະກິດ ບໍ່ແຮ່ ຕ້ອງໄດ້ພົວພັນກັບອຳນາດການປົກຄອງທ້ອງຖິ່ນບ່ອນທີ່ຕົນເຄື່ອນໄຫວ ເພື່ອຈະໄດ້ຮັບຄວາມສະດວກກ່ຽວກັບການດຳເນີນທຸລະກິດ ບໍ່ແຮ່.

ມາດຕາ 44 : ການສິ້ນສຸດ ຂອງການດຳເນີນທຸລະກິດ ບໍ່ແຮ່

ການດຳເນີນທຸລະກິດ ບໍ່ແຮ່ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ໝົດກຳນົດເວລາດຳເນີນທຸລະກິດ ບໍ່ແຮ່ ໃນທຸກຂັ້ນຕອນ ຫລື ໃນຂັ້ນຕອນໃດໜຶ່ງ;
2. ຢຸດເຊົາດຳເນີນທຸລະກິດ ບໍ່ແຮ່ ກ່ອນກຳນົດເວລາດ້ວຍຄວາມສະໝັກໃຈ;
3. ຖືກຖອນສິດດຳເນີນທຸລະກິດ ບໍ່ແຮ່ ຍ້ອນມີການລະເມີດສັນຍາ ຫລື ລະບຽບກົດໝາຍ ຂອງ ສປປ ລາວ ຢ່າງຮ້າຍແຮງ.

ມາດຕາ 45 : ມາດຕະຖານເຕັກນິກ ແລະ ເຕັກໂນໂລຊີ.

ໃນການດຳເນີນທຸລະກິດ ບໍ່ແຮ່ ນັ້ນຜູ້ໄດ້ຮັບອະນຸຍາດສຳປະທານທຸລະກິດ ບໍ່ແຮ່ ຕ້ອງນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີ ທີ່ໄດ້ມາດຕະຖານສາກົນຊຶ່ງຮັບຮູ້ໂດຍກະຊວງ ອຸດສາຫະກຳ-ຫັດຖະກຳ ແລະ ອົງການທີ່ກ່ຽວຂ້ອງອື່ນໆ ແນໃສ່ຮັບປະກັນປະສິດທິຜົນ, ຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ.

ມາດຕາ 46 : ການສົ່ງຄືນເນື້ອທີ່ ແລະ ການປົວແປງສະຖານທີ່ຂຸດຄົ້ນແຮ່ທາດ.

ຜູ້ໄດ້ຮັບອະນຸຍາດສຳປະທານ ທຸລະກິດ ບໍ່ແຮ່ ຕ້ອງສົ່ງເນື້ອທີ່ດິນທີ່ຕົນດຳເນີນທຸລະກິດ ບໍ່ແຮ່ ຄືນໃຫ້ລັດຖະບານລວມທັງທີ່ດິນທີ່ໄດ້ເຊົານັ້ນ ໃນກໍລະນີ ດັ່ງນີ້:

1. ບໍ່ຕ້ອງການນຳໃຊ້ທີ່ດິນນັ້ນຕໍ່ໄປອີກ;
2. ຖືກຖອນອະນຸຍາດດຳເນີນທຸລະກິດບໍ່ແຮ່ ຍ້ອນບໍ່ປະຕິບັດສັນຍາ ຫລື ມີການລະເມີດຕໍ່ລະບຽບກົດໝາຍຂອງ ສປປ ລາວ ຢ່າງຮ້າຍແຮງ;
3. ໝົດກຳນົດເວລາອະນຸຍາດດຳເນີນທຸລະກິດ ບໍ່ແຮ່.

ການສົ່ງເນື້ອທີ່ດິນດຳເນີນທຸລະກິດ ບໍ່ແຮ່ ຄືນ ຕ້ອງໄດ້ແຈ້ງລ່ວງໜ້າໃຫ້ອົງການທີ່ກ່ຽວຂ້ອງຊາບ ຕາມກຳນົດເວລາທີ່ໄດ້ວາງໄວ້.

ໃນກໍລະນີທີ່ມີການປ່ຽນແປງສະພາບໜ້າດິນ, ກ່ອນຈະສົ່ງເນື້ອທີ່ດິນຄືນນັ້ນ ຕ້ອງໄດ້ປົວແປງ ແລະ ຟື້ນຟູຄືນ: ຖົມ, ປັບໜ້າດິນຄືນ, ອະນາໄມທາດເຄມີ, ປູກຕົ້ນໄມ້ ທົດແທນຄືນ.

ມາດຕາ 47 : ທຶນທົດແທນຄ່າເສັຍຫາຍ.

ຜູ້ດຳເນີນທຸລະກິດ ບໍ່ແຮ່ ຕ້ອງມີທຶນເພື່ອນຳໃຊ້ເຂົ້າໃນການໃຊ້ຈ່າຍອັນຈຳເປັນດັ່ງນີ້:

1. ຍົກຍ້າຍປະຊາຊົນອອກຈາກສະຖານທີ່ດຳເນີນທຸລະກິດ ບໍ່ແຮ່, ຊອກບ່ອນຢູ່ອາໄສ ແລະ ທີ່ທຳມາຫາກິນ;
2. ໃຊ້ແທນຄ່າເສັຍຫາຍ ກ່ຽວກັບທີ່ດິນ, ສິ່ງປຸກສ້າງ ແລະ ຜົນລະປູກ;
3. ເສັຍຄ່າເຊົ່າທີ່ດິນ;
4. ປົກປັກຮັກສາສິ່ງແວດລ້ອມ;
5. ປົວແປງ ແລະ ຟື້ນຟູສະຖານທີ່ດຳເນີນທຸລະກິດ ບໍ່ແຮ່.

ທຶນດັ່ງກ່າວນີ້ ແມ່ນໃຫ້ຄິດໄລ່ເຂົ້າທຶນຂອງ ໂຄງການທຸລະກິດ ບໍ່ແຮ່.

## ໝວດທີ VI
## ອົງການຄຸ້ມຄອງ ແລະ ກວດກາການດຳເນີນທຸລະກິດ ບໍ່ແຮ່

ມາດຕາ 48 : ອົງການຄຸ້ມຄອງ ແລະ ກວດກາການດຳເນີນທຸລະກິດ ບໍ່ແຮ່.

ອົງການຄຸ້ມຄອງ ແລະ ກວດກາການດຳເນີນທຸລະກິດ ບໍ່ແຮ່ ປະກອບມີ ດັ່ງນີ້:

1. ກະຊວງອຸດສາຫະກຳ-ຫັດຖະກຳ;
2. ພະແນກອຸດສາຫະກຳ-ຫັດຖະກຳແຂວງ, ກຳແພງນະຄອນ ຫລື ເຂດພິເສດ;
3. ຫ້ອງການອຸດສາຫະກຳ-ຫັດຖະກຳ ເມືອງ;
4. ອຳນາດການປົກຄອງບ້ານ.

ມາດຕາ49 : ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ-ຫັດຖະກຳ.

ໃນການຄຸ້ມຄອງ ແລະ ກວດກາການດຳເນີນທຸລະກິດ ບໍ່ແຮ່ ກະຊວງອຸດສາຫະກຳ-ຫັດຖະກຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ລັດຖະບານໃນການຜັນຂະຫຍາຍແຜນຍຸດທະສາດ, ກ່ຽວກັບແຮ່ທາດໃຫ້ກາຍເປັນແຜນການ, ໂຄງການລະອຽດ ແລະ ລະບຽບການເພື່ອຄຸ້ມຄອງ ແລະ ກວດກາການດຳເນີນທຸລະກິດບໍ່ແຮ່;
2. ຄົ້ນຄ້ວາວິທະຍາສາດເຕັກນິກດ້ານທໍລະນີສາດ-ບໍ່ແຮ່, ສ້າງຕາ

ໜ່ວຍງານສະຖິຕິແຫ່ງຊາດ ແລະ ຂ່າວສານດ້ານທໍລະນີສາດ-ບໍ່ແຮ່;

3. ປະສານສົມທົບກັບພາກສ່ວນອື່ນໆ ແລະ ອຳນາດການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ;

4. ຄົ້ນຄ້ວາ ແລະ ມີຄຳເຫັນດ້ານເຕັກນິກ ກ່ຽວກັບການຂໍດຳເນີນທຸລະກິດບໍ່ແຮ່;

5. ອອກໃບອະນຸຍາດຊອກຄົ້ນ, ສຳຫລວດ, ຂຸດຄົ້ນ ຫລື ປຸງແຕ່ງແຮ່ທາດ ໃຫ້ຜູ້ທີ່ໄດ້ຮັບອະນຸຍາດ ລົງທຶນຈາກລັດຖະບານແລ້ວ;

6. ກໍ່ສ້າງ,ບຳລຸງ ແລະ ຍົກລະດັບວິຊາການດ້ານທໍລະນີສາດ-ບໍ່ແຮ່ ໃຫ້ແກ່ພະນັກງານ ແລະ ກຳມະກອນລາວ;

7. ຕິກລົງດ້ານວິຊາການ ກ່ຽວກັບການສົ່ງອອກ ຫລື ນຳເຂົ້າແຮ່ທາດ ໂດຍສອດຄ່ອງກັບລະບຽບການຂອງ ກະຊວງອື່ນໆ ທີ່ກ່ຽວຂ້ອງ;

8. ກວດກາກ່ຽວກັບວຽກງານທໍລະນີສາດ-ບໍ່ແຮ່;

9. ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານ ທໍລະນີສາດ-ບໍ່ແຮ່.

ມາດຕາ 50 : ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ-ຫັດຖະກຳ.

ໃນການຄຸ້ມຄອງ ແລະ ກວດກາການດຳເນີນທຸລະກິດ ບໍ່ແຮ່ ພະແນກອຸດສາຫະກຳ- ຫັດຖະກຳແຂວງ, ກຳແພງນະຄອນ ຫລື ເຂດພິເສດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໂດຍກົງໃຫ້ກະຊວງອຸດສາຫະກຳ-ຫັດຖະກຳ ແລະ ອຳນາດການປົກຄອງ ແຂວງ, ກຳແພງນະຄອນ ຫລື ເຂດພິເສດໃນການຊີ້ນຳ ແລະ ຄຸ້ມຄອງ ການດຳເນີນທຸລະກິດ ບໍ່ແຮ່ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ປະສານສົມທົບກັບພາກສ່ວນອື່ນໆ ແລະ ອຳນາດການປົກຄອງທີ່ກ່ຽວຂ້ອງ;

3. ຄົ້ນຄ້ວາ ແລະ ມີຄຳເຫັນກ່ຽວກັບການດຳເນີນທຸລະກິດບໍ່ແຮ່ ໃນຂອບເຂດການຄຸ້ມຄອງຂອງຕົນ;

4. ໃຫ້ອະນຸຍາດ ແລະ ຂຶ້ນທະບຽນຜູ້ຂຸດຄົ້ນແຮ່ທາດ ດ້ວຍການໃຊ້ເຄື່ອງມືຫັດຖະກຳເປັນອາຊີບ;

5. ກວດກາການດຳເນີນທຸລະກິດ ບໍ່ແຮ່ ທີ່ຢູ່ໃນຂອບເຂດການຄຸ້ມຄອງຂອງຕົນ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບການດຳເນີນທຸລະກິດ ບໍ່ແຮ່ ທີ່ທາງກະຊວງອຸດສາຫະກຳ-ຫັດຖະກຳ ມອບໝາຍໃຫ້.

ມາດຕາ 51 : ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ-ຫັດຖະກຳເມືອງ.

ໃນການຄຸ້ມຄອງ ແລະ ກວດກາການດຳເນີນທຸລະກິດ ບໍ່ແຮ່ ຫ້ອງການອຸດສາຫະກຳ-ຫັດຖະກຳ ເມືອງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການໃຫ້ພະແນກອຸດສາຫະກຳ-ຫັດຖະກຳ ແຂວງ, ກຳແພງນະຄອນ ຫລື ເຂດພິເສດ ແລະ ອຳນາດການປົກຄອງເມືອງ ໃນການຈັດຕັ້ງ ປະຕິບັດແຜນການ, ໂຄງການ, ຂໍ້ກຳນົດກົດລະບຽບ ແລະ ຂໍ້ແນະນຳ ຂອງພະແນກອຸດສາຫະກຳ-ຫັດຖະກຳ ແຂວງ, ກຳແພງນະຄອນ ຫລື ເຂດພິເສດ ກ່ຽວກັບການດຳເນີນທຸລະກິດ ບໍ່ແຮ່;

2. ປະສານສົມທົບກັບພາກສ່ວນອື່ນໆ ແລະ ອຳນາດການປົກຄອງທີ່ກ່ຽວຂ້ອງ;

3. ໃຫ້ອະນຸຍາດ ແລະ ກວດກາ ຜູ້ຂຸດຄົ້ນ ແຮ່ທາດ ດ້ວຍການໃຊ້ເຄື່ອງມືຫັດຖະກຳບໍ່ເປັນອາຊີບ ຂອງ ປະຊາຊົນ ພາຍໃນເມືອງຂອງຕົນ;

4. ອຳນວຍຄວາມສະດວກ ໃຫ້ແກ່ຜູ້ຂຸດຄົ້ນແຮ່ທາດ ຕາມລະບຽບກົດໝາຍ;

5. ປະຕິບັດສິດ ແລະ ໜ້າທີ່ ອື່ນໆ ກ່ຽວກັບການດຳເນີນທຸລະກິດ ບໍ່ແຮ່ ທີ່ພະແນກອຸດສາຫະກຳ-ຫັດຖະກຳ ມອບໝາຍໃຫ້.

ມາດຕາ 52 : ສິດ ແລະ ໜ້າທີ່ ຂອງອຳນາດການປົກຄອງບ້ານ.

ໃນການຕິດຕາມກວດກາການດຳເນີນທຸລະກິດ ບໍ່ແຮ່ ອຳນາດການປົກຄອງບ້ານມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ ແລະ ກວດກາການຂຸດຄົ້ນແຮ່ທາດ ດ້ວຍການໃຊ້ເຄື່ອງມືຫັດຖະກຳເປັນອາຊີບ ຫລື ບໍ່ເປັນອາຊີບ ໃນຂອບເຂດບ້ານຂອງຕົນ;

2. ສະເໜີ ແລະ ລາຍງານຕໍ່ການຈັດຕັ້ງ ກ່ຽວກັບການດຳເນີນທຸລະກິດບໍ່ແຮ່ ທີ່ແຕະຕ້ອງເຖິງສິດຜົນປະໂຫຍດຂອງປະຊາຊົນ, ຮີດຄອງປະເພນີອັນດີງາມ ແລະ ລະບຽບກົດໝາຍ;

3. ປົກປັກຮັກສາ ແລະ ລາຍງານ ຈຸດທີ່ເປັນປາກົດການ ແຮ່ທາດໃຫ້ຫ້ອງການອຸດສາຫະກຳ-ຫັດຖະກຳ ເມືອງ ແລະ ອຳນາດການປົກຄອງເມືອງ;

4. ອຳນວຍຄວາມສະດວກໃຫ້ແກ່ພາກສ່ວນທີ່ດຳເນີນທຸລະກິດ ບໍ່ແຮ່ ໃນຂອບເຂດບ້ານຂອງຕົນ;

5. ປະສານສົມທົບກັບພາກສ່ວນດຳເນີນທຸລະກິດ ບໍ່ແຮ່ ໃນການປົກປັກຮັກສາຄວາມສະຫງົບ ພາຍໃນຂອບເຂດບ້ານຂອງຕົນ;

6. ກວດກາການປະຕິບັດ ພັນທະຂອງ ຜູ້ຂຸດຄົ້ນ ແຮ່ທາດ ດ້ວຍການໃຊ້ເຄື່ອງມືຫັດຖະກຳເປັນອາຊີບ ຫລື ບໍ່ເປັນອາຊີບ.

ມາດຕາ 53 : ການກວດກາ ການດຳເນີນທຸລະກິດ ບໍ່ແຮ່.

ການກວດກາ ການດຳເນີນທຸລະກິດ ບໍ່ແຮ່ ແມ່ນການຕິດຕາມເບິ່ງການດຳເນີນທຸລະກິດ ບໍ່ແຮ່ ນັບຕັ້ງແຕ່ຂັ້ນຕອນຊອກຄົ້ນ, ສຳຫລວດ, ຂຸດຄົ້ນ, ປຸງແຕ່ງ, ຂົນຂາຍລວມທັງພາຍຫລັງການຢຸດເຊົາການດຳເນີນທຸລະກິດບໍ່ແຮ່ ເພື່ອເຮັດໃຫ້ຜູ້ດຳເນີນທຸລະກິດ ບໍ່ແຮ່ ປະຕິບັດຖືກຕ້ອງຕາມສັນຍາ, ຕາມກົດໝາຍວ່າດ້ວຍບໍ່ແຮ່ ແລະ ລະບຽບກົດໝາຍອື່ນໆຂອງ ສປປ ລາວ.

ເນື້ອໃນຕົ້ນຕໍ ຂອງ ການກວດກາມີ ດັ່ງນີ້:

1. ການປະຕິບັດຂັ້ນຕອນ ຂອງການດຳເນີນທຸລະກິດ ບໍ່ແຮ່;

2. ການປະຕິບັດກຳນົດເວລາ;

3. ການປະຕິບັດບົດວິພາກເສດຖະກິດ-ເຕັກນິກ;

4. ການປະຕິບັດແຜນການທີ່ໄດ້ວາງອອກ;

5. ການປະຕິບັດມາດຕະການຄວາມປອດໄພດ້ານວິຊາສະເພາະ;

6. ການປະຕິບັດມາດຕະການຈຳກັດຜົນກະທົບອັນບໍ່ດີ ຕໍ່ສິ່ງແວດລ້ອມ;

7. ເອກະສານທີ່ຈຳເປັນແກ່ການຄຸ້ມຄອງການດຳເນີນທຸລະກິດ ບໍ່ແຮ່;

8. ຊັບສົມບັດ ຂອງ ໂຄງການທຸລະກິດ ບໍ່ແຮ່;

9. ການປະຕິບັດພັນທະ ແລະ ລະບຽບການອື່ນໆ ກ່ຽວກັບ ການດຳເນີນທຸລະກິດ ບໍ່ແຮ່.

ການກວດກາ ການດຳເນີນທຸລະກິດ ບໍ່ແຮ່ ຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອຳນາດການປົກຄອງທ້ອງຖິ່ນ.

ມາດຕາ 54 : ວິທີກວດກາ ການດຳເນີນທຸລະກິດ ບໍ່ແຮ່.

ການກວດກາ ການດຳເນີນທຸລະກິດ ບໍ່ແຮ່ ອາດຈະດຳເນີນດ້ວຍຫລາຍວິທີ ດັ່ງນີ້: ກວດກາ ຕາມລະບົບປົກກະຕິ, ກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຫລື ກະທັນຫັນ ແລ້ວແຕ່

ກໍລະນີ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາ ທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍ ໜຶ່ງເທື່ອ ຕໍ່ ປີ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດກາເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ດຳເນີນທຸລະກິດ ບໍ່ແຮ່ ຮູ້ລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍບໍ່ມີການແຈ້ງໃຫ້ຮູ້ລ່ວງໜ້າ.

ການກວດກາ ອາດຈະດຳເນີນທັງການກວດກາເອກະສານ ແລະ ການລົງກວດກາສະຖານທີ່ປະຕິບັດງານ.

## ໝວດທີ VII
## ການແກ້ໄຂຂໍ້ຂັດແຍ່ງ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 55: ການແກ້ໄຂຂໍ້ຂັດແຍ່ງ.

ໃນການດຳເນີນທຸລະກິດ ບໍ່ແຮ່ ຖ້າຫາກມີຂໍ້ຂັດແຍ່ງເກີດຂຶ້ນ ຄູ່ສັນຍາ ຈະຕ້ອງຊອກຊ່ອງທາງແກ້ໄຂ ຂໍ້ຂັດແຍ່ງນັ້ນ ດ້ວຍການປະນີປະນອມກັນເສັຽກ່ອນ. ຖ້າຫາກບໍ່ສາມາດແກ້ໄຂໄດ້ຄູ່ສັນຍາອາດຈະສະເໜີຂໍ້ຂັດແຍ່ງນັ້ນ ຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຫລື ຕໍ່ສານປະຊາຊົນ ຂອງ ສປປ ລາວ ເພື່ອດຳເນີນການແກ້ໄຂ.

ສຳລັບການແກ້ໄຂຂໍ້ຂັດແຍ່ງລະຫວ່າງ ຜູ້ໃຊ້ແຮງງານກັບຜູ້ອອກແຮງງານແມ່ນໃຫ້ປະຕິບັດຕາມກົດໝາຍແຮງງານ ຂອງ ສປປ ລາວ.

ໃນກໍລະນີທີ່ມີຂໍ້ຂັດແຍ່ງ ລະຫວ່າງຜູ້ລົງທຶນຕ່າງປະເທດດ້ວຍກັນ ຫລື ຜູ້ລົງທຶນຕ່າງປະເທດ ກັບ ຜູ້ລົງທຶນຝ່າຍລາວນັ້ນໃຫ້ປະຕິບັດຕາມມາດຕາ 21 ຂອງ ກົດໝາຍວ່າດ້ວຍການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນ ຂອງ ຕ່າງປະເທດ ຢູ່ ສປປ ລາວ.

### ມາດຕາ 56 : ນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ.

ບຸກຄົນ ຫລື ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຄຸ້ມຄອງ, ການປົກປັກຮັກສາຊັບພະຍາກອນແຮ່ທາດ ແລະ ການດຳເນີນທຸລະກິດ ບໍ່ແຮ່ ຢ່າງມີປະສິດທິຜົນ ແລະ ຖືກຕ້ອງຕາມລະບຽບກົດໝາຍ ຂອງ ສປປ ລາວ ກໍ່ຈະໄດ້ຮັບການຍ້ອງຍໍ ແລະ ການປະຕິບັດນະໂຍບາຍ ຊຶ່ງລັດຖະບານເປັນຜູ້ກຳນົດ: ນະໂຍບາຍສິນເຊື່ອ, ການຕໍ່ອາຍຸ ການດຳເນີນທຸລະກິດ ບໍ່ແຮ່ ແລະ ອື່ນໆ.

### ມາດຕາ 57 : ມາດຕະການຕໍ່ຜູ້ລະເມີດ.

ບຸກຄົນ ຫລື ການຈັດຕັ້ງທີ່ລະເມີດກົດໝາຍສະບັບນີ້ຈະຖືກປະຕິບັດມາດຕະການດ້ວຍການສຶກສາອົບຮົມ, ການປັບໃໝ ຫລື ດ້ວຍການລົງໂທດທາງອາຍາຕາມແຕ່ກໍລະນີໜັກ ຫລື ເບົາ.

ນອກຈາກນີ້ກໍ່ອາດຈະຖືກປະຕິບັດໂທດເພີ້ມອີກ.

### ມາດຕາ 58 : ມາດຕະການສຶກສາອົບຮົມ.

ບຸກຄົນ ຫລື ການຈັດຕັ້ງຫາກລະເມີດກົດໝາຍສະບັບນີ້ໃນສະຖານເບົາບາງ ຫລື ເປັນເທື່ອທຳອິດ: ບໍ່ລາຍງານ ຫລື ລາຍງານບໍ່ຖືກຕາມກຳນົດເວລາ, ປະຕິບັດວຽກງານບໍ່ຖືກຕາມເຕັກນິກ, ບໍ່ໄດ້ຮັບອະນຸຍາດການຂຸດຄົ້ນ ແຮ່ທາດ ດ້ວຍການໃຊ້ເຄື່ອງມືຫັດຖະກຳເປັນອາຊີບ ຫລື ບໍ່ເປັນອາຊີບຈະຖືກຕັກເຕືອນ ແລະ ສຶກສາອົບຮົມ.

### ມາດຕາ 59 : ມາດຕະການປັບໃໝ.

ບຸກຄົນ ຫລື ການຈັດຕັ້ງຫາກໄດ້ລະເມີດກົດໝາຍວ່າດ້ວຍ ບໍ່ແຮ່ ດ້ວຍການກະທຳໃດໜຶ່ງດັ່ງນີ້:

1. ດຳເນີນທຸລະກິດ ບໍ່ແຮ່ ໂດຍບໍ່ມີໃບອະນຸຍາດ ຫລື ໃບອະນຸຍາດໝົດອາຍຸ;
2. ຊື້ຂາຍແຮ່ ແລະ ແຮ່ທາດໂດຍບໍ່ຖືກຕ້ອງຕາມລະບຽບການ;
3. ເອົາໃບອະນຸຍາດດຳເນີນທຸລະກິດ ບໍ່ແຮ່ ໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫລື ໂອນໂດຍບໍ່ຖືກຕ້ອງຕາມລະບຽບການ;
4. ລາຍງານບໍ່ຖືກຕ້ອງຕາມຄວາມເປັນຈິງ;
5. ລະເມີດຫລັກການຂຸດຄົ້ນແຮ່ທາດ;
6. ບໍ່ປະຕິບັດມາດຕະການໃນການຈຳກັດຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ, ປ່ອຍນ້ຳເປິະເປື້ອນ, ນ້ຳທີ່ມີແຮ່ທາດເບື່ອໄປກໍ່ຜົນກະທົບຕໍ່ສຸຂະພາບຂອງປະຊາຊົນ;
7. ບໍ່ປະຕິບັດມາດຕະການປົກປ້ອງຄວາມປອດໄພທາງດ້ານວິຊາການ ແລະ ແຮງງານ;
8. ສ້າງຄວາມເສັຽຫາຍແກ່ແຫລ່ງແຮ່ຍ້ອນຄວາມຜິດພາດຂອງຕົນ;
9. ບໍ່ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ຄຸ້ມຄອງ ແລະ ກວດກາ

ຈະຖືກປັບໃໝແຕ່ ຫ້າແສນກີບ ຫາ ສາມລ້ານ ກີບ ຖ້າເປັນການລະເມີດເທື່ອທີໜຶ່ງ;

ແຕ່ສາມລ້ານໜຶ່ງແສນ ກີບ ຫາ ຫ້າລ້ານ ກີບ ຖ້າເປັນການລະເມີດເທື່ອທີສອງ;

ແຕ່ຫ້າລ້ານໜຶ່ງແສນ ກີບ ຫາ ສິບລ້ານ ກີບ ຖ້າເປັນການລະເມີດເທື່ອທີສາມ.

ການລະເມີດທີ່ກ່າວໄວ້ໃນມາດຕາ 58 ເທິງນີ້ແຕ່ສາມເທື່ອຂຶ້ນໄປຈະຖືກປັບໃໝແຕ່ ຫ້າສິບພັນ ກີບ ຫາ ສອງແສນ ກີບ.

ສຳລັບການຂຸດຄົ້ນ ແຮ່ທາດດ້ວຍການໃຊ້ເຄື່ອງມືຫັດຖະກຳເປັນອາຊີບ ຫລື ບໍ່ເປັນອາຊີບຈະຖືກປັບໃໝແຕ່ສິບພັນ ກີບ ຫາ ຊາວພັນ ກີບ.

### ມາດຕາ 60 : ມາດຕະການທາງອາຍາ.

ໃນກໍລະນີທີ່ການລະເມີດກົດໝາຍວ່າດ້ວຍ ບໍ່ແຮ່ ຫາກເປັນການກະທຳຜິດທາງອາຍາ: ການປອມແປງໃບອະນຸຍາດດຳເນີນທຸລະກິດ ບໍ່ແຮ່, ການບໍ່ປະຕິບັດມາດຕະການຮັບປະກັນຄວາມປອດໄພດ້ານວິຊາການ ຊຶ່ງພາໃຫ້ຄົນເສັຽຊີວິດ ຫລື ເສັຽສຸຂະພາບຈະຖືກລົງໂທດຕາມກົດໝາຍ ອາຍາ.

ພະນັກງານ, ລັດຖະກອນຜູ້ໃດຫາກໄດ້ກະທຳຜິດທາງອາຍາ: ຮັບສິນບົນ, ໃຊ້ອຳນາດເກີນຂອບເຂດ, ປອມແປງເອກະສານ, ສວຍໃຊ້ໜ້າທີ່ເພື່ອຫາຜົນປະໂຫຍດສ່ວນຕົວຈາກການດຳເນີນທຸລະກິດ ບໍ່ແຮ່ ຈະຖືກລົງໂທດຕາມກົດໝາຍ ອາຍາ.

### ມາດຕາ 61 : ມາດຕະການໂທດເພີ້ມ.

ນອກຈາກໂທດທີ່ໄດ້ກຳນົດໄວ້ໃນມາດຕາ 59 ແລະ ມາດຕາ 60 ເທິງນີ້ແລ້ວຜູ້ລະເມີດອາດຈະຖືກປະຕິບັດມາດຕະການໂທດເພີ້ມອີກ: ການໂຈະ ການດຳເນີນທຸລະກິດ ບໍ່ແຮ່, ການຖອນໃບອະນຸຍາດ, ການຮິບພາຫະນະອຸປະກອນ ຂອງ ຜູ້ກະທຳຜິດ.

## ຫມວດທີ VIII
## ບົດບັນຍັດສຸດທ້າຍ

ມາດຕາ 62 :ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

ມາດຕາ 63 : ຜົນສັກສິດ

ກົດໝາຍສະບັບນີ້ມີຜົນສັກສິດພາຍຫລັງເກົ້າສິບວັນນັບແຕ່ມື້ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ສຳລັບບຸກຄົນ ແລະ ການຈັດຕັ້ງທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ບໍ່ແຮ່ ກ່ອນມື້ທີ່ກົດໝາຍສະບັບນີ້ມີຜົນສັກສິດນັ້ນກໍ່ມີສິດດຳເນີນທຸລະກິດ ບໍ່ແຮ່ ຕໍ່ໄປ.

ໃນກໍລະນີທີ່ມີສັນຍາໄດ້ເຊັນກັນກ່ອນແລ້ວນັ້ນຫາກບໍ່ສອດຄ່ອງກັບກົດໝາຍສະບັບນີ້ກໍໃຫ້ສະເໜີຕໍ່ອົງການທີ່ກ່ຽວຂ້ອງ ພາຍໃນກຳນົດຮ້ອຍຊາວວັນ ເພື່ອພິຈາລະນາແກ້ໄຂນັບແຕ່ມື້ກົດໝາຍສະບັບນີ້ມີຜົນສັກສິດເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ລ້ວນແຕ່ຖືກຍົກເລີກ.

ວຽງຈັນ,ວັນທີ 12 ເມສາ 1997

ປະທານສະພາແຫ່ງຊາດ

ສະໝານວິຍະເກດ

---

## ມະຕິຕົກລົງ
## ເລກທີ 04 /ສພຊ
## ວ່າດ້ວຍການຕົກລົງໃຫ້ສັດຕະຍາບັນ

ອີງຕາມມາດຕາ 40 ຂໍ້ 10 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບການຕົກລົງໃຫ້ສັດຕະຍາບັນ ຫລື ລົບລ້າງສົນທິສັນຍາ,ສັນຍາທີ່ໄດ້ເຊັນກັບຕ່າງປະເທດຕາມກົດໝາຍ ແລະ ລະບຽບການສາກົນ.

ອີງຕາມມາດຕາ48ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວກ່ຽວກັບບັນຫາທີ່ພົວພັນເຖິງຊາຕາກຳຂອງປະເທດຊາດ ແລະ ຜົນປະໂຫຍດອັນໃຫຍ່ຫລວງຂອງປະຊາຊົນຕ້ອງຜ່ານສະພາແຫ່ງຊາດ ຫລື ຄະນະປະຈຳສະພາແຫ່ງຊາດໃນລະຫວ່າງສອງສະໄໝຂອງກອງປະຊຸມສະພາແຫ່ງຊາດ;

ອີງຕາມໜັງສືສະເໜີຂອງທ່ານຮອງນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 62/ນຍ ລົງວັນທີ 15 ກັນຍາ 1997 ກ່ຽວກັບການຂໍພິຈາລະນາຮັບຮອງເອົາການໃຫ້ສັດຕະຍາບັນແກ່ສັນຍາລະຫວ່າງລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ຣາຊະອານາຈັກໄທ ເພື່ອຫລີກເວັ້ນການເກັບອາກອນຊ້ຳຊ້ອນ ແລະ ສະກັດກັ້ນການຫລົບຫລີກເສຍອາກອນຈາກການເກັບອາກອນລາຍໄດ້

ສະພາແຫ່ງຊາດຕົກລົງ:

ມາດຕາ 1 : ໃຫ້ສັດຕະຍາບັນແກ່ສັນຍາລະຫວ່າງລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງຣາຊະອານາຈັກໄທ ເພື່ອຫລີກເວັ້ນການເກັບອາກອນຊ້ຳຊ້ອນ ແລະ ສະກັດກັ້ນການຫລົບຫລີກເສຍອາກອນຈາກການເກັບອາກອນລາຍໄດ້ ເຊິ່ງໄດ້ລົງນາມ ໃນວັນທີ 20 ເດືອນ ມິຖຸນາ ປີ1997 ທີ່ນະຄອນຫລວງວຽງຈັນ ໂດຍ:

- ທ່ານ ສົມສະຫວາດ ເລັ່ງສະຫວັດ ລັດຖະມົນຕີວ່າການກະຊວງການຕ່າງປະເທດຜູ້ຕາງໜ້າລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
- ທ່ານ ປະຈວບ ໄຊຍະສານ ລັດຖະມົນຕີວ່າການກະຊວງການຕ່າງປະເທດ ຜູ້ຕາງໜ້າລັດຖະບານ ແຫ່ງ ຣາຊະນາຈັກໄທ.

ມາດຕາ 2 : ມະຕິສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 22 ຕຸລາ 1997

ປະທານຄະນະປະຈຳສະພາແຫ່ງຊາດ

ສະໝານ ວິຍະເກດ

<u>ປະທານປະເທດ</u>

## ລັດຖະບັນຍັດ
## ເລກທີ 03 ສປປ
## ວ່າດ້ວຍການອະນຸລັກມໍຣະດົກແຫ່ງຊາດທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ

- ອີງຕາມລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມາດຕາ 17, 19 ແລະ 53 ຂໍ້ 2;
- ອີງຕາມກົດໝາຍປ່າໄມ້ ສະບັບເລກທີ 01-96 / ສພຊ, ລົງວັນທີ 11 / 10 /1996;
- ອີງຕາມກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນແຫລ່ງນ້ຳ ສະບັບເລກທີ 02-96 / ສພຊ, ລົງວັນທີ 11 / 10 / 1996;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 19 / ຄປຈ ລົງວັນທີ 12 ມິຖຸນາ 1997 ວ່າດ້ວຍການອະນຸລັກມໍຣະດົກແຫ່ງຊາດ ທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ.

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ
ປະຊາຊົນລາວ ອອກລັດຖະບັນຍັດ :

### ຫມວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1 : ຈຸດປະສົງຂອງລັດຖະບັນຍັດ.**

ລັດຖະບັນຍັດ ວ່າດ້ວຍການອະນຸລັກມໍຣະດົກແຫ່ງຊາດທາງດ້ານວັດທະນະທຳ, ປະຫວັດສາດ ແລະທຳມະຊາດ ມີໜ້າທີ່ກຳນົດຫລັກການ ລະບຽບການ ແລະ ມາດຕະການຕ່າງໆກ່ຽວກັບການຄຸ້ມຄອງ, ການອະນຸລັກ, ການປົກປັກຮັກສາ ແລະ ການນຳໃຊ້ມໍຣະດົກແຫ່ງຊາດ ລວມທັງການທັນເອົາອະສັງຫາລິມະຊັບ, ສັງຫາລິມະຊັບທີ່ມີຄຸນຄ່າທາງດ້ານວັດທະນະທຳ ຫລືດ້ານປະຫວັດສາດ ແລະ ທຳມະຊາດມາເປັນມໍຣະດົກແຫ່ງຊາດ ເພື່ອແນໃສ່ຍົກສູງນ້ຳໃຈຮັກຊາດ ຮັກລະບອບປະຊາທິປະໄຕປະຊາຊົນ, ຮັກ ແລະ ຫວງ ແຫນວັດທະນະທຳອັນດີງາມຂອງຊາດ ແລະ ຂອງເຜົ່າລາວເຮົາ.

**ມາດຕາ 2 : ມໍລະດົກແຫ່ງຊາດ.**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ແມ່ນບັນດາຊັບສົມບັດຂອງລັດ, ຂອງລວມໝູ່ ຫລື ສ່ວນບຸກຄົນ ທີ່ມີຄຸນຄ່າທາງດ້ານວັດທະນະທຳ ຫລື ມີຄວາມໝາຍທາງດ້ານປະຫວັດສາດ ແລະ ເປັນຫລັກຖານຢັ້ງຢືນກ່ຽວກັບປະເທດລາວ, ກ່ຽວກັບບັນພະບຸລຸດຜູ້ໃຫ້ກຳເນີດ ແລະ ສ້າງຊາດລາວລວມທັງວັດຖຸບູຮານເກົ່າແກ່ທີ່ມີຄຸນຄ່າສູງທາງດ້ານປະຫວັດສາດ, ສິລະປະກຳ ຊຶ່ງມີອາຍຸແຕ່ ຫ້າສິບປີ ຂຶ້ນໄປ ແລະ ສະຖານທີ່ທຳມະຊາດກໍລ້ວນແຕ່ແມ່ນມໍລະດົກແຫ່ງຊາດ ຕາມຄວາມໝາຍຂອງລັດຖະບັນຍັດສະບັບນີ້.

**ມາດຕາ 3 : ການຄຸ້ມຄອງມໍລະດົກແຫ່ງຊາດ.**

ລັດຖະບານມີນະໂຍບາຍຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ ແລະ ເສີມຂະຫຍາຍວັດທະນະທຳອັນດີງາມຂອງຊາດ ແລະ ຂອງເຜົ່າລວມທັງການປະຕິສັງຂອນວັດຖຸບູຮານ ແລະ ບູຮານສະຖານທີ່ເປັນຮ່ອງຮອຍປະຫວັດສາດຂອງຊາດ.

**ມາດຕາ 4 : ພັນທະຂອງພົນລະເມືອງໃນການອະນຸລັກປົກປັກຮັກສາມໍລະດົກແຫ່ງຊາດ.**

ບຸກຄົນ ແລະ ການຈັດຕັ້ງມີພັນທະປະກອບສ່ວນເຂົ້າໃນການຄຸ້ມຄອງ, ການອະນຸລັກ, ການປົກປັກຮັກສາ ແລະ ການປະຕິສັງຂອນມໍລະດົກແຫ່ງຊາດ ເພື່ອໃຫ້ຍືນຍົງຄົງຕົວ ແລະ ຮັກຄຸນຄ່າທາງດ້ານປະຫວັດສາດ, ສິລະປະ ແລະ ວັດທະນະທຳທີ່ເປັນເອກະລັກຂອງຊາດໄວ້.

### ຫມວດທີ II
### ປະເພດມໍລະດົກແຫ່ງຊາດ

**ມາດຕາ 5 : ການແບ່ງປະເພດມໍລະດົກແຫ່ງຊາດ.**

ມໍລະດົກແຫ່ງຊາດທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ແບ່ງອອກເປັນສາມ ປະເພດຄື:
- ມໍລະດົກແຫ່ງຊາດທີ່ເປັນອະສັງຫາລິມະຊັບ;
- ມໍລະດົກແຫ່ງຊາດທີ່ເປັນສັງຫາລິມະຊັບ;
- ມໍລະດົກແຫ່ງຊາດທີ່ເປັນທຳມະຊາດ.

**ມາດຕາ 6 : ມໍລະດົກແຫ່ງຊາດທີ່ເປັນອະສັງຫາລິມະຊັບ.**

ມໍລະດົກແຫ່ງຊາດທີ່ເປັນອະສັງຫາລິມະຊັບ ປະກອບດ້ວຍວັດຖຸບູຮານ, ບູຮານສະຖານ, ຮ່ອງຮອຍປະຫວັດສາດຂອງຊາດ ທີ່ບໍ່ສາມາດເຄື່ອນຍ້າຍໄປມາໄດ້ເຊັ່ນ: ທາດຫລວງວຽງຈັນ, ວັດພະແກ້ວ, ວັດຊຽງທອງຫລວງພະບາງ ທົ່ງໄຫຫີນ ແລະ ອື່ນໆ.

**ມາດຕາ 7 : ມໍລະດົກແຫ່ງຊາດທີ່ເປັນສັງຫາລິມະຊັບ**

ມໍລະດົກແຫ່ງຊາດທີ່ເປັນສັງຫາລິມະຊັບ ປະກອບດ້ວຍວັດຖຸບູຮານທີ່ເຄື່ອນຍ້າຍໄປມາໄດ້ເຊັ່ນ: ພະພຸດທະຮູບ, ຄ້ອງບ້າງ, ທອກ, ງ້າວ, ກ້ອງແຂນ, ໝໍ້-ໄຫເກົ່າແກ່ ແລະ ອື່ນໆ.

**ມາດຕາ 8 : ມໍລະດົກແຫ່ງຊາດທີ່ເປັນທຳມະຊາດ**

ມໍລະດົກແຫ່ງຊາດທີ່ເປັນທຳມະຊາດ ແມ່ນສະຖານທີ່ ທີ່ປະກອບດ້ວຍສິ່ງແວດລ້ອມອັນສວຍງາມຊຶ່ງລວມມີທິວທັດທຳມະຊາດທີ່ປະກອບສ້າງຂຶ້ນໂດຍທຳມະຊາດເອງ, ທິວທັດທຳມະຊາດປະສົມກັບສິ່ງກໍ່ສ້າງ ແລະ ສະຖາປັດຕິຍະກຳທີ່ມີຄຸນຄ່າສູງທາງດ້ານປະຫວັດສາດ, ສິລະປະ, ວັດທະນະທຳ, ວິທະຍາສາດ, ເຕັກນິກ, ຊົນເຜົ່າວິທະຍາ ຫລື ທາງດ້ານສະພາບແວດລ້ອມ ແລະ ຊຶ່ງເຫັນສົມຄວນທີ່ຈະຕ້ອງສະຫງວນຮັກສາໄວ້ ເພື່ອເປັນມໍລະດົກຂອງຊາດເຊັ່ນ : ຄອນພະເພັງ, ຕາດກວາງຊີ ຖ້ຳຕິ່ງຫລວງພະບາງ ແລະ ອື່ນໆ.

### ໝວດທີ III
### ການຄຸ້ມຄອງມໍລະດົກແຫ່ງຊາດ

**ມາດຕາ 9 : ອົງການຄຸ້ມຄອງມໍລະດົກແຫ່ງຊາດ**

ອົງການຄຸ້ມຄອງມໍລະດົກແຫ່ງຊາດ ປະກອບດ້ວຍກະຊວງຖະແຫລງຂ່າວ ແລະ ວັດທະນະທຳ, ພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ, ຫ້ອງການຖະແຫລງ

ຂ່າວ ແລະ ວັດທະນະທຳເມືອງ ແລະ ອຳນາດການປົກຄອງບ້ານ.

ເພື່ອເຮັດໃຫ້ການຄຸ້ມຄອງ, ການອະນຸລັກ ແລະ ການປົກປັກຮັກສາມໍລະດົກແຫ່ງຊາດ ມີປະສິດທິຜົນດີນັ້ນ ກໍອາດຈະສ້າງຕັ້ງອົງການໃດໜຶ່ງຂຶ້ນ ເພື່ອໃຫ້ຄຳປຶກສາຫາລື ຫລື ປະກອບຄວາມຄິດ ຄວາມເຫັນ ກ່ຽວກັບວຽກງານດັ່ງກ່າວ.

**ມາດຕາ 10 : ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງມໍລະດົກແຫ່ງຊາດ**

ອົງການຄຸ້ມຄອງມໍລະດົກແຫ່ງຊາດມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າທິດທາງ, ແຜນການ ແລະ ລະບຽບການກ່ຽວກັບການຄຸ້ມຄອງ ການອະນຸລັກ ແລະ ການປົກປັກຮັກສາ ມໍລະດົກແຫ່ງຊາດ ດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ;
2. ສຳຫລວດຂຶ້ນບັນຊີອະສັງຫາລິມະຊັບ, ສັງຫາລິມະຊັບ ແລະ ສະຖານທີ່ທຳມະຊາດທີ່ເປັນມໍລະດົກແຫ່ງຊາດ ຫລື ທີ່ເຫັນສົມຄວນໃຫ້ເປັນມໍລະດົກແຫ່ງຊາດ, ເພື່ອສະເໜີເອົາເປັນມໍລະດົກທ້ອງຖິ່ນ, ມໍລະດົກແຫ່ງຊາດ ຫລື ມໍລະດົກໂລກ;
3. ແກ້ໄຂບັນຫາ ແລະ ຂໍ້ຂັດແຍ່ງທີ່ນອນຢູ່ໃນສິດ ແລະ ໜ້າທີ່ຂອງຕົນ;
4. ພົວພັນຮ່ວມມື ແລະ ແລກປ່ຽນບົດຮຽນກ່ຽວກັບການຄຸ້ມຄອງ, ການອະນຸລັກ ແລະ ການປົກປັກຮັກສາມໍລະດົກແຫ່ງຊາດກັບຕ່າງປະເທດ;
5. ຂົນຂວາຍຊອກຫາແຫລ່ງທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານການຄຸ້ມຄອງ, ການອະນຸລັກ ແລະ ການປົກປັກຮັກສາມໍລະດົກແຫ່ງຊາດ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 11 : ການສຳຫລວດ**

ການສຳຫລວດມໍລະດົກແຫ່ງຊາດ ແມ່ນການລົງເກັບກຳຂໍ້ມູນທາງດ້ານວິຊາການ ກ່ຽວກັບມໍລະດົກແຫ່ງຊາດເຊັ່ນ: ທີ່ຕັ້ງ,ຂະໜາດ,ນ້ຳໜັກ,ຈຳນວນ,ລັກສະນະຮູບປະພັນ, ຄຸນຄ່າ, ຈາກນັ້ນຈຶ່ງດຳເນີນການຂຶ້ນບັນຊີໃນທຸກໆ ຫ້າ ປີ.

**ມາດຕາ 12 : ການຂຶ້ນບັນຊີມໍລະດົກແຫ່ງຊາດ**

ການຂຶ້ນບັນຊີມໍລະດົກແຫ່ງຊາດ ແມ່ນການຈົດ, ນັບຈຳນວນມໍລະດົກແຫ່ງຊາດທີ່ເປັນອະສັງຫາລິມະຊັບ ແລະ ສັງຫາລິມະຊັບລວມທັງສະຖານທີ່ທຳມະຊາດ, ຮ່ອງຮອຍປະຫວັດສາດຂອງຊາດ, ຂອງການປະຕິວັດທີ່ຄົ້ນພົບຢູ່ໜ້າດິນ, ໃຕ້ດິນ ຫລື ຢູ່ພື້ນນ້ຳ ໃນດິນແດນຂອງ ສ.ປປ ລາວ ຊຶ່ງຕ້ອງດຳເນີນໃນທຸກໆ ຫ້າ ປີ.

**ມາດຕາ 13 : ການເຄື່ອນຍ້າຍ**

ທຸກການເຄື່ອນຍ້າຍສັງຫາລິມະຊັບທີ່ເປັນມໍລະດົກແຫ່ງຊາດ ຢູ່ພາຍໃນປະເທດກໍຄືການສົ່ງອອກໄປຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ແລະ ການນຳວັດຖຸທາງດ້ານວັດທະນະທຳ, ວັດຖຸບູຮານຕ່າງໆເຂົ້າປະເທດກໍຕ້ອງໄດ້ຮັບອະນຸຍາດຈາກກະຊວງຖະແຫລງຂ່າວ ແລະ ວັດທະນະທຳເຊັ່ນດຽວກັນ.

**ມາດຕາ 14 : ການບູລະນະສ້ອມແປງ**

ການບູລະນະ, ການສ້ອມແປງ ຫລື ການດັດແປງຮູບປະພັນຂອງມໍລະດົກແຫ່ງຊາດທີ່ເປັນອະສັງຫາລິມະຊັບ, ສັງຫາລິມະຊັບ ແລະ ສະຖານທີ່ທຳມະຊາດຈະດຳເນີນໄດ້ກໍຕໍ່ເມື່ອຫາກໄດ້ຮັບອະນຸຍາດຈາກກະຊວງຖະແຫລງຂ່າວ ແລະ ວັດທະນະທຳເທົ່ານັ້ນ.

**ມາດຕາ 15 : ການຫ້າມທຳລາຍມໍລະດົກແຫ່ງຊາດ**

ຫ້າມບຸກຄົນ ຫລື ການຈັດຕັ້ງກໍ່ຄວາມເສຍຫາຍແກ່ວັດຖຸບູຮານ, ສະຖານທີ່ກໍ່ສ້າງສິລະປະກຳທີ່ເປັນອະສັງຫາລິມະຊັບ, ສັງຫາລິມະຊັບ ຫລື ສະຖານທີ່ທຳມະຊາດທີ່ເປັນມໍລະດົກແຫ່ງຊາດ ຈະແມ່ນການກະທຳໂດຍເຈດຕະນາ ຫລື ດ້ວຍຄວາມບໍ່ລະມັດລະວັງກໍ່ຕາມ.

ຫ້າມປຸກສິ່ງກໍ່ສ້າງ, ຮ້ານອາຫານ ຫລື ຈັດສະຖານທີ່ບັນເທີງໃສ່ໃນບໍລິເວນສະຖານບູຮານ ຫລື ສະຖານທີ່ອທັດທຳມະຊາດທີ່ເປັນມໍລະດົກແຫ່ງຊາດ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກກະຊວງຖະແຫລງຂ່າວ ແລະ ວັດທະນະທຳເທົ່ານັ້ນ.

ການນຳໃຊ້, ການສ້ອມແປງ ຫລື ການດັດແປງອະສັງຫາລິມະຊັບ, ສັງຫາລິມະຊັບ ຫລື ສະຖານທີ່ທຳມະຊາດທີ່ເປັນມໍລະດົກແຫ່ງຊາດ ຊຶ່ງເປັນກຳມະສິດຂອງບຸກຄົນ ຫລື ການຈັດຕັ້ງທີ່ໄດ້ຂຶ້ນບັນຊີເປັນມໍລະດົກແຫ່ງຊາດແລ້ວຕ້ອງໄດ້ຮັບອະນຸຍາດ ແລະປະຕິບັດຕາມລະບຽບການທີ່ກະຊວງຖະແຫລງຂ່າວ ແລະ ວັດທະນະທຳໄດ້ກຳນົດອອກ.

**ມາດຕາ 16 : ການຊື້ຂາຍວັດຖຸບູຮານທີ່ເປັນມໍລະດົກແຫ່ງຊາດ**

ຫ້າມບຸກຄົນ ແລະ ການຈັດຕັ້ງທຳການຊື້ຂາຍ ຫລື ໂອນວັດຖຸບູຮານທີ່ເປັນມໍລະດົກແຫ່ງຊາດ ເວັ້ນເສຍແຕ່ໄດ້ຮັບອະນຸຍາດສະເພາະຈາກກະຊວງຖະແຫລງຂ່າວ ແລະ ວັດທະນະທຳເທົ່ານັ້ນ.

ບຸກຄົນ ຫລື ການຈັດຕັ້ງໃດຫາກມີຈຸດປະສົງຢາກຂາຍ ຫລື ໂອນວັດຖຸບູຮານທີ່ໄດ້ສະຫງວນເປັນມໍລະດົກແຫ່ງຊາດ ຊຶ່ງເປັນກຳມະສິດຂອງຕົນນັ້ນ ຕ້ອງຂໍອະນຸຍາດຈາກກະຊວງຖະແຫລງຂ່າວ ແລະ ວັດທະນະທຳເສຍກ່ອນ, ການຂໍອະນຸຍາດນັ້ນຕ້ອງສະເໜີຕໍ່ກະຊວງຖະແຫລງຂ່າວ ແລະ ວັດທະນະທຳລ່ວງໜ້າໜຶ່ງເດືອນ ກ່ອນມື້ຊື້ຂາຍ ຫລື ໂອນກຳມະສິດ.ພາຍຫລັງທີ່ໄດ້ຂາຍ ຫລື ໂອນກຳມະສິດແລ້ວກໍຕ້ອງແຈ້ງໃຫ້ກະຊວງຖະແຫລງຂ່າວ ແລະ ວັດທະນະທຳຊາບ ພາຍໃນກຳນົດ ສາມເດືອນ ນັບແຕ່ມື້ຂາຍ ຫລື ໂອນເປັນຕົ້ນໄປ.

ໃນກໍລະນີທີ່ເຫັນວ່າວັດຖຸບູຮານນັ້ນມີຄວາມສຳຄັນທາງດ້ານວັດທະນະທຳ ລັດມີບຸລິມະສິດຊື້ເອົາວັດຖຸດັ່ງກ່າວນັ້ນໃນລາຄາທີ່ເໝາະສົມ.

ການຊື້ຂາຍວັດຖຸບູຮານເກົ່າແກ່ທີ່ບໍ່ໄດ້ຈັດເຂົ້າໃນບັນຊີມໍລະດົກແຫ່ງຊາດ ກໍຕ້ອງປະຕິບັດຕາມລະບຽບການສະເພາະທີ່ກະຊວງຖະແຫລງຂ່າວ ແລະ ວັດທະນະທຳກຳນົດອອກ.

**ມາດຕາ 17 : ກອງທຶນອະນຸລັກມໍລະດົກແຫ່ງຊາດ**

ເພື່ອຮັບປະກັນໃຫ້ວຽກງານການຄຸ້ມຄອງ, ການອະນຸລັກ ແລະ ການປົກປັກຮັກສາມໍລະດົກແຫ່ງຊາດດຳເນີນໄປຢ່າງມີປະສິດທິຜົນດີນັ້ນ ລັດຈະສ້າງກອງທຶນອະນຸລັກມໍລະດົກແຫ່ງຊາດຂຶ້ນ. ແຫລ່ງກອງທຶນມໍລະດົກແຫ່ງຊາດ ໄດ້ມາຈາກງົບປະມານຂອງລັດ, ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ລວມໝູ່, ຂອງອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະ ຈາກແຫລ່ງ

ອື່ນໆອີກ.

## ໝວດທີ IV
## ການຄົ້ນພົບ
## ແລະການຂຸດຄົ້ນວັດຖຸບູຮານ

**ມາດຕາ 18 : ການຄົ້ນພົບວັດຖຸບູຮານ**

ບຸກຄົນ ຫລືການຈັດຕັ້ງໃດ ຫາກໄດ້ພົບເຫັນວັດຖຸບູຮານ, ບູຮານສະຖານ, ຮ່ອງຮອຍປະຫວັດສາດເກົ່າແກ່ທີ່ມີຄຸນຄ່າສູງທາງດ້ານປະຫວັດສາດ, ສິລະປະວັດທະນະທຳ, ບູຮານວິທະຍາ ຕ້ອງແຈ້ງຕໍ່ອຳນາດການປົກຄອງ, ຫ້ອງການຖະແຫລງຂ່າວ ແລະ ວັດທະນະທຳເມືອງ ຫລື ພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ, ກຳແພງນະຄອນ ແລະ ເຂດພິເສດບ່ອນທີ່ວັດຖຸບູຮານຕັ້ງຢູ່ ຫລື ຕໍ່ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ພາຍໃນກຳນົດ ສາມ ວັນ ນັບແຕ່ມື້ໄດ້ພົບເຫັນເປັນຕົ້ນໄປ.

**ມາດຕາ 19 : ການຂຸດຄົ້ນ**

ຫ້າມບຸກຄົນ ຫລື ການຈັດຕັ້ງຂຸດຄົ້ນວັດຖຸບູຮານ ຫລື ວັດຖຸທີ່ມີຄຸນຄ່າທາງດ້ານປະຫວັດສາດ, ສິລະປະ, ວິທະຍາສາດ, ເຕັກນິກ ຫລື ບູຮານວິທະຍາ ຈະແມ່ນຢູ່ໃນທີ່ດິນຂອງຕົນ ຫລື ຂອງຜູ້ອື່ນກໍ່ຕາມ ຖ້າຫາກບໍ່ໄດ້ຮັບອະນຸຍາດຈາກກະຊວງຖະແຫລງຂ່າວ ແລະ ວັດທະນະທຳ.

ການຂຸດຄົ້ນວັດຖຸບູຮານຈະດຳເນີນໄດ້ກໍ່ຕໍ່ເມື່ອມີຈຸດປະສົງ ເພື່ອຮັບໃຊ້ການສຶກສາຄົ້ນຄວ້າທາງວິທະຍາສາດ, ປະຫວັດສາດ ຫລື ເພື່ອອະນຸລັກ ແລະ ປົກປັກຮັກສາວັດຖຸບູຮານດັ່ງກ່າວເທົ່ານັ້ນ.

**ມາດຕາ 20 : ການຮ້ອງຂໍອະນຸຍາດຂຸດຄົ້ນວັດຖຸບູຮານ**

ບຸກຄົນ ຫລື ການຈັດຕັ້ງໃດ ຫາກມີຈຸດປະສົງຢາກຂຸດຄົ້ນ ຫລື ຊອກຫາວັດຖຸບູຮານ ຕ້ອງຍື່ນຄຳຮ້ອງຕໍ່ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ. ໃນສຳນວນຄຳຮ້ອງຂໍນັ້ນ ຕ້ອງຊີ້ແຈງເຖິງທີ່ຕັ້ງ, ຄວາມໝາຍສຳຄັນ ແລະກຳນົດເວລາໃນການຂຸດຄົ້ນໃຫ້ຈະແຈ້ງ.

ໃນກໍລະນີທີ່ການຂຸດຄົ້ນຫາກຈະດຳເນີນຢູ່ໃນເນື້ອທີ່ດິນຂອງບຸກຄົນອື່ນນັ້ນ ກໍ່ຕ້ອງໃຫ້ມີໃບຢັ້ງຢືນຄວາມເຫັນດີເຫັນພ້ອມຂອງຜູ້ເປັນເຈົ້າຂອງທີ່ດິນນັ້ນຄັດຕິດນຳພ້ອມ.

**ມາດຕາ 21 : ການດຳເນີນການຂຸດຄົ້ນ**

ການຂຸດຄົ້ນຕ້ອງດຳເນີນໄປຕາມເງື່ອນໄຂ ແລະ ມາດຕະການຕ່າງໆທີ່ກະຊວງຖະແຫລງຂ່າວ ແລະ ວັດທະນະທຳກຳນົດໃຫ້. ຜູ້ທີ່ໄດ້ຮັບອະນຸຍາດຂຸດຄົ້ນຕ້ອງທຳການຂຸດຄົ້ນດ້ວຍຕົນເອງ ແລະ ຮັບຜິດຊອບຮອບດ້ານຕໍ່ການຂຸດຄົ້ນນັ້ນ.

ໃນເວລາດຳເນີນການຂຸດຄົ້ນຢູ່ນັ້ນ ຜູ້ທີ່ໄດ້ຮັບອະນຸຍາດຕ້ອງເຮັດບົດລາຍງານໃຫ້ກະຊວງຖະແຫລງຂ່າວ ແລະ ວັດທະນະທຳຢ່າງເປັນປະຈຳ.

ທຸກຄັ້ງທີ່ຂຸດຄົ້ນພົບວັດຖຸບູຮານ ຫລື ບູຮານສະຖານທີ່ສຳຄັນ ຜູ້ຂຸດຄົ້ນຕ້ອງປົກປັກຮັກສາໄວ້ໃຫ້ດີ ແລະ ລາຍງານຢ່າງຄົບຖ້ວນໃຫ້ກະຊວງຖະແຫລງຂ່າວ ແລະ ວັດທະນະທຳຊາບໃນທັນໃດ ເພື່ອສຶກສາພິຈາລະນາ ແລະ ຕັດສິນຊີ້ຂາດກ່ຽວກັບວັດຖຸເຫລົ່ານັ້ນ.

ເມື່ອສິ້ນສຸດການຂຸດຄົ້ນແລ້ວ ກໍ່ຕ້ອງເຮັດບົດລາຍງານຜົນທີ່ໄດ້ຮັບພ້ອມດ້ວຍເອກະສານຕິດຄັດເຊັ່ນ: ຮູບແຕ້ມ, ຮູບຖ່າຍ ແລະ ເອກະສານບັນທຶກຕ່າງໆ.

ພາຍໃນກຳນົດ ສາມ ປີ ນັບແຕ່ມື້ສິ້ນສຸດການຂຸດຄົ້ນເປັນຕົ້ນໄປ, ຜູ້ຂຸດຄົ້ນຕ້ອງພິມເຜີຍແຜ່ຜົນຂອງການຂຸດຄົ້ນຂອງຕົນທາງດ້ານວິທະຍາສາດ ແລະ ປະຫວັດສາດໃຫ້ມະຫາຊົນຊາບ. ຖ້າຫາກກາຍກຳນົດ ສາມ ປີແລ້ວຜູ້ຂຸດຄົ້ນຫາກຍັງບໍ່ທັນພິມເຜີຍແຜ່ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳມີສິດພິມເຜີຍແຜ່ຜົນງານທາງວິທະຍາສາດ ແລະ ປະຫວັດສາດກ່ຽວກັບການຂຸດຄົ້ນດັ່ງກ່າວນັ້ນ.

**ມາດຕາ 22 : ກຳມະສິດຕໍ່ວັດຖຸທີ່ຄົ້ນພົບ**

ທຸກວັດຖຸທີ່ເປັນອະສັງຫາລິມະຊັບ ຫລື ສັງຫາລິມະຊັບ ທີ່ຄົ້ນພົບໃນເວລາຂຸດຄົ້ນນັ້ນ ແມ່ນເປັນກຳມະສິດຂອງລັດ. ພາຍຫລັງສິ້ນສຸດການຂຸດຄົ້ນແລ້ວ ຜູ້ຂຸດຄົ້ນຕ້ອງໄດ້ມອບວັດຖຸທັງໝົດທີ່ຄົ້ນພົບພ້ອມດ້ວຍຂໍ້ມູນເອກະສານທີ່ກ່ຽວຂ້ອງໃຫ້ກະຊວງຖະແຫລງຂ່າວແລະວັດທະນະທຳຢ່າງຄົບຖ້ວນ.

ເຈົ້າຂອງທີ່ດິນບໍ່ມີສິດເປັນເຈົ້າຂອງວັດຖຸທີ່ຄົ້ນພົບນັ້ນແຕ່ຈະໄດ້ຮັບການທົດແທນຄ່າເສຍຫາຍຈາກລັດຕາມສົມຄວນ.

**ມາດຕາ 23 : ການປົດວັດຖຸບູຮານອອກຈາກບັນຊີມໍລະດົກແຫ່ງຊາດ.**

ອະສັງຫາລິມະຊັບ, ສັງຫາລິມະຊັບ ຫລື ສະຖານທີ່ທຳມະຊາດທີ່ເປັນມໍລະດົກແຫ່ງຊາດນັ້ນ ເມື່ອເຫັນວ່າໝົດຄຸນຄ່າໃນການເປັນວັດຖຸບູຮານ, ວັດທະນະທຳ, ສິລະປະກຳ, ວັນນະກຳ ຫລື ປະຫວັດສາດແຫ່ງຊາດແລ້ວອາດຈະຖືກປົດອອກຈາກບັນຊີມໍລະດົກແຫ່ງຊາດ ໂດຍລັດຖະບານເປັນຜູ້ຕົກລົງຕາມການສະເໜີຂອງລັດຖະມົນຕີວ່າການກະຊວງຖະແຫລງຂ່າວ ແລະ ວັດທະນະທຳ.

ສຳລັບມໍລະດົກທ້ອງຖິ່ນນັ້ນ ແມ່ນລັດຖະມົນຕີວ່າການກະຊວງຖະແຫລງຂ່າວ ແລະ ວັດທະນະທຳເປັນຜູ້ຕົກລົງຕາມການສະເໜີຂອງພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ, ກຳແພງນະຄອນ ຫລື ເຂດພິເສດ ພາຍຫລັງທີ່ໄດ້ສົມທົບ ແລະ ເຫັນດີເປັນເອກະພາບກັບອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງນັ້ນແລ້ວ.

**ມາດຕາ 24 : ການຖອນໃບອະນຸຍາດຂຸດຄົ້ນ.**

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳມີສິດຖອນໃບອະນຸຍາດຂຸດຄົ້ນ ແລະ ສັ່ງຢຸດການຂຸດຄົ້ນໃນກໍລະນີດັ່ງນີ້:

1. ການຂຸດຄົ້ນ ຫລື ການປົກປັກຮັກສາ ວັດຖຸບູຮານຫາກດຳເນີນໄປໂດຍບໍ່ຖືກຕ້ອງຕາມມາດຕະຖານດ້ານວິຊາການ ຫລື ລະບຽບການຕ່າງໆທີ່ລັດວາງອອກ;
2. ສະຖານທີ່ ທີ່ໄດ້ອະນຸຍາດໃຫ້ຂຸດຄົ້ນນັ້ນມີຄວາມສຳຄັນຫລາຍ ແລະ ການຂຸດຄົ້ນນັ້ນກະຊວງຖະແຫລງຂ່າວ ແລະ ວັດທະນະທຳມີຄວາມຈຳເປັນ ຈະຕ້ອງໄດ້ສືບຕໍ່ດ້ວຍຕົນເອງ; ນັບແຕ່ມື້ໄດ້ຮັບໃບແຈ້ງການຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທຳໃຫ້ຢຸດຕິການຂຸດຄົ້ນແລ້ວຜູ້ຂຸດຄົ້ນຕ້ອງຢຸດເຊົາການຂຸດຄົ້ນນັ້ນ ໃນທັນໃດ.

**ມາດຕາ 25 : ການທົດແທນຄ່າເສຍຫາຍໃນການຂຸດຄົ້ນ.**

ບຸກຄົນ ຫລື ການຈັດຕັ້ງໃດ ຫາກຖືກຖອນໃບອະນຸຍາດຂຸດຄົ້ນຍ້ອນບໍ່ປະຕິບັດຕາມມາດຕະຖານວິຊາການ ຫລື ລະບຽບການຕ່າງໆ ທີ່ໄດ້ກຳນົດໄວ້ໃນມາດຕາ 24 ເທິງນີ້ ຈະບໍ່ມີສິດຮ້ອງຂໍເອົາຄ່າປ່ອຍການ

ຫລື ການທົດແທນຄ່າໃຊ້ຈ່າຍຕ່າງໆ ໃນການດຳເນີນການຂຸດຄົ້ນນັ້ນ. ໃນກໍລະນີການຖອນໃບອະນຸຍາດນັ້ນ ຫາກດຳເນີນຍ້ອນສະຖານທີ່ຂຸດຄົ້ນນັ້ນມີຄວາມສຳຄັນຫລາຍ ຊຶ່ງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ມີຄວາມຈຳເປັນຈະຕ້ອງດຳເນີນການຂຸດຄົ້ນດ້ວຍຕົນເອງ ຜູ້ດຳເນີນການຂຸດຄົ້ນຈະໄດ້ຮັບການທົດແທນຄ່າໃຊ້ຈ່າຍໃນການຂຸດຄົ້ນນັ້ນ ແຕ່ຫາກບໍ່ມີສິດຮ້ອງຂໍເອົາຄ່າປ່ວຍການ.

**ມາດຕາ 26 : ສິດຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ.**

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ມີສິດຈັດຕັ້ງດຳເນີນການຂຸດຄົ້ນ ຊອກຫາວັດຖຸບູຮານທຸກແຫ່ງໃນດິນແດນຂອງ ສປປ ລາວ.

ໃນກໍລະນີທີ່ການຂຸດຄົ້ນນັ້ນຫາກດຳເນີນຢູ່ໃນເນື້ອທີ່ດິນ ທີ່ຢູ່ໃນການຄອບຄອງຂອງບຸກຄົນ ຫລື ການຈັດຕັ້ງອື່ນ ການຂຸດຄົ້ນຈະດຳເນີນໄດ້ກໍຕໍ່ເມື່ອໄດ້ຮັບຄວາມເຫັນດີຈາກຜູ້ເປັນເຈົ້າຂອງທີ່ດິນນັ້ນເສຍກ່ອນ ແລະ ການຂຸດຄົ້ນຕ້ອງໃຫ້ສຳເລັດພາຍໃນກຳນົດ ຫ້າ ປີ ຢ່າງຊ້ານັບແຕ່ມື້ລົງມືຂຸດຄົ້ນເປັນຕົ້ນໄປ.

**ມາດຕາ 27 : ການປົວແປງສະຖານທີ່ຂຸດຄົ້ນ.**

ບຸກຄົນ ຫລື ການຈັດຕັ້ງ ພາຍຫລັງໄດ້ດຳເນີນການຂຸດຄົ້ນຫາວັດຖຸບູຮານສຳເລັດແລ້ວຕ້ອງເຮັດໃຫ້ສະຖານທີ່ດັ່ງກ່າວຄືນສູ່ສະພາບດີເໝືອນເດີມເຊັ່ນ: ເອົາດິນທີ່ຂຸດອອກນັ້ນຖົມຄືນ, ປູກຕົ້ນໄມ້ຄືນ ແລະ ອື່ນໆ.

## ຫມວດທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 28 : ນະໂຍບາຍຕໍ່ຜູ້ມີຜົນງານ.**

ບຸກຄົນ ຫລື ການຈັດຕັ້ງທີ່ມີຜົນງານ ໃນການຄຸ້ມຄອງ, ການອະນຸລັກ, ການປົກປັກຮັກສາມໍລະດົກແຫ່ງຊາດທາງດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດນັ້ນ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຊຶ່ງລັດຖະບານເປັນຜູ້ກຳນົດ.

**ມາດຕາ 29 : ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫລື ການຈັດຕັ້ງໃດ ຫາກລະເມີດລັດຖະບັນຍັດສະບັບນີ້ ຈະຖືກຕັກເຕືອນ, ສຶກສາອົບຮົມ, ປັບໃໝ ຫລື ລົງໂທດຕາມລະບຽບກົດໝາຍ ແລ້ວແຕ່ກໍລະນີໜັກ ຫລື ເບົາ.

## ຫມວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາ 30 : ການຈັດຕັ້ງປະຕິບັດ.**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີໜ້າທີ່ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້.

**ມາດຕາ 31 : ຜົນສັກສິດ.**

ລັດຖະບັນຍັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ລົງລາຍເຊັນເປັນຕົ້ນໄປ.

ທຸກໆຂໍ້ກຳນົດທີ່ຂັດກັບລັດຖະບັນຍັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ 20 ມິຖຸນາ 1997.

ປະທານປະເທດ
ໜູຮັກ ພູມສະຫວັນ

---

## ລັດຖະດຳລັດ
## ເລກທີ 33 ສປປ
## ກ່ຽວກັບການປະກາດ ໃຊ້ກົດໝາຍວ່າດ້ວຍທີ່ດິນ

- ອີງຕາມລັດຖະທຳມະນູນແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຫມວດທີ V ມາດຕາ 53 ຂໍ້ 1 ;
- ອີງຕາມມະຕິຕົກລົງຂອງກອງປະຊຸມເທື່ອທີ 10 ສະໄໝສາມັນຂອງສະພາແຫ່ງຊາດຊຸດທີ III ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 01- 97 / ສພຊ ລົງວັນທີ 12 ເມສາ 1997 ;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 13 / ຄປຈ, ລົງວັນທີ 7 ພຶດສະພາ 1997.

ປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

**ມາດຕາ 1 : ປະກາດໃຊ້ກົດໝາຍວ່າດ້ວຍທີ່ດິນ.**

**ມາດຕາ 2 : ລັດຖະດຳລັດ ສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.**

ວຽງຈັນ, ວັນທີ 31 ພຶດສະພາ 1997

ປະທານປະເທດ
ໜູຮັກ ພູມີສະຫວັນ

## ລັດຖະດຳລັດ
## ເລກທີ 36 ສປປ
## ກ່ຽວກັບການປະກາດ ໃຊ້ກົດໝາຍວ່າດ້ວຍບໍ່ແຮ່

- ອີງຕາມລັດຖະທຳມະນູນແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53 ຂໍ້ 1 ;
- ອີງຕາມມະຕິຕົກລົງຂອງກອງປະຊຸມເທື່ອທີ 10 ສະໄໝສາມັນຂອງສະພາແຫ່ງຊາດຊຸດທີ III ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍບໍ່ແຮ່ ສະບັບເລກທີ 04-97 / ສພຊ ລົງວັນທີ 12 ເມສາ 1997 ;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 17 / ຄປຈ, ລົງວັນທີ 7 ພຶດສະພາ 1997.

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1 : ປະກາດໃຊ້ກົດໝາຍວ່າດ້ວຍບໍ່ແຮ່.

ມາດຕາ 2 : ລັດຖະດຳລັດ ສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 31 ພຶດສະພາ 1997

ປະທານປະເທດ
ໜູຮັກ ພູມສະຫວັນ

---

## ລັດຖະດຳລັດ
## ເລກທີ 52 ສປປ
## ວ່າດ້ວຍການແຕ່ງຕັ້ງເຈົ້າແຂວງຜົ້ງສາລີ

- ອີງຕາມລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53, ຂໍ້ 4 ;
- ອີງຕາມການສະເໜີຂອງທ່ານນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ນຍ, ລົງວັນທີ 16/ 9 / 1997.

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :

ມາດຕາ 1 : ແຕ່ງຕັ້ງ ທ່ານ ຄຳໝັ້ນ ສູນວິເລີດ, ດຳລົງຕຳແໜ່ງເປັນເຈົ້າແຂວງ ແຂວງຜົ້ງສາລີ.

ມາດຕາ 2 : ທ່ານນາຍົກລັດຖະມົນຕີ, ບັນດາອົງການຈັດຕັ້ງທຸກຂັ້ນໃນທົ່ວປະເທດ ແລະ ທ່ານຜູ້ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຕາມລັດຖະດຳລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 3 : ລັດຖະດຳລັດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 19 ກັນຍາ 1997

ປະທານປະເທດ
ໜູຮັກ ພູມສະຫວັນ

---

## ລັດຖະດຳລັດ
## ເລກທີ 56 ສປປ
## ວ່າດ້ວຍການແຕ່ງຕັ້ງເອກອັກຄະລັດຖະທູດ ວິສາມັນຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວປະຈຳລາຊະອານາຈັກ ໄທ

- ອີງຕາມລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53, ຂໍ້ 12 .
- ອີງຕາມການສະເໜີຂໍແຕ່ງຕັ້ງຜູ້ຕາງໜ້າທີ່ມີອຳນາດເຕັມ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປປະຈຳຢູ່ຕ່າງປະເທດ ຂອງທ່ານນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 64/ນຍ ລົງວັນທີ 16 ກັນຍາ 1997.

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1 : ແຕ່ງຕັ້ງ ທ່ານ ທຽມ ພົມມະຈັນ ເປັນເອກອັກຄະລັດຖະທູດ ວິສາມັນ ຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຈຳ ລາຊະອານາຈັກໄທ.

ມາດຕາ 2 : ມອບໃຫ້ທ່ານນາຍົກລັດຖະມົນຕີ ຈັດຕັ້ງປະຕິບັດລັດຖະດຳລັດ ສະບັບນີ້ ນັບແຕ່ບັດນີ້ເປັນຕົ້ນໄປ.

ວຽງຈັນ, ວັນທີ 25 ຕຸລາ 1997

ປະທານປະເທດ
ໜູຮັກ ພູມສະຫວັນ

## ລັດຖະດຳລັດ
## ເລກທີ 57 ສປປ
## ວ່າດ້ວຍການແຕ່ງຕັ້ງ ເອກອັກຄະລັດຖະທູດ ວິສາມັນ ຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຈຳ ສະຫະລັດ ອາເມລິກາ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53, ຂໍ້ 12.

- ອີງຕາມການສະເໜີ ຂໍແຕ່ງຕັ້ງ ຜູ້ຕາງໜ້າທີ່ມີອຳນາດເຕັມ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄປປະຈຳຢູ່ຕ່າງປະເທດ ຂອງທ່ານ ນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບ ເລກທີ 64/ນຍ ລົງວັນທີ 16 ກັນຍາ 1997.

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ
ປະຊາຊົນລາວ ອອກລັດຖະ
ດຳລັດ:

ມາດຕາ 1 : ແຕ່ງຕັ້ງ ທ່ານ ຫວ່າງ ລັດຕະນະວົງ ເປັນເອກອັກຄະລັດຖະທູດ ວິສາມັນ ຜູ້ມີອຳນາດເຕັມ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະຈຳ ສະຫະລັດ ອາເມລິກາ.

ມາດຕາ 2 : ມອບໃຫ້ທ່ານນາຍົກລັດຖະມົນຕີ ຈັດຕັ້ງປະຕິບັດ ລັດຖະດຳລັດ ສະບັບນີ້ ນັບແຕ່ບັດນີ້ເປັນຕົ້ນໄປ.

ວຽງຈັນ, ວັນທີ່ 25 ຕຸລາ 1997

ປະທານປະເທດ
ຫນູຮັກ ພູມສະຫວັນ

---

## ລັດຖະດຳລັດ
## ເລກທີ 60 ສປປ
## ວ່າດ້ວຍການປະດັບຫລຽນໄຊມິດຕະພາບ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໝວດທີ V ມາດຕາ 53, ຂໍ້ 8;

- ອີງຕາມການສະເໜີຂອງທ່ານນາຍົກລັດຖະມົນຕີສະບັບເລກທີ 66/ນຍ ລົງວັນທີ 30 ຕຸລາ 1997.

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ
ປະຊາຊົນລາວ ອອກລັດຖະ
ດຳລັດ:

ມາດຕາ 1 : - ປະດັບຫລຽນໄຊມິດຕະພາບ ຂອງ ສປປ ລາວ ໃຫ້ທ່ານ Dato Ajit Singh ເລຂາທິການໃຫຍ່ອາຊຽນ 1ໜ່ວຍ ເພື່ອສະແດງຄວາມຊົມເຊີຍຜົນງານ ຂອງທ່ານ ທີ່ໄດ້ອຸທິດຕົນເພື່ອເສີມສ້າງ ແລະ ພັດທະນາອາຊຽນ ໃຫ້ມີຄວາມກ້າວໜ້າ ພ້ອມກັນນັ້ນ ທ່ານຍັງໃຫ້ການ ສະນັບສະໜູນ ແລະ ປະກອບສ່ວນອັນສຳຄັນໃນການລະດົມການຊ່ວຍເຫລືອ ເຮັດໃຫ້ການກະກຽມ ຂອງ ສປປ ລາວ, ເພື່ອເຂົ້າເປັນສະມາຊິກອາຊຽນໄດ້ຮັບຜົນສຳເລັດຢ່າງສະຫງ່າງາມ.

ມາດຕາ 2 : ມອບໃຫ້ທ່ານນາຍົກລັດຖະມົນຕີຂື້ນຳຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສົມກຽດ.

ມາດຕາ 3 : ລັດຖະດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 05 ພະຈິກ 1997

ປະທານປະເທດ
ຫນູຮັກ ພູມສະຫວັນ

---

## ລັດຖະດຳລັດ
## ເລກທີ 66 ສປປ
## ວ່າດ້ວຍການປະດັບຫລຽນໄຊມິດຕະພາບ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53 ຂໍ້ 8 ;

- ອີງໃສ່ຜົນງານ ແລະ ຄຸນງາມຄວາມດີ ຂອງທ່ານ ເຈີນຊວນຍີ ອາດີດຮອງລັດຖະມົນຕີກະຊວງສຶກສາ ຫວຽດນາມ ທີ່ມີຕໍ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
- ອີງຕາມການສະເໜີ ຂອງທ່ານນາຍົກລັດຖະມົນຕີ ສະບັບ ເລກທີ 76/ນຍ ລົງວັນທີ 13 ທັນວາ 1997.

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ
ປະຊາຊົນລາວ ອອກລັດຖະ
ດຳລັດ:

ມາດຕາ 1 : ປະດັບຫລຽນໄຊມິດຕະພາບ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃຫ້ແກ່ທ່ານ ເຈີນຊວນຍີ (Tran Xuan Nhi) ອາດີດຮອງລັດຖະມົນຕີກະຊວງສຶກສາ ສສ ຫວຽດນາມ.

ມາດຕາ 2 : ມອບໃຫ້ທ່ານນາຍົກລັດຖະມົນຕີ ຂື້ນຳຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສົມກຽດ.

ມາດຕາ 3 : ລັດຖະດຳລັດສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 16 ທັນວາ 1997

ປະທານປະເທດ
ຫນູຮັກ ພູມສະຫວັນ

ລັດຖະດຳລັດ
ເລກທີ 67 ສປປ
ວ່າດ້ວຍການຍ້ອງຍໍສັນລະເສີນ
ຜົນງານ 30 ປີ ແລະ 10 ປີ
ໃຫ້ບັນດາພະນັກງານກຳແພງນະ
ຄອນວຽງຈັນ ຊຸດທີ III

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53 ຂໍ້ 8 ;

- ອີງຕາມການສະເໜີ ຂອງທ່ານນາຍົກລັດຖະມົນຕີ ສະບັບ ເລກທີ 78/ນຍ ລົງວັນທີ 23 ທັນວາ 1997.

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

ມາດຕາ 1 ; ປະດັບຫລຽນໄຊປະເພດຕ່າງໆມີດັ່ງນີ້:
1 / ປະດັບຫລຽນໄຊອິດສະຫລະຊັ້ນ II, ຫລຽນໄຊປະຕິວັດຊະນະເລີດຊັ້ນ III ໃຫ້ທ່ານຄຳມີ.
2 / ປະດັບຫລຽນໄຊອິດສະຫລະຊັ້ນ III, ຫລຽນໄຊປະຕິວັດຊະນະເລີດຊັ້ນ III ໃຫ້ທ່ານແພງສີ ຄູນວົງສາ.
3 / ປະດັບຫລຽນໄຊປະຕິວັດຊະນະເລີດຊັ້ນ III ໃຫ້ທ່ານ ພູທອງ ພົມມະສອນ ແລະ ທ່ານນາງບຸນທັນ ພົມມະສອນ.
4 / ປະດັບຫລຽນໄຊແຮງງານຊັ້ນ III ໃຫ້ 19 ທ່ານ ( ຜົນງານ 10 ປີ )

ມາດຕາ 2 ; ມອບໃຫ້ທ່ານນາຍົກລັດຖະມົນຕີຊີ້ນຳຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ສົມກຽດ.

ມາດຕາ 3 : ລັດຖະດຳລັດສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 25 ທັນວາ 1997

ປະທານປະເທດ
ໜູຮັກ ພູມສະຫວັນ

---

ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ໂດຍອີງໃສ່ສິດອຳນາດ ທີ່ໄດ້ລະບຸໄວ້ ໃນມາດຕາ 53 ຂໍ້ 11 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຂ້າພະເຈົ້າ ໜູຮັກ ພູມສະຫວັນ

ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ຂໍປະກາດ

ມາດຕາ 1 : ໃຫ້ສັດຕະຍະບັນແກ່ສັນຍາ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະລັດຖະບານ ແຫ່ງ ຣາຊະອານາຈັກໄທ ເພື່ອຫລີກເວັ້ນ ການເກັບອາກອນຊໍ້າຊ້ອນ ແລະສະກັດກັ້ນ ການຫລົບຫລີກເສັຽອາກອນ ຈາກການເກັບອາກອນລາຍໄດ້ ເຊິ່ງລົງນາມ ໃນວັນທີ 20 ມິຖຸນາ 1997 ທີ່ນະຄອນຫລວງວຽງຈັນ

ມາດຕາ 2 : ບັນດາມາດຕາ ຢູ່ໃນເອກະສານນີ້ ຈະໄດ້ຮັບການເຄົາລົບນັບຖືຢ່າງຄົບຖ້ວນ.

ເພື່ອເປັນຫລັກຖານຢັ້ງຢືນ, ຂ້າພະເຈົ້າ ຈຶ່ງໄດ້ລົງນາມ ແລະປະທັບຕາໃນສານປະກາດ ໃຫ້ສັດຕະຍະບັນສະບັບນີ້.

ເຮັດທີ່ນະຄອນຫລວງວຽງຈັນ, ວັນທີ 15 ທັນວາ 1997

ໜູຮັກ ພູມສະຫວັນ

ເຊັນຮັບປະຕິບັດ

ສົມສະຫວາດ ເລັ່ງສະຫວັດ
ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ

<u>ສຳນັກງານນາຍົກລັດຖະມົນຕີ</u>

## ດຳລັດ
## ເລກທີ 166 /ນຍ
## ວ່າດ້ວຍ ການຈັດຕັ້ງຕາໜ່າງ, ການນຳເຂົ້າ, ການນຳໃຊ້ ແລະ ການຄຸ້ມຄອງ ລະບົບອິນເຕີແນັດ

- ອີງຕາມລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບ ລົງວັນທີ 14 ສິງຫາ 1991.
- ອີງຕາມກົດໝາຍວ່າດ້ວຍ ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບ ເລກທີ 01 / 95 ລົງວັນທີ 08 ມີນາ 1995.
- ອີງຕາມການສະເໜີ ຂອງ ລັດຖະມົນຕີວ່າການກະຊວງຄົມມະນາຄົມຂົນສົ່ງໄປສະນີ ແລະ ກໍ່ສ້າງ.

ນາຍົກລັດຖະມົນຕີອອກດຳລັດ:

### ຫມວດທີ I
### ບົດບັນຍັດທົ່ວໄປ

ມາດຕາ 1 : ດຳລັດສະບັບນີ້ກຳນົດ ລະບຽບການ ກ່ຽວກັບການຄຸ້ມຄອງ ລະບົບອິນເຕີແນັດ ແນໃສ່ເພື່ອເຮັດໃຫ້ການຈັດຕັ້ງຕາໜ່າງ, ການນຳເຂົ້າ ແລະ ການນຳໃຊ້ລະບົບອິນເຕີແນັດ ຢູ່ ສປປ ລາວ ຖືກຕ້ອງຕາມເປົ້າໝາຍ ແລະ ລະບຽບກົດໝາຍ, ເຮັດໃຫ້ການຕິດຕໍ່ພົວພັນແລກປ່ຽນ ຂໍ້ມູນ-ຂ່າວສານ ທັງຢູ່ພາຍໃນ ແລະ ກັບຕ່າງປະເທດ ມີປະສິດທິຜົນ ທັງເປັນການປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດສັງຄົມແຫ່ງຊາດ.

ມາດຕາ 2 : ອິນເຕີແນັດ ແມ່ນການນຳໃຊ້ເຄືອງຄອມພິວເຕີ ເຊື່ອມເຂົ້າກັບລະບົບສື່ສານຂໍ້ມູນ-ຂ່າວສານທີ່ວ່ອງໄວທັນສະໄໝ ໃນຂອບເຂດທົ່ວໂລກໂດຍບໍ່ຈຳແນກເຂດແດນ.

ມາດຕາ 3 : ລັດຖະບານ ເປັນຜູ້ອະນຸມັດ ໃຫ້ຈັດຕັ້ງລະບົບອິນເຕີແນັດແຕ່ຜູ້ດຽວ.

### ຫມວດທີ II
### ການຄຸ້ມຄອງລະບົບອິນເຕີແນັດ

ມາດຕາ 4 : ເພື່ອເຮັດໃຫ້ການຄຸ້ມຄອງລະບົບອິນເຕີແນັດ ມີປະສິດທິພາບ ຮັບປະກັນໃຫ້ແກ່ຄວາມສະຫງົບ, ຄວາມປອດໄພ ແລະ ຈຳກັດສິ່ງແຊກຊຶມທຳລາຍ ວັດທະນະທຳ-ສັງຄົມ ແລະ ເສດຖະກິດຂອງຊາດ ລັດຖະບານອະນຸຍາດໃຫ້ກະຊວງ ຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ ຈັດຕັ້ງສູນຄວບຄູມຕາໜ່າງ ເຊື່ອມຕໍ່ກັບລະບົບຕ່າງປະເທດ ແລະ ສູນຄວບຄູມ ການບໍລິການພາຍໃນປະເທດ ຢູ່ທີ່ນະຄອນຫລວງວຽງຈັນພຽງ ແຫ່ງດຽວ ໃນ ສປປ ລາວ.

ມາດຕາ 5 : ກະຊວງ ຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ ເປັນຜູ້ປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງຄົ້ນຄ້ວາ ແລະ ສະເໜີ ກ່ຽວກັບການອະນຸຍາດຈັດຕັ້ງຕາໜ່າງ, ການນຳເຂົ້າ, ການນຳໃຊ້ເຄື່ອງອຸປະກອນ, ການຄຸ້ມຄອງລະບົບສື່ສານ ແລະ ວິຊາການດ້ານ ອິນເຕີແນັດ.

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ມີໜ້າທີ່ອະນຸຍາດເນື້ອໃນ ລາຍການຂໍ້ມູນ-ຂ່າວສານໃຫ້ແກ່ຜູ້ຈັບຈອງ ພ້ອມທັງຄວບຄຸມເນື້ອໃນຂໍ້ມູນ-ຂ່າວສານ ທີ່ແລກປ່ຽນຜ່ານລະບົບອິນເຕີແນັດ.

ອົງການ ວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີໜ້າທີ່ຄົ້ນຄ້ວາຄຸ້ມຄອງ ແລະ ອະນຸຍາດເຄື່ອງ ແລະ ເຄືອຂ່າຍຄອມພິວເຕີ ທີ່ຈະເຊື່ອມເຂົ້າ ໃນລະບົບອິນເຕີແນັດ ແລະ ຂໍ້ມູນ-ຂ່າວສານ ທາງດ້ານວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ.

ກະຊວງພາຍໃນ ມີໜ້າທີ່ປະສານສົມທົບກັບບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງນຳໃຊ້ມາດຕະການ, ວິທີການ ແລະ ເຕັກນິກໃນການຄຸ້ມຄອງ ແລະ ກວດກາເນື້ອໃນຂໍ້ມູນ-ຂ່າວສານ ທີ່ສົ່ງຜ່ານຕາໜ່າງອິນເຕີແນັດ ເພື່ອຮັບປະກັນຄວາມສະຫງົບ ແລະ ຄວາມປອດໄພ ແຫ່ງຊາດ.

ມາດຕາ 6 : ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດການບໍລິການ ຫລື ການລົງທຶນດ້ານອິນເຕີແນັດ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍທຸລະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ, ກົດໝາຍວ່າດ້ວຍການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນຂອງຕ່າງປະເທດ ຢູ່ ສປປ ລາວ, ກົດໝາຍ ແລະ ລະບຽບການອື່ນໆ.

ມາດຕາ 7 : ນິຕິບຸກຄົນ ຫລື ການຈັດຕັ້ງຕາມທີ່ໄດ້ບົ່ງໄວ້ໃນມາດຕາ 6 ເທິງນີ້ ຕ້ອງຈັດຕັ້ງສູນຄວບຄູມການບໍລິການດ້ວຍລະບົບເຕັກນິກ ທີ່ສາມາດຈຳກັດຂໍ້ມູນ-ຂ່າວສານ ທີ່ຂັດຕໍ່ແນວທາງນະໂຍບາຍ, ລະບຽບກົດໝາຍ, ວັດທະນະທຳ-ສັງຄົມ, ເສດຖະກິດ ທັງຕ້ອງປະຕິບັດຕາມຂໍ້ກຳນົດ ແລະ ລະບຽບການກ່ຽວກັບການຄຸ້ມຄອງລະບົບ ອິນເຕີແນັດ ຢ່າງເຂັ້ມງວດ.

ມາດຕາ 8 : ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ມີຈຸດປະສົງ ນຳໃຊ້ລະບົບ ອິນເຕີແນັດ ຕ້ອງຂໍອະນຸຍາດ ກ່ຽວກັບເນື້ອໃນຂໍ້ມູນ-ຂ່າວສານ ນຳກະຊວງ ຖະແຫລງຂ່າວ-ວັດທະນະທຳ ເສຍກ່ອນ ສ່ວນເຄື່ອງ ແລະ ເຄືອຂ່າຍຄອມພິວເຕີ ທີ່ຈະນຳເຂົ້າມາຕິດຕັ້ງເຂົ້າລະບົບ ອິນເຕີແນັດ ຕ້ອງໄດ້ຂໍອະນຸຍາດ ຈາກອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ພາຍຫລັງທີ່ໄດ້ຮັບອະນຸຍາດການນຳໃຊ້ ຈາກກະຊວງ ແລະ ອົງການດັ່ງກ່າວນີ້ແລ້ວ, ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງນັ້ນ ຈຶ່ງມາຂໍອະນຸຍາດຈັບຈອງ ເລກໝາຍ ແລະ ຂຶ້ນທະບຽນນຳໃຊ້ລະບົບ ອິນເຕີແນັດ ນຳກະຊວງ ຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ.

### ຫມວດທີ III
### ສິດ ແລະ ພັນທະຂອງຜູ້ນຳໃຊ້ ອິນເຕີແນັດ.

ມາດຕາ 9 : ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດ ແລະ ຂຶ້ນທະບຽນນຳໃຊ້ລະບົບອິນເຕີແນັດແລ້ວ ມີສິດໄດ້ຮັບການສະໜອງ ແລະ ການສົ່ງຂໍ້ມູນ-ຂ່າວສານ ເພື່ອຜົນປະໂຫຍດແກ່ກິດຈະການ ຫລື ທຸລະກິດຂອງຕົນ ໂດຍຜ່ານສູນບໍລິການອິນເຕີແນັດ ຕາມທີ່ໄດ້ຮັບອະນຸຍາດຈາກກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ.

ມາດຕາ 10 : ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດນຳໃຊ້ລະບົບ ອິນເຕີແນັດ ມີພັນທະປະຕິບັດຕາມລະບຽບກົດໝາຍ ຂອງ ສປປ ລາວ ແລະ ລະບຽບການກ່ຽວກັບການຄຸ້ມຄອງລະບົບ ອິນເຕີ

ແນັດ ຢ່າງເຂັ້ມງວດ.

### ຫມວດທີ IV
### ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 11 : ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ນັບທັງຜູ້ທີ່ຈັດຕັ້ງຕາໜ່າງ ເພື່ອບໍລິການ ແລະ ຜູ້ທີ່ນຳໃຊ້ລະບົບ ອິນເຕີແນັດ ຫາກໄດ້ດຳເນີນການບໍລິການ ຫລື ການນຳໃຊ້ຢ່າງມີຄຸນນະພາບ ເປັນປະໂຫຍດແກ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍສອດຄ່ອງ ຕາມລະບຽບກົດໝາຍ, ຂໍ້ກຳນົດ ຫລື ລະບຽບການ ຂອງອົງການຈັດຕັ້ງລັດ ທີ່ກ່ຽວຂ້ອງວາງອອກ ຈະໄດ້ຮັບການຍ້ອງຍໍ, ໄດ້ຮັບອະນຸຍາດ ໃຫ້ຂະຫຍາຍຕາໜ່າງການບໍລິການ ຫລື ໄດ້ຮັບອະນຸຍາດຕໍ່ທະບຽນ ຜູ້ນຳໃຊ້ລະບົບ ອິນເຕີແນັດອີກ ຫລັງຈາກໝົດກຳນົດອະນຸຍາດແລ້ວ.

ມາດຕາ 12 : ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງໃດລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ປັບໃໝ, ຖືກງົດການດຳເນີນກິດຈະການ, ຖືກຖອນໃບອະນຸຍາດ ຫລື ຖືກດຳເນີນຄະດີຕາມລະບຽບກົດໝາຍ.

### ຫມວດທີV
### ບົດບັນຍັດສຸດທ້າຍ

ມາດຕາ 13 : ກະຊວງ ຄົມມະນາຄົມ ຂົນສົ່ງໄປສະນີ ແລະ ກໍ່ສ້າງ, ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ, ກະຊວງພາຍໃນ ແລະ ອົງການວິທະຍາສາດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ມີໜ້າທີ່ປະສານສົມທົບຈັດຕັ້ງປະຕິບັດດຳລັດ ສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 14 : ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຂໍ້ກຳນົດ ຫລື ລະບຽບການ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ 28 ພະຈິກ 1997

ນາຍົກລັດຖະມົນຕີ
ຄຳໄຕ ສີພັນດອນ

ພິວພັນກະຊວງຍຸຕິທຳ,
ກົມໂຄສະນາເຜີຍແຜ່ກົດຫມາຍ
ຕູ້ ປ.ນ. 08, ໂທລ. 413567-8
ນະຄອນວຽງຈັນ ສປປ ລາວ
ພາສາລາວພິມຈຳນວນ 2000 ສະບັບ
ລາຄາສະບັບລະ 2000 ກີບ

ພິມອອກ ໃນວັນທີ 25 ຂອງແຕ່ລະ 2 ເດືອນ

ຈອງ 1 ປີ :

- ສປປ ລາວ 12.000 ກີບ

ຈັດພິມໂດຍ ກະຊວງຍຸຕິທຳ
ນະຄອນວຽງຈັນ ສປປ ລາວ
ຂຶ້ນທະບຽນເລກທີ 517/ພ.ຈ.ທນ.ປ
ລົງວັນທີ 26 ມີນາ 1993.

**Printed in Vientiane Lao PDR**
**by the Ministry of Justice**
Registration No.517/EP, dated
March 26, 1993.
**Price of a copy: US$5**

**Imprimé au ministère de la**
**Justice à Vientiane, RDP Lao**
Enregistré, le 26 mars 1993
sous le N°517/EP.
**Prix du numéro : 5 $US**

ຈົດຫມາຍເຫດທາງລັດຖະການ
ມີສະບັບແປເປັນ ພາສາຝຣັ່ງເສດ ແລະອັງກິດ
ພິມຈຳນວນ : 500 ສະບັບ